# ຊຽງໝ້ຽງ



ເຫຼັ້ມ 1

# ນິທານ ຄຳກອນ

# ຊຽງໝ້ຽງ

ຮິບໂຮມ ຮຽບຮຽງໂດຍ: ພ. ພວງສະບາ

ພິມເທື່ອທີ່ໜຶ່ງ

ສຳນັກພິມ ແລະຈຳໜ່າຍປຶ້ມ ສ.ປ.ປ.ລ

ວຽງຈັນ 1989

ຜູ້ອະນຸມັດພິມ: ສີຫາ ເພັງແພງເມືອງ

ຄະນະບັນນາທິການ: ສີວຽງແຂກ ກອນນີວົງ

ຄຳພໍ່ ພວງສະບາ

ອຸທິນ ບຸນຍາວົງ

ລທ : 033 /ກພຈ 9.5.1989

ລອພ: 043 /ກພຈ 11.5.1989

ພິມທີ່ໂຮງພິມແຫ່ງລັດ ຈຳນວນພິມ 10.000 ຫົວ

ພິມແລ້ວວັນທີ 30.5.1989

ສະຫງວນລິຂະສິດ

# ຄຳນຳ

ສຳນັກພິມ ແລະ ຈຳໜ່າຍປຶ້ມ ສ.ປ.ປ.ລາວ ຈັດພິມ ນິທານຊຽງໝ້ຽງນີ້ ອອກເຜີຍແຜ່ເປັນຄັ້ງທຳອິດ ໂດຍມີຈຸດປະສົງຢາກປົກປັກຮັກສາ ວັນນະຄະດີພື້ນເມືອງ ອັນລ້ຳຄ່ານີ້ໄວ້ ແລະເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງທ່ານຜູ້ອ່ານທັງຫລາຍ ທີ່ຢາກອ່ານ ຢາກສຶກສາຄົ້ນຄວ້າວັນນະຄະດີເກົ່າແກ່ ອັນເປັນມູນມໍ ລະດົກຂອງບັນພະບຸລຸດ ທີ່ໄດ້ສ້າງສັນໄວ້ແຕ່ບູຮານນະການ.

ນິທານຊຽງໝ້ຽງ ເປັນເລື່ອງຕະຫລົກສຽດສີ, ມີລັກສະນະ ຕໍ່ສູ້ຊົນຊັ້ນ ຊຶ່ງປະຊາຊົນລາວເລົ່າສືບຕໍ່ກັນມາແຕ່ສະໄໝບູຮານ ຈົນເຖິງປະຈຸບັນນີ້, ເລົ່າກັນແຕ່ເໜືອຈົນຮອດໃຕ້, ເລົ່າກັນໄດ້ທຸກກາລະໂອກາດ. ການເລົ່າໃຫ້ມ່ວນ ແລະ ເນື້ອໃນຂອງແຕ່ລະຕອນຈະຮັບໃຊ້ຜົນປະໂຫຍດອັນໃດນັ້ນ ແມ່ນຂຶ້ນກັບຜູ້ເລົ່າເປັນຕົ້ນຕໍ. ດັ່ງນີ້ ໃນການເລົ່ານັ້ນ ມີບາງຕອນຊຽງໝ້ຽງ ກໍ່ເປັນຕົວລະຄອນ ທີ່ສະຫລາດສະຫລຽວ, ມີໄຫວພິບ, ບາງຕອນກໍ່ເປັນຄົນໂງ່ທີ່ເຮັດ ແນວທີ່ບໍ່ສົມຄວນເຮັດ.

ໄລຍະຜ່ານມາ ເຄີຍມີຮິບໂຮມນິທານຊຽງໝ້ຽງ ແລະພິມເຜີຍແຜ່ເປັນຄຳກອນ ມາແລ້ວປະມານສາມຄົນດ້ວຍກັນ. ການຮິບ ໂຮມເປັນຫລັ້ມຄັ້ງນີ້ ສຳນັກພິມພວກເຮົາໄດ້ຄົ້ນຄວ້າຕາມເອກະ ສານເກົ່າແລະຕາມການເລົ່າປາກເປົ່າຈາກຫລາຍແຫລ່ງດ້ວຍກັນ.ພິເສດກໍ່ຄືພວກເຮົາໄດ້ຮັບກຽດຈາກທ່ານພູມີ ວົງວິຈິດ ໂດຍທ່ານໄດ້ ຊ່ວຍປັບປຸງວິທີຂຽນຄຳກອນແລະເພີ່ມເຕີມໃຫ້ສົມບູນຍິ່ງຂຶ້ນ. ດັ່ງນີ້ຈຶ່ງຖື

ໄດ້ອ່ານນິທານຊຽງໝ້ຽງ ສະບັບນີ້ເປັນສະບັບທີ່ມີເນື້ອໃນຮັບ ປະກັນ ແລະ ເປັນຄຳກອນທີ່ມີຄຸນນະພາບສູງ. ພວກເຮົາຂໍສະແດງ ຄວາມຂອບໃຈເປັນຢ່າງສູງຕໍ່ທ່ານ ພູມີ ວົງວິຈິດ ໄວ້ໃນໂອກາດນີ້ດ້ວຍ.

ສຳນັກພິມພວກເຮົາ ໄດ້ມອບໝາຍໃຫ້ ພ.ພວງສະບາ ເປັນຜູ້ດຳເນີນການຮິບໂຮມ ເລືອກເຟັ້ນ ແລະ ຮຽບຮຽງຈົນສຳເລັດເປັນຫລັ້ມອອກມາ ໂດຍໄດ້ຈັດແບ່ງອອກເປັນ 26 ຕອນ, ໄດ້ແຍກໝຸບພະບົດ ແລະ ບົດສ້ອຍທ້າຍຂອງຄຳກອນໃຫ້ ເປັນລະບຽບ, ພ້ອມທັງໄດ້ແກ້ໄຂບາງຄຳສັບ, ບາງສຳນວນໃຫ້ເໝາະສົມ ແລະ ເຂົ້າໃຈງ່າຍ. ດັ່ງນັ້ນຈຶ່ງເຊື່ອວ່າ ນິທານຄຳກອນຫລັ້ມນີ້ ຈະເປັນປະໂຫຍດ ແລະ ນຳຄວາມມ່ວນຊື່ນມາສູ່ທ່ານຜູ້ອ່ານຢ່າງແນ່ນອນ.

ພວກເຮົາຫວັງຢ່າງຍິ່ງວ່າ ຈະໄດ້ຮັບຄວາມຮ່ວມມືຈາກ ທ່ານຜູ້ອ່ານເປັນຢ່າງດີ ໂດຍເກັບກຳ ແລະ ສົ່ງເລື່ອງຊຽງໝ້ຽງ ທີ່ເລົ່າກັນຢູ່ຕາມທ້ອງຖິ່ນຕ່າງໆ ໄປປະກອບສ່ວນ ເພື່ອເຮັດໃຫ້ການພິມ ຄັ້ງຕໍ່ໄປສົມບູນຍິ່ງຂຶ້ນ.

ວັນທີ ------- 1989

ສຳນັກພິມ ແລະ ຈຳໜ່າຍປຶ້ມ ສ.ປ.ປ.ລ

# ຜູ້ຮິບໂຮມ

ໜັງສືນິທານຄຳກອນຊຽງຫມ້ຽງນີ້ ນັບວ່າເປັນນິທານພື້ນເມືອງທີ່ຄົນລາວເຮົານິຍົມຊົມຊອບຫລາຍທີ່ສຸດ, ສາມາດເວົ້າໄດ້ວ່ານິທານຊຽງຫມ້ຽງນີ້ ຄົນລາວທຸກຄົນຮູ້ເກືອບຫມົດ ແຕ່ວ່າຮູ້ກັນຄົນລະວັກລະຕອນ. ທັງນີ້ ຍ້ອນວ່ານິທານຊຽງຫມ້ຽງນັ້ນມີຫລາຍວັກຫລາຍ ຕອນແລ້ວແຕ່ໃຜຈະຈື່ຈຳໄດ້ຂອງໃຜຂອງມັນ ແລະ ກໍ່ເປັນນິທານ ທີ່ຄົນລາວເຮົາຈື່ຈຳໄດ້ງ່າຍ ເພາະມັນມີເນື້ອໃນແບບແກ້ເຜັດແກ້ຮ້ອນກັນແລະ ທັງເບົາສະຫມອງ ຮຽກສຽງຫົວເຮຮາ ແລະ ຮອຍຍິ້ມຈາກຜູ້ຟັງໄດ້ທຸກເວລາ, ຢູ່ໃນວົງສົນທະນາຕ່າງໆ ຖ້າຜູ້ໃດໃຊ້ເລ່ ລ່ຽມພິບໄຫວ ຫລືເວົ້າແບບຕົດບົດຫມູ່ໄດ້ດີ ພວກເຮົາມັກຈະເວົ້າກັນວ່າ" ຢ່າໃຊ້ແບບວິທີຊຽງຫມ້ຽງແນ " ອັນນີ້ກໍ່ຫມາຍຄວາມວ່າພິບໄຫວສະຕິປັນຍາຂອງຊຽງຫມ້ຽງ ບໍ່ມີເວລາໃດຫລ້າສະໄຫມໄປຈາກວົງ ສົນທະນາຂອງມະຫາຊົນຄົນລາວເຮົາ.

ນິທານຊຽງຫມ້ຽງ ນອກຈາກໃຫ້ຄວາມເບີກບານຫລືແກ້ເຜັດແກ້ຮ້ອນດັ່ງກ່າວແລ້ວ ນິທານຊຽງຫມ້ຽງຍັງໄດ້ສະແດງໃຫ້ເຫັນເຖິງຮູບການຕໍ່ສູ້ຊົນຊັ້ນທາງດ້ານແນວຄິດຢ່າງຈະແຈ້ງ, ຄືລະຫວ່າງ ຊຽງຫມ້ຽງກັບພະຍາ ຕະຫລອດທັງຫ້ອງເລື່ອງເຮົາຈະຮູ້ໄດ້ວ່າ ເວລາໃດຊຽງຫມ້ຽງກໍ່ເອົາຊະນະພະຍາຈົນໄດ້.

ການຮິບໂຮມນິທານຄຳກອນຊຽງຫມ້ຽງເທື່ອນີ້ ຂ້າພະເຈົ້າ ໄດ້ແກ້ໄຂຫລາຍບ່ອນເຊັ່ນ ຈັດແບ່ງອອກເປັນຕອນ ແຕ່ຕອນທີ 1 ເຖິງຕອນທີ 26 ເພື່ອສະດວກແກ່ຜູ້ອ່ານ, ຂ້າພະເຈົ້າໄດ້ປະເປັນ ບາງຕອນທີ່ເຫັນວ່າມັນບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງ ຄົມ.

ພ້ອມກັນນີ້ ຂ້າພະເຈົ້າກໍ່ໄດ້ ຈັດແຍກບຸບພະບົດ ແລະສ້ອຍທ້າຍຂອງຄຳກອນໃຫ້ເປັນລະບຽບ ຕະຫລອດເຖິງເນື້ອຄວາມບາງ ຄຳທີ່ເຫັນວ່າ ບໍ່ຄັກບໍ່ແນ່ກໍ່ໄດ້ດັດແປງແກ້ໄຂ, ນອກຈາກນີ້ ຂ້າພະ ເຈົ້າຍັງໄດ້ແຕ່ງເພີ່ມເປັນບາງຕອນ ເຊິ່ງບໍ່ມີໃນຕົ້ນສະບັບເດີມເຊັ່ນຕອນ " ຊຽງໝ້ຽງຕີວະພະຍາລົງໜອງ".

ແຕ່ເພື່ອຄວາມແນ່ໃຈອີກເທື່ອໜຶ່ງ ຄະນະບັນນາທິການໃຫຍ່ໄດ້ນຳສະເໜີຜ່ານທ່ານ ພູມີ ວົງວິຈິດ ຕື່ມອີກ. ແນວໃດກໍ່ຕາມ ການຮິບໂຮມເທື່ອນີ້ ຂ້າພະເຈົ້າຂໍຮັບວ່າ ຍັງມີຢູ່ອີກຫລາຍໆຕອນ ທີ່ຍັງບໍ່ທັນໄດ້ຮິບໂຮມມາພິມ ຍ້ອນນິທານຊຽງໝ້ຽງມັນກວ້າງຂວາງ ດັ່ງກ່າວແລ້ວນັ້ນ; ການຮິບໂຮມເທື່ອນີ້ ຈຶ່ງບໍ່ແມ່ນສະບັບສົມບູນແຕ່ຢ່າງໃດ ເປັນແຕ່ພຽງສ່ວນໜຶ່ງນ້ອຍໆເທົ່ານັ້ນ. ການຮິບໂຮມຂອງ ຂ້າພະເຈົ້າເທື່ອນີ້ ຂໍຮັບຮອງວ່າ ຍັງມີຫລາຍອັນຂາດຕົກບົກພ່ອງ ແຕ່ຫວັງວ່າຈະໄດ້ຮັບອະໄພຈາກທ່ານຜູ້ອ່ານ ແລະ ຫວັງວ່າທ່ານຜູ້ອ່ານທີ່ຮູ້ຕອນອື່ນຈະກະລຸນາຈົດເອົາຕອນອື່ນທີ່ພວກທ່ານຮູ້ ແຕ່ບໍ່ມີຢູ່ໃນປຶ້ມຫົວນີ້ ສົ່ງໄປຊ່ວຍຂ້າພະເຈົ້າຈັດຮຽບຮຽງພິມເປັນປຶ້ມຫລັ້ມໃໝ່ .

ວຽງຈັນ, ວັນທີ 18 ມັງກອນ 1987

ດ້ວຍຄວາມຮັກແພງ

ພ. ພວງສະບາ.

# 1– ພະຍາຂໍທ້າວຄຳມາເບັນລູກ

+ ຍັງມີເມືອງໃຫຍ່ກວ້າງ ຮຽກຊື່ທະວາລາວະດີ
ໃນນະຄອນຄົນ ຂ່າວຂານເຂົາຍ້ອງ
ຕາມແຕ່ ກຳລັງໄດ້ ສາມແສນແປດໝື່ນ
ສັດສິງ ທັງປ່າໄມ້ ເຫລືອລົ້ນອະເນກນອງ
+ ມີໝູ່ ຕາວຕານພ້າວ ລຽນກັນຍືນໄຂ່ວ
ພືດຊະຝູງໝາກໄມ້ ຫວານສົ້ມມາກມູນ
+ ມີທັງຄັນລະລົດລົ້ນ ແຖວຖີ່ຕາມທາງ
ມີທັງຜູຜາງສຸກ ເວີ່ນາວແກມກ້ຽງ
ມີທັງເຟືອງໄຟຄົ້ ກຸຫະລິ້ອອຍແອບ
ລຽນລຽບຖ້ານ ແຖວຮົ້ວເຮືອສວນ
+ ຖັດນັ້ນ ມີແມ່ນ້ຳ ໄຫລຜ່ານພາລາ
ຍູ່ຫ່າງ ຫວາຍສະເພົາເຂົາ ຄູ່ເມືອງມາຄ້າ
ກຳແພງສູງຕັ້ງ ປະຕູຂົງພຽງເມກ
ຫໍຮົບ ລຽນລຽບຕ້າຍ ລະວັງໄວ້ຊູ່ພາຍ
+ ມີທັງວັດໃຫຍ່ຕັ້ງ ພະທາດກໍ່ເຈດີ
ສູງສົ່ງພຽນປະດັບ ເຮືອຄຳແກມແກ້ວ
ຕັ້ງທາກຮົງໆເຫລື້ອມ ເຈດີຫລາຍຍອດ
ສະຫນຸກຍິ່ງລ້ຳ ສະຫວັນຟ້າດັ່ງດຽວ
+ ເມືອງຫລວງນີ້ ໃຫຍ່ກວ້າງ ເຖິງຂະຫນາດພັນວາ

ຍູທ່າງເນນທັງສິງ    ສູດຣຽມປະສິງສ້າງ
ຫລຽວເບິ່ງທີ່ຄຳຕັ້ງ    ກາງເມືອງດູອາດ
ໂຮງທ່ານທ້າວ    ພັນຫ້ອງໝື່ນເສົາ
+ ຍອດຊໍ່ຟ້າ    ຊ້ອງຊໍ່ຫລາຍຖັນ
ເຄືອລາຍສັບ    ຊູ່ພາຍງາມລ້ອນ
ມີທັງ ປວງນາງລົ້ມ    ນັກສະໜົມຫລາຍໝື່ນ
ນາງໜຸ່ມເໜົ້າ    ເທວີແກ້ວສີ່ພັນ
+ ເຂົາກໍທຽມແທບທ້າວ    ຕີນໃຕ່ພະຍາເມືອງ
ບໍ່ໄດ້ ໄລລາລະ    ຈາກພະອົງພໍ່ມີ້
ເຈົ້າຄຳ ບົວລະບັດທ້າວ    ບໍ່ເຄືອງສົງຈັກສິ່ງ
ສຽງເສຍພະແກ່ນໄທ້    ມັນພົ້ນຮອດພົມ ແທ້ແລ້ວ
+ ເຈົ້າກໍບໍ່ຍ່ອນຍ້ານ    ເມືອງອື່ນມາປະຈົນ ແທ້ດາຍ
ຍູທ່າງ ອິນສິນທານ    ແຕ່ງບຸນປະສິງສ້າງ
ຄັນວ່າ ເຫິງນານໄດ້    ຫລາຍປີຂ້ານລ່ວງ ໄປພົ້ນ
ຜູ້ຊື່ ນາງເອກເຄົ້າ    ເທວີແກ້ວລວດມານ
+ ນາງກໍທົງຄັບໄດ້    ທົນຢູ່ສິບເອັດເດືອນ
ເລີຍເກີດມາ ເປັນຊາຍ    ຮູບງາມລະວົມຍ້ອຍ
ເຂົາຈຶ່ງຫາ ນາມນ້ອຍ    ກຸມມານບຸດຕະລາດ
ຕາມເຜົ່າເຊື້ອ    ພົງສາຊັ້ນເພົ່ງແນວ
+ ເພື່ອວ່າເຈົ້າ ທາກທິດສະລາດແທ້ ທົງແທ່ນສະເຫວີຍເມືອງ
ບໍ່ໄດ້ ມີໃຈບຽມ    ບຽດໃຜ ຂືນຂໍ້
ພໍ່ຈຶ່ງ ທັນມາພ້ອມ    ຮູຮາທຸກໝູ່

ເຂົາຈຶ່ງ ປົບແລ່ນຟ້າວ     ໂດຍເຈົ້າຮີບມາ
+ ເຂົາຈຶ່ງກົ້ມຂາບໄຫວ້     ທົດສະລາດພະຍາເມືອງ
ພະກໍປົງວາຈາ     ບອກຄວາມຈິງແຈ້ງ
ບັດນີ້ ສູຈຶ່ງເອົາກັນຕັ້ງ     ດູຊາຕາບຸດຕະລາດ ເຮົາຖ້ອນ
ຕາມແຕ່ດູສິ່ງໃຕ້     ຮຽນຮູ້ຮີບທວາຍ ທ່ານເຮີຍ
+ ອັນວ່າບຸດຕານ້ອຍ     ຜູ້ທີ່ເກີດກຳມາ ເທື່ອນີ້
ຍັງຈັກເປັນຄົນດີ     ສືບພະອົງແທນເຊື້ອ ບໍ່ເດ
ແຕ່ນັ້ນ ເຂົາກໍເອົາກັນພ້ອມ     ດູເກນນັກຂັດຕະລຶກ
ຕາມເສດເຄົ້າ     ບູຮານຕ້ານສິ່ງສອນ
+ ຫມໍກໍ່ບາຍ ສີ້ຕອງ     ຂຽນທີ່ກະດານຫີນ
ຕັ້ງເລກລົງ ລຽນແຖວ     ໃສ່ກະດານເຕັມແປ້ນ
ຄັນວ່າ ຫມົດຊຸມແລ້ວ     ຈຶ່ງພາກັນຖະແຫລງອ່ານ
ເລັ່ງເບິ່ງ ດວງລຶກຫາວ     ຕາມພົ້ນເລກວິຊາ
+ ນັບເບິ່ງນີ້     ວັນເກີດປີເດືອນ
ແລ້ວຈຶ່ງ ທູນວາຈາ     ແກ່ພະຍາເປັນເຈົ້າ
ຜີຈັກຕາມກົງແກ້ວ     ຍຸກະເສີມສະຫນຸກຍິ່ງ
ທໍ່ວ່າລ້ຽງຍາກແທ້     ເຫລືອລົ້ນລື່ນປະມານ ແທ້ແລ້ວ
+ ເພາະວ່າຍາມເກີດນັ້ນ     ຕາມເລກອຸດທັງ
ບອກວ່າ ສິບສອງປີ     ຊິເກີດໂລຄາຮ້າຍ
ຈະຕ້ອງເສຍເວີນເຂົ້າ     ປົວເອົານັບຕັ້ງຫມື່ນ
ແຕ່ວ່າ ພາຍຫນ້າພຸ້ນ     ຊິຄູນຄ້ຳໂຊກດີ ທ່ານເຮີຍ
+ ເພິ່ງທີ່ ຫາອ່ອນນ້ອຍ     ມາລ້ຽງພ່ຳກັນ ຊອບແລ້ວ

ເປັນຄູ່ຄຽງ ກັນສະຖິດ ພໍ່ພາກັນຫລິ້ນ
ເພາະວ່າ ຕາມກົງຊາຕາຕັ້ງ ຫານຄູນໄວ້ເສດສີ່
ອາຍຸ ສິບສີ່ປີຊິໄດ້ ສະເຫວີຍສ້າງສືບເມືອງວ່ານາ
+ ແລ້ວຈັກດີຕະຫລອດເລື້ອຍ ສະຖຽນຢູ່ສູ່ຂະເສີມ ແທ້ແລ້ວ
ເຈົ້າຈັກຄອງເມືອງສຸກ ຢູ່ສະບາຍເລົ້ງເລື້ອຍ
ມານະຄອນຄູນສ້າງ ກະເສມງາມເຮືອງຮຸ່ງ
ຝູງປະຊາ ລາດລ້ອນ ສະຖຽນໝັ້ນຊື່ນບານ ແທ້ແລ້ວ
+ ເມື່ອນັ້ນ ພູບເດທ້າວ ຄອງລາດພະຍາເມືອງ
ເຈົ້າກໍຟັງຄວາມໝໍ ກ່າວວາຈາຕ້ານ
ພະຈີ່ງ ຈໍາຕີ້ຄອງ ຕະໂຄນໄປ້ຮ້ອງປ່າວ
ໃຫ້ປະຊາ ລາດຮູ້ ເຖິງເຫົ້າທ້ອນນະຄອນ
+ ໃຜຫາກມີລູກນ້ອຍ ເກີດຮ່ວມວັນດຽວ ກັນນັ້ນ
ໃຫ້ພະລາຊາຂໍ ຮັບເອົາມາລ້ຽງ
ເປັນຄູ່ ຄຽງອົງເຈົ້າ ບຸດຕານ້ອຍອ່ອນ
ຫລອນວ່າ ບູນສີ່ງຢູ້ ຊິຈູງໃຫ້ໃຫ່ຍສູງ ບໍ່ຮູ້
+ ຄັນວ່າ ທ້າວຫາກໄດ້ ສະເຫວີຍລາດຄອງເມືອງ
ຈັກໄດ້ພາພົນຫລວງ ຢູ່ສະບາຍບານລົ້ນ
ເຮັດໃຫ້ ຄົນທັງຄ້າຍ ສະບາຍໃຈຊ້ອຍຊື່ນ
ຮື່ນໆພົນໄພ້ຟ້າ ຊິໂຮມສ້າງແຕ່ງເມືອງ
ທ່ານເຮີຍ
+ ແຕ່ນັ້ນ ຍັງມີພວກເຜົ່າເຊື້ອ ສະກຸນຊາດຊາວເມືອງ
ມັນກໍມີ ກຸມມານ ປະສູດໃນວັນນັ້ນ

ຊື່ວ່າ ອຸດທັງລາຊາແທ້ ວັນດີອຸດຕະມະໂຊກ
ເຂົາກໍວາງ ລູກນ້ອຍ ຖວາຍເຈົ້າບໍ່ຂືນ ·
+ ໃຫ້ເອົາເນື້ອ ພຽນພ່ຳລ້ຽງ ນານໜໍ່ອົງກະສັດ
ຫລອນວ່າບຸນບາມີ ໃຫ່ຍສູງສອນໜ້າ
ແຕ່ນັ້ນ ຝູງຄົນໃຊ້ ນຳເນື້ອຖວາຍລາດ
ພະບາດທ້າວ ເຫັນແລ້ວຊື່ນຊົມ
+ ເພື່ອວ່າ ໄດ້ລູກນ້ອຍ ນານໜໍ່ສອງຊາຍ
ຄິດວ່າ ບຸນບາຫລາຍ ກໍຈຶ່ງມີອັນຄ້ຳ
ອັນວ່າລາຊາທ້າວ ພະຍາເມືອງຕົນພໍ່
ເຈົ້າກໍຮັກລູກນ້ອຍ ສອງທ້າວເກືອງກັນ ແທ້ແລ້ວ
+ ແຕ່ນັ້ນ ພະກໍມີອາດໃຫ້ ຫາແມ່ນາງນົມ
ສົມຄວນຄື ປົ້ນປົວບາທ້າວ
ວົງນຄຳແກ້ວ ປົງປະທານບໍ່ໄດ້ຍາກ
ບອກໃຫ້ ລ້ຽງອ່ອນນ້ອຍ ສອງເຈົ້າໃຫ້ສູງ ນັ້ນເນີ
+ ແຕ່ນັ້ນຍັງມີ ເສນານ້ອຍ ເປັນຂຸນຖານຕ່ຳ
ເນຍມັນອອກລູກນ້ອຍ ຜິວແກ້ວປົ້ນປົວ
+ ເນຍກໍມີວນອນແທ້ ເຕັງເສຍລູກອ່ອນ
ສອງຈຶ່ງເອົາຫ່ອນທ້າວ ມາລ້ຽງສືບນົມ
+ ກໍຫາກແມ່ນ ບາຄຳທ້າວ ພະຫຍາດີນ້ອງພະບາດ
ສອງແຈ່ມເຈົ້າ ພຽນລ້ຽງໃຫ່ຍມາ

## 2— ທ້າວ ຄຳແລ່ນນຳຕີນມ້າ

| | |
|---|---|
| + ແຕ່ນັ້ນ ບາຄານໄດ້ | ຫລາຍປີຂຶ້ນໃຫ່ຍ ມາແລ້ວ |
| ພໍ່ຫລົ້ນໄດ້ | ຕີບ້າຄວ່າງຄີ |
| + ບັດນີ້ ພໍ່ກ່າວຕ້ານ | ຈະລີງຂ່ວງສະໜາມຫລວງ |
| ເຈົ້າຈຶ່ງ ໄປນຳຕີນ | ພໍ່ຕີນວັນນີ້ |
| ພໍ່ແຕ່ ຖືຕວຍຕ້ອນ | ຂັນຄຳນຳພໍ່ ບາເຮີຍ |
| ທ້າວກໍ ຈົນຊື່ນຟ້າວ | ກຽມພ້ອມຊູ່ປະການ |
| + ພໍ່ກໍ ປະດັບຫລັງມ້າ | ຄາດເຄື່ອງອາຊະໄນ |
| ນຳທາງໄປ | ຮອດສະໜາມເຊົາມ້າ |
| ຫລຽວຫາທ້າວ | ບາຄານນຳພໍ່ |
| ກໍບໍ່ເຫັນແຈ່ມເຈົ້າ | ບາທ້າວແລ່ນນຳ |
| + ບາຄານອູ້ມ | ຂັນຄຳນຳພໍ່ |
| ເມີນພໍ່ຢ້ຽມ | ເໜືອໃຕ້ໄປ່ເປືອງ |
| + ຍ່າງຕູ່ມເຕື້ອ | ຍາມເມື່ອວັນສວາຍ |
| ພໍ່ກໍຄອງຫາຫລາຍ | ບໍ່ມາເຢັນຈ້ອຍ |
| ພໍ່ກໍ ອຶດໜາກແຫ້ | ຫລຽວແລນຳຊອກ |
| ກໍບໍ່ເຫັນ ໜໍ່ທ້າວ | ເດີນດັ້ນຢູ່ທີ່ໃດ |
| + ຍາມຕູດຊ້າຍ | ບາຈຶ່ງມາເຖິງ |
| ບາກໍ່ ຍໍຂັນຖວາຍ | ພໍ່ຕີນມືຊາ |
| ພໍ່ກໍ ຍິນດີດຽວ | ສະລາຄຳໜາກອ່ອນ |
| ຊະຊ່ອນໜ້າ | ຊຸນທ້າວຢູ່ສະບາຍ |

+ ຍາມຄ່ຳຄ້ອຍ ທ້າວເຄືອງອານຄຳ
ບາຄານນຳ ພໍ່ຕີນເມືອບ້ານ
ພໍ່ຈຶ່ງ.ວາຈານຕານ ລືມນຳນ້ອຍອ່ອນ
ເຈົ້າຫາກໄປຢູ່ຄ້າວ ຊິໃດແທ້ແລ່ນບໍ່ທັນ
+ ພໍ່ຄອງຫາບາດນ້ອຍ ຢາກຄ້ຽວໝາກນຳບາ
ຄອຍຢູ່ເນີນນານເຫີງ ຈຶ່ງວ່າ ວັນວຽນຄ້າຍ
ບັດນີ້ ເຈົ້າຢ່ານານເນີນຊ້າ ພະລັນເດີນໃຫ້ທັນພໍ່
ໃຫ້ເຈົ້າ ໄປພ່ຳພ້ອມ ໃຫ້ທັນມ້າຢ່າຫ່າງໄກ ແທ້ເນີ
+ ບາບ່າວທ້າວ ຂານຕອບບິດາ
ຂ້ອຍຊິເດີນໄປໄວ ໃຫ້ຫ່ວງທຽມທັນມ້າ
ພໍເມື່ອ ວັນລຸນຫ້າງ ອາຊະໄນທົງເຄືອງ
ມ້າກໍ ເຫາະຫອບເຕັ້ນ ໄປໜ້າບໍ່ເຊົາ
+ ທ້າວກໍປົບ ປ່ອງຟ້າວ ເຕັ້ນແລ່ນນຳຫລັງ
ຕາມບິດາ ພໍ່ຕີນຈຳສົ້ນ
ໄປທັນມ້າ ນຳຫລັງບໍ່ໃຫ້ຫ່າງ
ຂອງຟັງຕົກ ຈາກຂັນຕະຫລອດກັຽງ ຈຶ່ງສຽງບໍ່ຍັງ
+ ຄຳໝາກໝັ້ນຽງ ໝົດທຸກສິ່ງຢາປູນ
ແມ່ນບໍ່ຍັງອັນໃດ ຊິລອດຄາຄົງຄາງ
ພໍໄປເຖິງ ສະໜາມກວ້າງ ເຊົາແຄມພັກພ່ອນ
ນອງເບິ່ງ ຄຳໝາກໄດ້ ສູນສຽງບໍ່ຫລໍ
+ ເຈົ້າຫາກເອົາຖອກຖົ້ມ ທີ່ນແຫ່ງທາງໃດ ທ້າວເຮີຍ
ຫລືວ່າ ເຫລົງເສຍ ຢູ່ທີ່ໃດຈຶ່ງກຽງ

ບາຄານທ້າວ ຖະແຫລງຄຳຂານຕອບ

ລູກກໍ ປົບແລ່ນເຕັ້ນ ນຳມ້າຢ່ານບໍ່ທັນ

+ ກໍຫາກຕົກພະຫຍາລູກແທ້ ລູກເຮັດຖືກຕາມຄວາມ

ວ່າໃຫ້ອົດທົນໄປ ແລ່ນນຳທັນມ້າ

ຄຳໝາກຕົກເສຍສ້ຽງ ບໍ່ມີອັນຊິດ້ຽວອີກ

ຮ້າຍກໍຮ້າຍ ບໍ່ໄດ້ ເພາະຕົນເວົ້າບໍ່ລັກຄວາມ

+ ຂຸນກໍອົດເອົາໄວ້ ພໍຄ່ຳເດີນທາງ

ມາເຖິງເຮືອນ ເມື່ອຍແຄນຄາງໂອ້

ວັນນີ້ ບາຄານທ້າວ ວາງໄປເສຍພໍ້

ປະໃຫ້ອົດ ໝາກດ້ຽວ ທັງນີ້ສະແນ່ງຕາຍ ແທ້ແລ້ວ

+ ຂອງໝູ່ນີ້ນ ທ້າວແລ່ນຕົກເສຍ

ບາບໍ່ເອົາໄປນຳ ກໍບໍ່ມີສິ່ງດ້ຽວ

ເຖິງເມື່ອ ວັນລຸນຊ້ຳ ເຕີນບານ້ອຍອ່ອນ

ວັນນີ້ ເຈົ້າຢ່າຊ້າ ນຳສົ້ນຢ່າວາງ ພໍ້ເນີ

+ ອັນໃດຕົກລົງພື້ນ ໃຫ້ທ້າວຮີບເກັບເອົາ ແທ້ເນີ

ຢ່າໄດ້ ໄລວາງປະ ເປົ່າສູນເສຍລ້າ

ມັນຊິເສຍພູໃຊ້ ບໍ່ມີອັນຊິດ້ຽວໝາກ

ໃຫ້ລູກຈຳຈື່ໄວ້ ບົດຮຽນນີ້ຜ່ານມາ ນັ້ນເນີ

+ ແຕ່ນັ້ນ ພໍກໍຊິກອັ້ນມ້າ ທ້າວແລ່ນນຳຫລັງ

ພົນທະນັງນຳ ບໍ່ຫນີຕີນມ້າ

ຂອງສະເດັນຟ້ງ ຕົກລົງເກັບໃສ່

ບາບໍ່ໄວ້ ຍໍ້ມ້ອນໃສ່ອັ້ນ

\+ ມາຂີ້ແລ້ວ　　ຕົກຫລົ່ນລົງດິນ

ບາຄານເກັບ　　ໃສ່ຂັນເຕັມຂັນ

ອັນໃດແທ້　　ຕົກລົງເກັບໃສ່

ບໍ່ໃຫ້ເຫລືອຢູ່ໄດ້　　ເກັບມ້ວນໃສ່ຂັນ

\+ ພໍໄປຮອດຂ່ວງມ້າ　　ສະໜາມຈອດເຊົາພັກ

ບາກໍ ຍໍສະລາ　　ຍື່ນໄປມືຊາ

ພໍ່ກໍເຫັນຂີ້ມ້າ　　ເຕັມຂັນເດຍລະດາດ

ປົນໝາກພູຖ້ວມພົ້ນ　　ເໜັນເອົ້າທົ່ວຂັນ

\+ ພໍ່ກໍເບືອນບູດໜ້າ　　ຍິນຄ້ອຍຄິດອາຍ

ຂຸນກໍ ບາຍເອົາຂັນ　　ຖອກລົງເໜັນພົ້ງ

ເປັນທີ່ເຫລືອໃຈແທ້　　ບາຄານຮັດບາບ

ຂັນຂີ້ມ້າ　　ເໜັນເອົ້າທົ່ວ ສະໜາມ

\+ ທ້າວກໍໄດ້ຮັດຖົ່ງຂີ້　　ປົນບອກບິດາ

ພໍ່ກໍເຫລືອໃຈອິດ　　ໝາກພູບໍ່ມີຄ້ຽວ

ຄິດຄະນຶງໄປແທ້　　ພັດຄືຄວາມຕົນບອກ

ຈຶ່ງບໍ່ກ້າ ກ່າວຖ້ອຍ　　ຄວາມແຄ້ນໂກດເຄືອງ

\+ ບັດນີ້ ທ້າວກໍໄດ້　　ເຖິງຂວບເຈັດປີ ມາແລ້ວ

ຄວນທີ່ຍໍ ບາຄານຖວາຍ　　ພໍ່ພະຍາເປັນເຈົ້າ

ພໍ່ຈຶ່ງ ວາຈານຕ້ານ　　ກຸມມານລູກອ່ອນ

ບັດນີ້ພໍ່ຈັກເອົາ ໜໍ່ທ້າວ　　ຖວາຍໃຫ້ທ່ານພະຍາ

\+ ໃຫ້ລູກຫວີຜົມເຫລື້ອມ　　ຫານໍ້າພັນໂລມລູບ ພໍ່ເນີ

ຄ້ອມວ່າ ບາຄານຕົກ　　ແຕ່ງບໍລະບວນແລ້ວ

ຕັ້ງຫາກ ສອຍວອຍໜ້າ / ຄືງາມຮູບຄ່ອງ

ຈະຈ່ອນໜ້າ / ແຂນເນື້ອອ່ອນນວນ

+ ງາມອ້ອຍຈ້ອຍ / ໂສມນ້ອຍລູກພະຍາ

ອາພອນປະດັບ / ຮູບຈົງປະສິງເອ້

ບິດດາມານດາໃຫ້ / ເດີນຕາມແຫນແຕ່

ເຖິງສະຖານແຫ່ງຫ້ອງ / ໂຮງກວ້າງພໍ່ພະຍາ

+ ພະບາດຈົມຈື່ນຈ້ອຍ / ເຫັນອ່ອນບຸດຕາ

ພະກໍ່ ຄວາມີຈັບ / ກອດເອົາມາອູ້ມ

ພະກໍ່ ເພິ່ງແພງແຫ້ / ກຸມມານນ້ອຍອ່ອນ

ຮັກທັງສອງ ທ່ອນທ້າວ / ສະເໜີດ້ານດັ່ງກັນ
ແທ້ແລ້ວ

+ ພະກໍ່ ຖືວ່າສອງອ່ອນນ້ອຍ / ເປັນລູກເກີດໃນອົກ

ຮັກເທົ່າກັນທັງສອງ / ເກືອງຕາຕົນແທ້

ຕັ້ງວ່າ ສອຍວອຍໜ້າ / ທັງສອງໃສ່ສ່ອງ

ຫລຽວເບິ່ງສອງຝ່າຍແກ້ມ / ແດງເຂັ້ມດັ່ງຄຳ

+ ພະກໍ່ ທານທອດໃຫ້ / ທັງຄູ່ຜົວເມຍ

ທີ່ເບິ່ງແຍງບຸດຕາ / ພ່ຳເພິງພຽນລ້ຽງ

ເອົາທັງອາພອນຜ້າ / ແພສະໄບ ຕຸ້ມທື່ມ

ພ້ອມພ່ຳເງິນຄ່າລ້ານ / ແຖມໃຫ້ຕອບຄຸນ

+ ຍາມເມື່ອ ສົ້ງຂານຂ້ວານ / ແຖມຖ່າຍລະດູປີ ມາແລ້ວ

ທັງສອງອົງ ບຸດຕາ / ໃຫ່ຍສູງສອນໜ້າ

ສິບເອັດປີປາຍແລ້ວ　　ໂສມງາມສະເຫນີຫລໍ່
ຕາຄ່ຽມຄົມເຫລືອດລ້ຽວ　　ສະເຫນີແກ້ວຄ່າແພງ
+ ຫລຽວເບິ່ງ ສິນສີສ້ອຍ　　ສອງຮູບສູ່ະຫນິດກັນ ແທ້ແລ້ວ
ພໍ່ກໍ ຈຶ່ງໃຈຄຶດ　　ຊິມອບເມືອງທັງຄ້າຍ
ຍ້ອນວ່າ ອົງພະຍາເຈົ້າ　　ຊະລາການເຖົ້າແກ່
ທັງເຫື່ອແຮງອ່ອນຮ້ອຍ　　ບໍ່ທັນທ້າວດັ່ງຫລັງ
+ ຄຶດໄຄ່ໃຫ້ອ່ອນນ້ອຍ　　ທົງແທ່ນແທນເມືອງ
ໄຄ້ຈັກ ຍໍກຸມມານ　　ສືບເມືອງແທນເຊື້ອ
ພະຈຶ່ງ ຈຳເອົາຄ້ອງ　　ໃຫ້ເສນາເຕີນປ່າວ
ບອກໄພພົ້ນພວກພ້ອງ　　ໃຫ້ມາເຕົ້າຮ່ວມກັນ
+ ທັງຂອບກ້ວາງ　　ເມືອງເຫດນະຄອນຫລວງ
ທັງປວງຫມົດ　　ຊູ້ຄົນມວນພ້ອມ
ໃຫ້ຄົນຂື້ ອາຊະໄນດັ້ນ　　ເດີນໄປນອກເຂດ
ເຊີນເຜົ່າພົນ ທົ່ວດ້າວ　　ໃຫ້ໄຫລລົ້ນລົ່ງມາ
+ ເຂົ້າຂ່ວງຕຸ້ມ　　ສະຫນາມໃຫ່ຍພາລາ
ຄົນແຄນຄັບ　　ຄົ່ງພະລານພໍລ້ານ
ແຕ່ນັ້ນ ພະຍາເມືອງຕ້ານ　　ໃຫ້ເສນາປຸນປ່າວ
ໃຫ້ພາກັນ ແຕ່ງສ້າງ　　ລິນນ້ຳຫລັ່ງສົງ
+ ກັບທັງ ປູກກ້ວຍອ້ອຍ　　ກົ້ງຮົ່ມບັງບົດ
ຄົນຫລວງຫລາຍ　　ມືດມົວມາເຝົ້າ
ເສດຕະສັດຕັ້ງ　　ທຸງໄຊເດຍລະດາດ
ພິນພາດຄ້ອງ　　ຕີ້ຕອງສະຫນັ່ນເມືອງ

\+ ນ່ຽວໆເຫລື້ອມ ພະຄືແກວ່ງໄກວລົມ ພຸ່ນເຢີ

ໂຫມງສຽງ ເສບວັນລະບຳຫລິ້ນ

ຍາມດີແລ້ວ ພະຍາຫລວງສະເດັດກ່ອນ

ນຳດອກໄມ້ ຈັບຄະດູໃສ່ຂັນ

\+ ທຽນທູບໄຕ້ ໃສ່ສ່ອງພະລານໄຊ

ມະຫາລາຊາຊົງ ແຕ່ງຂັນສົງນ້ຳ

ຈັ່ງແມ່ນໂຮຍໆເຮົ້າ ຫອມກະຈອນຈົນທົ່ວ

ເສນາເນືອງແຫ່ເຂົ້າ ສົງຫ້າວທົ່ວທະລັງ

\+ ຍໍຍົກເອົາທ່ອນທ້າວ ສະເຫວີຍລາດເປັນພະຍາ

ຊົງຄອບຄອງນະຄອນຫລວງ ຢູ່ສະບາຍເບົາເນື້ອ

ບາກໍ່ທົ່ງເມືອງສ້າງ ຕາມຄອງທົດສະລາດ

ບໍ່ທຸກຍາກຂາດໄຮ້ ຝູງຂ້າໄພ່ເມືອງ ເຈົ້າເຮີຍ

\+ ບັດນີ້ຈັກກ່າວເຖິງພະພໍ່ເຈົ້າ ອົງອາດພະຍາເມືອງ ກ່ອນແລ້ວ

ພະກໍ່ມີອາຍຸ ແກ່ຊະລາເລີຍເຖົ້າ

ຫນັງຍານຮ້າຍ ຫົວຂາວແຂ້ວຫລ່ອນ

ຕາບໍ່ແຈ້ງ ຫູຊໍ້າບໍ່ໄດ້ຍິນ

\+ ພະຈົ່ງ ຮຽກອ່ອນນ້ອຍ ແກ້ວແກ່ນສອງພະອົງ ພໍ່ເຮີຍ

ແພງເພົາກູ ຮີບມາດຽວນີ້

ສະເຫນຫາສ້ອຍ ສອງພະອົງເຖິງພໍ່

ແປະແຜ່ນພື້ນ ຕີນເຈົ້າໃສ່ຫົວ

\+ ນົບນອບນິ້ວ ທູນບາດອົງກະສັດ

ສອງກຸ່ມມານ ເນດນອງຍົມຍ້ອຍ

ພໍ່ກໍ່ບາຍ ແຂນນ້ອຍ ທັງສອງແລ້ວສິ້ງ
ເຈົ້າພໍ່ ຟັງພາກພົ້ນ ກູເຖົ້າຊິສັ່ງສອນ ພໍ່ເນີ
+ ເຈົ້ານີ້ ລ້ຽງຍາກແທ້ ຫນໍ່ທ່ານທວາຍດູ
ພໍ່ຈຶ່ງ ຫາບຸດຕາ ເກີດວັນດຽວເຈົ້າ
ເອົາມາລ້ຽງ ນຳກັນກໍ່ຈຶ່ງໃຫ່ຍ
ພໍ່ກໍ່ຫາ ໄດ້ນ້ອງ ດຽວນີ້ເພິ່ງກັນ ພໍ່ແລ້ວ
+ ໃຫ້ຄ່ອຍຮັກຮ່ວມນ້ອງ ເທົ້າຊົ່ວຊີວັງ ພໍ່ເນີ
ຢ່າໄດ້ ທຳປາປັງ ຂ້າຕີຕົນນ້ອງ
ຄັນວ່າ ຜິດພໍ້ຂາ ຂໍພອນໃຫ້ເຈົ້າປ່ອຍ
ຄັນຫາກຜິດແຕ່ນ້ອຍ ຂໍເຈົ້າຢ່າໄດ້ຊາ ພໍ່ເນີ
+ ໃຫ້ເຈົ້າລ້ຽງນ້ອງໄວ້ ເປັນຫມູ່ນຳກັນ
ເປັນຜູ້ ທຽວທາງນຳ ຊ່ອຍຕົນຕາມໃຊ້
ຄ້ອນວ່າ ວາຈາຕ້ານ ປັງຄວາມສອນສັ່ງ
ພໍ່ກໍ່ ລຶດຊົ່ວນ້ຽນ ຕາຍສິ້ນຊີບຊີວັງ
+ ພວກລູກແສນ ໂສກເສົ້າ ພ້ອມພ່ຳອາໄລຫາ ແທ້ແລ້ວ
ມີແຕ່ ໂຍມມະນາຄິດ ຮອດພະລາຊາເຈົ້າ
ຜູ້ທີ່ ມໍລະນາມ້ຽນ ຊີວັງມວນມຸດມອດ
ນັບແຕ່ ຜາສາດກວ້າງ ສະຫນົມນ້ອຍຫມື່ນຫມອງ
+ ທຸກທົ່ວຫນ້າ ປະຊາ ລາດຊາວເມືອງ
ໃຜກໍ່ຊົນລະຫາຄິດ ຮອດພະອົງທັງຄາຍ
ມີແຕ່ ໂສກາເສົ້າ ຄະນິງນຳພະຍາພໍ່
ຫວົາຫວ່ວນໄປທົ່ວຫ້ອງ ແດນດ້າວພະນະຄອນ

\+ ເພາະວ່າ ພະບາດເຈົ້າ　　ມ້ວຍມິ່ງເມືອສະຫວັນ ພຸ້ນແລ້ວ
ປະປ່ອຍ ດວງວິນຍານ　　ເວີ່ນເມືອເມືອງຟ້າ
ໄປກ່ອນປວງຊິນເຊື້ອ　　ຊາວເມືອງຄະນິງຮອດ
ໃພກໍ່ ຫີວຫອດໄຫ້　　ກະສັນດິ້ນລົ້ນຫາ ແທ້ແລ້ວ
\+ ສ່ວນວ່າ ພະໜໍ່ໄທ້　　ນ້ອງນາດບຸດຕາ
ບາກໍ່ ທົນທວງທຸກ　　ວອດທະນານີ້ມື
ຄຶດຄະນິງ ເຖິງໄທ້　　ປິຕາຕົນພໍ່
ບາກໍ່ຕັດ ກົດເກົ້າ　　ທົງຜ້າແພ່ນເຫລືອງ
\+ ປະຕິບັດ ຖືກຕ້ອງ　　ຕາມຮີດຄອງທຳ
ທຸກສິ່ງຈິງໃຈຮຽນ　　ຮ່ຳເອົາຈົນໄດ້
ແລ້ວກໍ່ ເທສະໜາໃຫ້　　ສິນທຳອັນປະເສີດ
ຕັ້ງຫາກ ງານເລີດລ້ຳ　　ຈົວນ້ອຍລູກພະຍາ ແທ້ນໍ
\+ ເຂົາກໍ່ ວັນລາບເຈົ້າ　　ໄດ້ຂອບເຈັດເດືອນ
ແລ້ວຈຶ່ງ ປົງພະເມນຫລວງ　　ໃສ່ຟືນໄຟມ້າ
ອັກຄີກຸ້ມ　　ແປວໄຟເຮືອງຮຸ່ງ
ຄ້ອນພຸ່ງຂຶ້ນ　　ເມືອຟ້າຮອດພົມ
\+ ພໍວ່າ ໄຟມອດແລ້ວ　　ເປັນເຖົ່າພົງທຸລີ
ອັກຄີດັບ　　ມອດເຢັນຫາຍສຽງ
ບຸດຕາເຈົ້າ　　ທັງສອງກັ້ນສະຫວາດ
ໃຈທຸກແຄ້ນ　　ໜອງໜ້ອມຈົ້ມຫາ ແທ້ແລ້ວ
\+ ກໍຈຶ່ງ ກໍ່ທາດຕັ້ງ　　ກວມດູກລາຊາ
ເອົາຄຳປົວ　　ຟອກງາມເຫລືອງເຫລື້ອມ

ຈິວກໍ່ ພາວະນາໃຫ້ ເຖິງຄຸນມະຫາລາດ
ບໍ່ໃຫ້ ມີຂາດມື້ ແລງເຊົ້າພ່ຳເພັງ ແທ້ແລ້ວ
+ ຫມົດຫມູ່ພົງ ໄພຟ້າ ສະຫງົບຢູ່ນຳກັນ
ດີແກ່ ປາລະມີຊູ ຊ່ວຍນະຄອນຄານກວ້າງ
ບໍ່ໄດ້ ມີຄວາມຮ້ອນ ອົນຕາຍບັງເກີດ
ປວງປະຊາ ໃຫຍ່ນ້ອຍ ສະບາຍສ້າງສູດທຽມ ເຈົ້າເອີຍ

## 3— ເບນຖ່າກິນຂີ້ອ້ອຍ

+ ເນົາຢູ່ໃນວັດນີ້ ມີພະຫລາຍອົງ
ຢູ່ຮ່ວມ ກັບເນນຄຳ ນັ່ງທົງຈຳໃຫ້
ຍັງມີມະຫາເຖນເຈົ້າ ສາມອົງອາວາດ
ຢາກໄດ້ ສາດຕະເພດຮູ້ ພະຫຍາລ້ຳເລີດຄົນ
+ ໄປຊອກຫາ ຕົ້ນອ້ອຍ ມາຄົບເຈັດລຳ
ມາແຕ່ງທັງ ຄູຄາຍ ດັ່ງທີ່ຄູສອນໄວ້
ຫວັງຢາກ ມີຄວາມຮູ້ ປັນຍາເຊັງຊ່າ
ໄປສູດ ໃນພີປ່າຊ້າ ຈົນແຈ້ງຈື່ງສິ້ນ
+ ຫາກຈັກ ດີເລີດລ້ຳ ພະຫຍາລື່ນຄົນເຮົາ
ອັນແຕ່ ເຊິງໂວຫານ ບໍ່ອາດຖອງເຖິງໄດ້
ສົມກໍ່ ອົນຂວາຍໃຫ້ ຫາມາພ້ອມພ່ຳ
ເຖິງເມື່ອ ຍາມຄ່ຳແລ້ວ ສົມເຈົ້າຮຽກເນນ
+ ເຈົ້າຈົ່ງ ໄປຮ່ວມຂອຍ ແບກອ້ອຍດຸ່ງເດີນໄປ ຈິວເຮີຍ
ຈົນຮອດ ດົນແດນໄກ ບ່ອນເຂັດຢຳພາຍພຸ່ມ

| | |
|---|---|
| ໄປຊ່ວຍທຳຄຸນໃຫ້ | ພະເຖຈາວອນວ່າ |
| ໄປສົ່ງຮອດປ່າຊ້າ | ຈົວເຈົ້າກໍຈົ່ງມາ ນັ້ນຖອນ |
| + ຈົວບໍ່ຮູ້ ຮ່ອນເບື້ອງ | ຟ້າຕ່ຳດິນສູງ |
| ເປັນເລື່ອງເບົາຫລືໜັກ | ບໍ່ສ່ອງເຫັນພະທຍາເຈົ້າ |
| ກໍຈັກໄປນຳເຈົ້າ | ຄູບາຕາງເບິ່ງ ດູກ່ອນ |
| ຕາງໃຫ້ເຫັນເດດເຈົ້າ | ຄູເຖົ້າກໍຈົ່ງມາ ແທ້ແລ້ວ |
| + ຈົວກໍເອົາແຜ່ນຜ້າ | ຕຸ້ມທີ່ນອນຄຸມຕີນ |
| ແລ້ວກໍເດີນໄປຫາ | ພໍ່ພະຍາປະນົມກົ້ມ |
| ສົມກໍບາຍເອົາອ້ອຍ | ເຈັດລຳໃຫ້ຈົວແບກ ໄປແລ້ວ |
| ອັນວ່າ ສາມແຈ່ມເຈົ້າ | ຖືເຜິ້ງທູບທຽນ |
| + ຄັນວ່າ ເຖິງປ່າຊ້າ | ແລ້ວແຕ່ງບໍລະບອນ |
| ຄວນໆເນນ | ສູດຄາຖານ້ອຍ |
| ກໍທາກເຫີງນານລ້ຳ | ອິດຫິວດູເມື່ອຍ |
| ສົມຈຶ່ງຖາມແກ່ນແກ້ວ | ຈົວນ້ອຍສິດຕົນ |
| + ຈົວເອີຍ ຍັງຊິພໍຢູ່ໄດ້ | ຄືນຮຸ່ງອີດນອນ ໄດ້ບໍ່ |
| ຕູຈັກເມືອອາຮາມ | ໃຫ້ເນນຄອຍເຝົ້າ |
| ແລ້ວໃຫ້ ຟັງສຽງຄອງ | ສຽງລະຄັງ ດັງມ່ວນ |
| ໃຫ້ຮີບ ຖືຖອດອ້ອຍ | ເມືອບ້ານຢ່ານານ ທ່ຽວເຖີ້ນ |
| + ໃຫ້ເອົາໄປປ່ອນໄວ້ | ກຸດີໃຫ່ຍຫລັງແຈ ນັ້ນເນີ |
| ຢ່າໃຫ້ ລືມມາເຫັນ | ຊິລັກກິນເສຍສຽງ |
| ອັນນີ້ເປັນພະທຍາແກ້ວ | ຂອງດີບັງເກີດ ຈົ່ງແລ້ວ |
| ຄັນວ່າ ເນນທາກອີດຢູ່ໄດ້ | ຊິປັນໃຫ້ບໍ່ແພງ ດອກນາ |

+ ເນນກໍ່ຄຶດຢາກໄດ້ ມາຕື່ມພະຫຍາຕົນ
ຈົວກໍ່ອົດຂັນຕິ ຢູ່ເອົາຈົນໄດ້
ພໍເມື່ອ ສຸລິໂຍຂຶ້ນ ເຂົາທອງ ໃກ້ຊິຮຸ່ງ
ເນນກໍ່ແບກໄດ້ອ້ອຍ ເລີຍຟ້າວຕ່າວຄືນ
+ ຂຶ້ນສູ່ຫ້ອງ ກຸດີໃຫຍ່ມະຫາຄູ
ດຸດັ່ງ ສວາຍພໍງາຍ ຮີບໄປເດີເຈົ້າ
ເນນກໍ່ຫິວນອນແທ້ ຫມົດຄືນຈົນສະຫວ່າງ
ພໍວ່າ ມາຮອດແລ້ວ ເນນແກ້ວກໍ່ເລົ້ານອນ
+ ສິນກໍ່ສ່ວາຍຫນ້າແລ້ວ ມ້ວນປາກສີຟັນ
ກໍ່ຈຶ່ງ ພາກັນໄປ ສູ່ອາຮາມຫາອ້ອຍ
ແລ້ວເລົ່າ ພາກັນຄ້ຽວ ກິນເສຍຫມົດອ່ອຍຫ່ອຍ
ບໍ່ໄດ້ ຄຶດຮອດນ້ອຍ ເນນເຝົ້າຕັ້ງແຕ່ແລງ
+ ເຈັດລຳອ້ອຍ ກິນບໍ່ຈຶ່ງຈຽມໃພ
ຄ້ຽວຄາບກິນ ຈົນຫມົດ ບໍ່ຍັງພໍ້ປອງ
ຍັງແຕ່ຕາກັບຂໍ້ ສິງບໍ່ກິນຍ້ອນວ່າແກ່ນ
ຈຶ່ງໂຮຍປະປ່ອຍຖິ້ມ ວາງໄວ້ໃຫ້ແກ່ເນນ
+ ຈົວຕື່ນແລ້ວ ເລີຍເລົ່າມາຫາ
ກໍ່ບໍ່ເຫັນທາງໃດ ຖ່ອຍລຳພໍ້ປອງ
ເຫລືອແຕ່ຕາກັບຂໍ້ ກອງກັນຂີນໄຂ່ວ
ເນນກໍ່ປາກບໍ່ໄດ້ ຍິນແຄ້ນຄັ່ງໃຈ
+ ເນນກໍ່ ເກັບຂີ້ອ້ອຍ ມາຫຍ້ຳຄ່ອຍກິນ
ເຫດວ່າພະຫາກໂລພາກິນ ຮອດບໍ່ເຫລືອພໍ້ປອງ

ເນນກໍ່ ອຶດສາເກັບເອົາຂີ້ ມາກິນທັງຈື່ມ
ເພິ່ນຫາກກິນແຕ່ປ້ອງ ວາງຂີ້ແກ່ກູ ແທ້ນໍ
+ ພະຫຍາກໍ່ປາກຂັ້ງຢູ່ຂີ້ ໃນບ່ອນເນນກິນ ຫັ້ນແລ້ວ
ສິນຫາກກິນລຳຫມົດ ປະບໍ່ກິນຍັງຂີ້
ພໍແຕ່ ເນນກິນແລ້ວ ພະຫຍາແວວ ໄວສະຫລາດ
ເຮັດໃຫ້ ເນນເກັ່ງກ້າ ຄວາມເວົ້າວ່ອງໄວ ແທ້ແລ້ວ
+ ກໍ່ຫາກເສຍແຮງເຖລະເຈົ້າ ໄປສູດຫມົດຄືນ
ຫວັງຊິເປັນຄືນມີ ພະຫຍາ ພັດເລົ່າຄືນມາລ້າ
ຄອບວ່າຕົນ ຫລົງແລ້ວ ບໍ່ມີໃຈໄວວ່ອງ
ແລວເລົ່າ ສັ້ນແຕ່ປ້ອງ ພະຫຍາຊ້ຳບໍ່ມີ ແລນໍ
+ ເນນຫາກສັ້ນຂີ້ອອຍ ພະຫຍາເກີດເຫລືອຫລາຍ
ພໍເມື່ອກາຍສາມວັນ ຈຶ່ງຖາມພະຄູເຈົ້າ
ຈົວກໍ່ໄປຖາມໄຫວ້ ຄູບາກັບໂຈດ
ຕາມແຕ່ຄວາມຄຶດຮູ້ ພະຫຍານ້ອຍແຫ່ງຕົນ
+ ເນນຄຶດເປັນກະທູ້ ຖາມເບື້ອງບາງບົດ
ຄູບາເອີຍ ບົດວ່າເຫດັງວາ ແມ່ນສິ່ງຈິງແທ້
ກັບຫົວຊຸກ ໂຕພ້ອມ ຄຸຊະລາຊິຊ່ວາ
ອັນຫນຶ່ງ ສິງຄາວາວ່ານັ້ນ ໃຫ້ແປຖ້ອນພໍ່ຄູ
+ ເນນກ່າວຢ້ຳ ຖາມຕໍ່ບໍ່ມີຢຸດ
ບົດວ່າ ຈັດຕານັ້ນ ທຸທິຕາໃຫ້ແປອອກ
ກັບຫົວ ແປະງຊ້ອນ ປະງຫລາຍບາດ

ຈັກວ່າ ໄດ້ແມ່ນແນ້ວ ອັນໃດແທ້ພໍ່ຄູ

+ ເມື່ອນັ້ນ ເຈົ້າກໍຫນ້າຊິ້ງລິ້ງ ຄຽດເຄັ່ງຕຶງລຶງ

ສັງວ່າມາທວາຍຖາມ ໂຈດກູສັນນີ້

ຈັກວ່າ ອີສັງແທ້ ຈຳກູໃຫ້ແກ້ບອກ

ຈິງນີ້ ມັນຮ່າວຮູ້ ໄປໄດ້ແຕ່ທີ່ໃດ ນີ້ເດ

+ ແຕ່ນັ້ນ ພະຄູໃຫ່ຍເຈົ້າ ຄະນຶງອ່ອນໂຮຍແຮງເສຍແລ້ວ

ເລີຍເລົ່າ ເອົາຄຳພີ ພີປອງປຸນໄວ້

ເອົາພວກຫນັງສືກ້ອມ ຫລາຍອັນມາອ່ານ

ອິດຄ່ອຍໄປຝຶດໄວ້ ວິໄນພ້ອມກໍ່ບໍ່ເຫັນ

+ ພະກໍ່ກັບຕ່າວຕັ້ງ ເລີຍອ່ານຄຳແປ

ກໍ່ບໍ່ມີ ຕົວອັດ ທຽບທຽມຊິແປໄດ້

ຕັ້ງຫາກຫລາຍ ວັນແທ້ ຄະນຶງຫາອິດອ່ອນ ເສຍແລ້ວ

ຄິດຖີ່ແທ້ ອືດູຫນ້າພໍ່ຄູ ແທ້ແລ້ວ

+ ຈິງຈຶ່ງບອກໃຫ້ຮູ້ ຕາມຮ່ອມຄຳແປ

ບົດວ່າ ເທດັງວາ ແມ່ນດັງວງຊ້າງ

ບົດວ່າ ຊາໂຕນັ້ນ ແມ່ນຕົວຄົນຄາກ ຄູບາເຮີຍ

ຈັກວ່າອັນອື່ນນັ້ນ ບໍ່ຄືແທ້ອີຫລີ

+ ບົດວ່າ ຄຸຊະລານັ້ນ ຄິດເບິ່ງໃຫ້ມັນດີ

ບໍ່ແມ່ນຄວາມກວງໄກ ພໍຊິຈົນໃຈຍ້ອນ

ຄົນຮູ້ມີພະຫຍາແກ້ ຈາໄປຕ້ອງໄດ້ວ່າຍ

ຫາກແມ່ນຄູເປັ້ຮາງ ຊະລາທ້ຽນຫລິ້ນຂີ້ຊີ ແທ້ດາຍ

+ ບົດວ່າ ສິງຄາວານັ້ນ ກໍ່ບໍ່ຍາກຊາຫຍັງ

| | |
|---|---|
| ຄົນຜູ້ມີປັນຍາ | ຄິດຄະນຶງຄົງຮູ້ |
| ກັບຫົວຄວາມຫວາຍເວົ້າ | ອະທິນາກ້າຂະໜາດ |
| ຕົ້ງແມ່ນງູພິດຮ້າຍ | ສິງເສື້ອຄ່າວາ ດອກມາ |
| + ບົດຈັດຕາວ່ານັ້ນ | ກໍເໝືອນດົ່ງດຽວກັນ |
| ມັນບໍ່ເປັນອັນງຶດ | ຊອກກວງໄກລ້ |
| ຄວາມວ່າຕີຕານັ້ນ | ກໍຄືກັນບໍ່ໄດ້ຍາກ |
| ຄັນວ່າຄິດ ແມ່ນແທ້ | ໃນຫົ້ນຫາກຊິເຫັນ |
| + ມັນແມ່ນເລື່ອງທ່ອນທ້າວ | ຜູ້ອຳນາດເຫລືອຫລາຍ |
| ເຄີຍແຕ່ງຄົນເອົາໄປ | ສົ່ງກັນວັນນີ້ |
| ອັນນີ້ຫາກແມ່ນເອົາສານເຂົ້າ | ຕີຕາຈ້ຳຈຶດ ຄູບາເຮີຍ |
| ແຂງວ່າຄິດ ສິ່ງນີ້ | ກໍ່ແປໄດ້ງ່າຍດາຍ ດອກແລ້ວ |
| + ບົດ ຕໍ່ ໄປກໍ່ຊ້ຳ | ເໝືອນດົ່ງດຽວກັນ |
| ໃຜຫາກມີປັນຍາ | ເບິ່ງດູຄົງໄດ້ |
| ບົດວ່າແປະງຊ້ອນ | ປະງ ຫລາຍບາດ ນັ້ນນາ |
| ເບິ່ງຄື ຍາກແທ້ງ | ແຄວນຫຍຸ້ງ ກວ່າຫລັງ ທ່ານເຮີຍ |
| + ແຕ່ວ່າ ມັນບໍ່ຫຍຸ້ງ | ເຫັນງ່າຍຄືຫຍັງ ທ່ານເຮີຍ |
| ແມ່ນເຄື່ອງຄົນ ເຄີຍເຫັນ | ຊູ້ວັນບໍ່ມີເວັ້ນ |
| ອັນນີ້ ຫາກແມ່ນຄວາຍກິນຫຍ້າ | ເລມກຽງກາງທົ່ງ |
| ແລ້ວຈຶ່ງ ຂີ້ຢາດໄວ້ | ຫລາຍກ້ອນຖືກັນ |
| + ແຕ່ນັ້ນ ລາຊະຄູເຈົ້າ | ຄຽດເຄົ່ງຄຸງໃຈ |
| ມັນແມ່ນແນວເຄີຍເຫັນ | ຊູ້ວັນຈິງແທ້ |
| ບໍ່ຄຶດວ່າ ມັນຫາຂີ້ | ພະຫຍາໄກມາວ່າ |

ອັນນີ້ ຕັ້ງຫາກຫາໃກ້      ກູໄດ້ຄຶດກາຍ ດອກນາ

+ ຄ້ອນວ່າບໍ່ລະບວນ ເລີກແລ້ວ ສະຖິດຢູ່ເຊົາແຄນ

ຈິວກໍ່ລາຄູບາ      ຍົກຍໍມືນ້ອມ

ຂໍໃຫ້ ຄູບາໄດ້      ຫາຍແຄວນເຊົາເມື່ອຍ

ຈິວຈຶ່ງໄປອາບນ້ຳ      ເສຍຮ້ອນເຫື່ອໄຄ

## 4— ພະບັບກົບໜັຽງພໍ່ຄ້າຈົບໄດ້ຊື່ວ່າຊຽງໜັຽງ

+ ແຕ່ນັ້ນ ຍັງມີໄທຄັງຄ້າ ຫາບໜັຽງ ມາຮອດຝັ່ງນະທີໄຫລ

ເຂົາກໍ່ເຫັນຈິວລົງ      ອາບລອຍໃນນ້ຳ

ເຂົາຈຶ່ງຖາມຈິວນ້ອຍ      ວ່າວັງເວີນເປັນຫາດ

ຈັກວ່າ ເລິກ ແລະ ຕື້ນ      ສັນໃດແທ້ບໍ່ຈິວ

+ ແຕ່ນັ້ນ ຈິວກໍ່ຂານຕອບຖ້ອຍ ຕາມດັ່ງຄຳຖາມ

ໃຜກໍ່ມີຕາເຫັນ      ເບິ່ງເອົາເອງໄດ້

ສັງຊິມາຈາຕ້ານ      ຖາມເຮົາຄືນອີກ

ອັນວ່າເລິກ ແລະ ຕື້ນ      ສູ້ຮູ້ຊູ້ອັນ ແລວເດ

+ ແຕ່ນັ້ນ ເຂົາກໍຕິກ່າວຖ້ອຍ      ຖາມສືບດອມຈິວ

ຂໍຈົ່ງວາ ຈາຂານ      ຕອບພວກເຮົາຈົ່ງແຈ້ງ

ແປບັນຫາບິດນີ້      ຕີຄວາມໃຫ້ຮູ້ເລື່ອງ

ຕູຂ້ອຍຍັງຂ້າມນ້ຳ      ໄປໄດ້ດັ່ງລື ນັ້ນເດ

+ ແຕ່ນັ້ນ ຈິວຕອບຖ້ອຍ      ຂານໝູ່ໄທຄັງ

ສູຈ່າງມາ ວາຈາ      ສິ່ງບໍ່ເປັນໄປໄດ້

ໃຜທ່ອນ ເອົາຕີນຂ້າມ　　ນະທີຫລວງກັ້ນຮອດ ເຮົາໄດ້ແລ້ວ

ຢຽວວ່າ ອິນຢູ່ຟ້າ　　ລົງອູ້ມຊ່ວຍຊູ ບໍ່ຮູ້

+ ແຕ່ນັ້ນ ໄຫລົງກໍ້ກ່າວຕ້ານ　　ຖາມຕື່ມດອມຈົວ

ຂໍໃຫ້ ວາຈາຂານ　　ຕອບມາຈົ່ງແຈ້ງ

ມາພະນັນກັນໃຫ້　　ເຫັນໃຈຄົນເກົ່ງ

ພໍວ່າ ຕູຫາກຍັງຂ້າມໄດ້　　ຈົວເຈົ້າຊິໃຫ້ສັງ ນັ້ນເດ

+ ເມື່ອນັ້ນ ຈົວຕອບຖ້ອຍ　　ຂານບອກໄຫລົງ

ເຮົາຈັກວາງ ຈົວອນຫົງສະບົງ　　ໃຫ້ສູຈົ່ງແທ້

ກັບຫົວຜ້າສະໄບພ້ອມ　　ຫົວໝູ່ກາຍພັນ (1)

ເຮົາບໍ່ກິນແຫນ່ງສັງ　　ຊິມອບເວນວາງໃຫ້

+ ຄັນວ່າ ສູຫາກຂ້າມບໍ່ໄດ້　　ສູເລົ່າຊິເສຍສັງ ນັ້ນເດ

ແຕ່ນັ້ນ ໄຫລົງຂານ　　ວ່າຊິເສຍຍັງຫມ້ຽງ

ຕູຈັກເອົາຍັງຫມ້ຽງ　　ວາງໄປມວນມອບ ຈົວແລ້ວ

ຕູຫາກພັນ ບໍ່ແພ້　　ຊິຍອມໃຫ້ຊູ້ຄົນ ແທ້ດາຍ

+ ແຕ່ນັ້ນ ຈົວກ່າວຕ້ານ　　ຫ້າມຢ່າພັນກັນ ເທາະນາ

ມັນຈັກເສຍຂອງສູ　　ຫມ້ຽງຄັງພະຍາເຈົ້າ

ແຕ່ນັ້ນ ເຂົາກໍເລົ່າດິນຄໍາຫ້າມ　　ແຂງຄວາມຄິດຊອດ

ເຂົາກໍ່ວ່າ ເຂົາຊິຂ້າມໄດ້　　ກໍເລີຍຫ້າວ່າເອົາ ເທາະນາ

+ ເມື່ອນັ້ນ ເຂົາກໍເລົ່າເອົາຍັງຫມ້ຽງ ລອຍໄປຫົວທ່ອງ

ສຽງໂຫ້ຮອງ　　ຫົວຕື່ນຊູ້ຄົນ

---

(1) ກາຍພັນ : ຜ້າມັດແອວ

ເຂົາກໍ່ສິນງຂ້າມ ຊິນລະທີລອຍຢັ້ງ ໄປແລ້ວ
ຄັນວ່າ ຮອດຝັ່ງແລ້ວ ຈາຕ້ານຕໍ່ຈົວ
+ ເຈົ້າຈົ່ວຍອມມອບຜ້າ ພືນນຸ່ງທັງຫມົດ ມາຖອນ
ຕູຈັກ ເອົາປັນກັນ ນຸ່ງທົງຕາງເອ້
ບັດນີ້ ຕູຫາກມາພັນແພ້ ລອຍນະທີມາຮອດ
ຈົວທ່ານ ຢ່າໄດ້ໂຈະຢູ່ຊ້າ ເປືອງແກ້ອອກມາ ເທາະແມ
+ ເມື່ອນັ້ນ ເຂົາກ່າວຕ້ານ ເວົ້າຂູ່ຄວາມຈົວ
ຢ່າໄດ້ວາຈາຂານ ປ່ຽນແປງຄວາມເວົ້າ
ຊາດທີ່ເປັນຈົວນີ້ ຖືສິນບໍ່ຫ່ອນລ່າຍ ຈົວເຮີຍ
ບໍ່ຫ່ອນຕົວະລ່າຍຫລິ້ນ ຫລາຍລີ້ນແງ່ງອນ
+ ຄັນວ່າ ເສຍສົດຈະນີ້ ສິນບໍ່ຢູ່ໃນຄີງ ແທ້ດາຍ
ມັນຈັກຕົກ ລົງເສຍ ບໍ່ຢູ່ເປັນຈົວໄດ້
ເປັນດັ່ງ ເມັດງາຕັ້ງ ປາຍເຫລັກຈານຈັບຢູ່ ນັ້ນແລ້ວ
ຄັນວ່າ ລົມພັດຍູ້ ປິວເປື້ອງຫລົ່ນເສຍ ດອກນາ
+ ແຕ່ນັ້ນ ຈົງຈົ່ງຕ້ານກ່າວຖ້ອຍ ຂານຕອບໄທຄັງ
ສູຫາກ ເອົາກັນລອຍ ລ່ວງມາດາຍດູ້
ລາງຜ່ອງ ດຳລົງພື້ນ ລາງຄົນຢືນຍ່າງ ມາດາຍ
ສູບໍ່ ເຕັ້ນໂດດຂ້າມ ມາແທ້ເມື່ອໃດ
+ ຄັນວ່າ ສູໂດດຂ້າມ ສອງຝັ່ງນະທີຫລວງ ດັ່ງນັ້ນ
ກູຈັກ ຍອມຍໍຍົກ ທຸກສິ່ງອັນຕາມເວົ້າ
ຄັນວ່າ ວັດຖົງຜ້າ ກູບໍ່ມີຊົ້ຊື່ຕົມ ສູເຮີຍ
ອັນນີ້ ຕັ້ງຫາກພິດຮີດເຄົ້າ ຄອງພັນແທ້ບໍ່ຖືກຄວາມ ແທ້ດາຍ

+ ບັດນີ້ ກູຈັກເອົາຫາບຫມັ້ຽວ    ໃຫ້ສູມອບຫົວຫມົດ ທ່ຽວເຖິ້ມ

ເຫມືອນດັ່ງ ຄຳວາຈາ    ທີ່ພະນັນກັນໄວ້

ຄັນວ່າ ເສຍສັດຈະນີ້    ຕົວຕາຍດີກວ່າ ຈິງແລ້ວ

ຄວາມບູຮານ ຫາກວ່າໄວ້    ເຮົາຮູ້ຊູ່ອັນ ນັ້ນແລ້ວ

+ ບັດນີ້ ຄວາມພັນກູຫາກແພ້    ຫມົດຫມູ່ຝູງສູ ຈິງແລ້ວ

ສູຢ່າ ມີອຸບາຍ    ລ່າຍພາງຄວາມເວົ້າ

ຍາມເມື່ອກູ ຫາກມີຄວາມຫ້ານ    ສູບໍ່ຍອມຍັງຫານຢູ່ ຈິງນາ

ບັດນີ້ ກູຫາກພັນແພ້ແລ້ວ    ຈິເອົາຫມັ້ຽງແຫ່ງສູ ແທ້ດາຍ

+ ຍາມເມື່ອ ໄຫລັ່ງຫມັ້ຽວ    ຖຽງຕອບສຳນະເນນ ຢູ່ນັ້ນ

ຄວາມຫາກ ເລີຍເນືອງນັນ    ທົ່ວເມືອງຄົນຮູ້

ເອົາ ຈຶ່ງ ເມືອງຫູນໄຫວ້    ພະຍາເມືອງບົນບອກ

ພໍໃຫ້ຮູ້ຂ່າວຂໍ້    ຟັງແຈ້ງຊູອັນ

+ ເອົາກໍ່ເລົ່າ ແຕ່ເຄົ້າ    ເທົ້າຮອດເຖິງປາຍ

ອັນວ່າ ລາຊາພະ    ຄ່ອຍພິຈານແຈ້ງ

ກໍ່ຫາກ ຄືຄວາມເບື້ອງ    ສຳນະເນນແກ້ກ່າວ

ເອົາຫາກ ລອຍລ່ອງແທ້    ບໍ່ມີຂານໂດດມາ ແທ້ດາຍ

+ ພະຈຶ່ງ ຕັດຂາດນັ້ຽມ    ຕາມແພ່ງພິມເມືອງ

ເອົາຕາມຄອງບູຮານ    ແຕ່ປະຖົມຈິງແທ້

ວ່າໃຫ້ເອົາ ແຕສີ້ຊາ ຫ້າບາດຖ້ວນ    ຖວາຍເນນຕາມຮີດ

ຢ່າໃຫ້ ເອົາລື່ນພົ້ນ    ຄອງຫ້າມບໍ່ດີ ແທ້ເນີ

+ ສູຈຶ່ງ ປັນແບ່ງໃຫ້    ຕາມຮີດເຮົາຕັດ

ໃຫ້ສູບໍ່ເຣນຖວາຍ    ແກ້ຈ້ວເສຍຖ້ອນ

ແຕນັ້ນ ເຂົາກໍໂດຍຄວາມເຈົ້າ ພະຍາເມືອງຕຶກແຕ່ງ
ເລີຍເລົ່າແລ້ວ ນຳໃຫ້ແກ້ຈົວ
+ ຈົວຈຶ່ງ ຖາມເບື້ງຂໍ້ ຕາມພະບາດຊົງຕັດ
ວ່າພະອົງລົງຄວາມ ວ່າຈຶ່ງໃດເດເຈົ້າ
ມັນຖືກຄວາມໃຜແທ້ ກະລຸນາບົນບອກ ມາຖ້ອນ
ພໍໃຫ້ຮູ້ ຮ່ອນເບື້ອງ ວ່າໃຜແທ້ຖືກເສຍ
+ ເຂົາກ່າວເວົ້າ ຕ້ານຕໍ່ສຳມະເນນ
ອັນວ່າ ລາຊາຕັດ ແຕ່ເທິງລົງໃຕ້
ວ່າໃຫ້ປັ້ນເປັນສີ່ຊາ ຫາບາດຖ້ອນ ນຳມານອນມອບ ຈົວແລ້ວ
ບໍ່ໃຫ້ເອົາລື່ນນັ້ນ ຄອງຫ້າມບໍ່ຄວນ ວ່າດາຍ
+ ແຕນັ້ນ ຈົວກໍຟັງພາກຂໍ້ ພະອົງກ່າວຕັດສິນ
ຈົວຈຶ່ງເອົາບາດມາລຽນວາງ ຫ້າຫນ່ວຍລຽນກັນໄວ້
ແລ້ວກໍ່ເອົາຫົວຊາ ມາລຽນສີ່ຫນ່ວຍ
ຈົວເລົ່າບອກໃຫ້ເອົາປ່ອນໄວ້ ເຕັມນັ້ນຊູ່ອັນ
+ ຈົວຊື່ນຊ້ອຍ ໄຂບອກວາຈາ
ຖືວ່າມີໄຊມາ. ຮອດຕົນຄາວນີ້
ບັດນີ້ ລາຊາເຈົ້າ ເຫນືອຫົວພາຍໂພດ ເຮົາແລ້ວ
ອັນວ່າເຈົ້າ ແລະ ຂ້ອຍ ກໍເຫັນພ້ອມຊູ່ອັນ ແທ້ດາຍ
+ ເຈົ້າຫາກພາຍໂພດໃຫ້ ດູຊອບຄອງເມືອງ ຢູ່ແລ້ວ
ເມື່ອບໍ່ ໂດຍຄຳພະ ອາດຍາກໍ່ກົວຢ້ານ
ເມື່ອ ຈັກກາຍຄຳເວົ້າ ເຫນືອຫົວຊິກົ້ວໂກດ ບໍ່ຮູ້
ອັນນີ້ ເພີ່ນຫາກຕັດແຕ່ງໃຫ້ ປານນັ້ນກໍຫາກເອົາ ດອກແລ້ວ

+ ອັນວ່າໜ້ຽງສີ້ຊາ        ທ້າບາດເວີນພອງ
ແມ່ນວ່າລາຊາຕັດ        ກໍຊອບຄອງເມືອງຕັ້ງ
ເພີ່ນຫາກດູຕົນສູແທ້        ທັງຫລາຍຈຶ່ງຕັດຜ່ອນ
ເຫດວ່າ ຄວາມພັນເຂັດພອກພົ້ນ        ປານນັ້ນ ກໍຫາກຍອມ ດອກແລ້ວ
+ ແຕ່ນັ້ນ ເຂົາກໍ່ປາກບໍ່ໄດ້        ກັ້ນຢູ່ປານຕາຍ
ເມື່ອຈັກ ຈາໄປຫລາຍ        ຫາກແມ່ນຄວາມຈິງແທ້
ແຕ່ນັ້ນ ໄທຄົງຢ້ານ        ເຊັ່ນງຟ້າວຟັ່ງ
ເຂົາກໍ່ປິບ ແລ່ນເຕັ້ນ        ໜີແທ້ຈາກຈິງ
+ ແຕ່ນັ້ນ ເຂົາຈົ່ມໃຫ້        ຄຶດຄຽດໃນໃຈ
ບັດນີ້ ວາຍຄືວເຮືອນ        ລູກເມຍຊິເປັນຂ້ອຍ
ແຂງວ່າ ເຮົາໄດ້ເສຍແຕ່ໜ້ອຍ        ພໍຊິນຂວາຍຫາໃສ່
ແມ່ນວ່າ ເຮົາຈັກຄຶດຊອກໃຫ້        ແຫນໜີ້ກໍຍ່ອມເບົາ
+ ອັນນີ້ ຕັ້ງຫາກເວີນຄຳແທ້        ອະນັນເນກຫລືອຫລາຍ
ທ້າບາດ ມາຕອງພອງ        ລວດພໍເຕັມອັ້ນ
ຕັ້ງແມ່ນຫລືອແຮງແທ້        ບໍ່ຫານປອງປຸນປາກ ໄປແລ້ວ
ເສຍທັງ ໜ້ຽງສີ້ຊາ        ໃຫມລົ້ມຮີດຄອງ ແທ້ແລ້ວ
+ ຄຳນີ້ ລາຊາປົງແຕ່ງຕັ້ງ        ຊົງສັ່ງລົງມາ ແທ້ດາຍ
ຄວາມງ່າຍກາຍເປັນໜັກ        ຢ່າງບໍ່ຄອງເຄີຍຮູ້
ເຂົາກໍ່ ຂັງອຶກແຄນ        ກອງມະໂນຄຶດບໍ່ອອກ
ຕັ້ງຊິດັບແທ້ງ        ວາຍຂວ້າລູກເມຍ ແລນໍ
+ ເຮົາທັງມວນຊິໄດ້        ເປັນຂ້ອຍເພີ່ນນຳກັນ ແລນໍ
ບໍ່ຫລັງ ໄປປອງປຸກ        ແຕ່ງແປງເມືອງບ້ານ

ຊິເອົາຫຍັງມາໃຊ້ ແທນທຶນທີ່ຢືມເພິ່ນ ນີ້ເດ
ຄ້ອນວ່າ ເຂົາຈື່ມແລ້ວ ທັງແຄ້ນຫງ່ອມເຫງົາ ຫັ້ນແລ້ວ
+ ພວກເຂົາ ຄຶດຢາກເຕົ້າ ໄປຖວາຍບາດລາຊາ
ວ່າຢາກ ໄປທູນລາ ຕ່າວຄືນເມືອບ້ານ
ເຂົາກໍ່ພາກັນຂຶ້ນ ເມືອທູນພະບາດ
ພ້ອມກັນກົ້ມຂາບແລ້ວ ປະນົມນິ້ວນັ່ງເມືອງ
+ ຝູງຂ້າຈັກໄດ້ ລາບາດເຈົ້າ ເມືອສູ່ຄາເມ ກ່ອນແລ້ວ
ຄັນບໍ່ເປັນການສັງ ຊິຂາບລາວັນນີ້
ແຕ່ນັ້ນ ລາຊາເຈົ້າ ຖາມເຂົາໂດຍຮີບ
ສູກໍ່ ເສຍໂທດແລ້ວ ວາງໃຫ້ແກ້ຈົວ ແລ້ວລື
+ ເຂົາກໍ່ຮັບພາກຖ້ອຍ ຂານຕອບລາຊາ
ຝູງຂ້າ ເສຍເງິນຄຳ ມາກມາຍເຫລືອລົ້ນ
ຫມັ້ນຮຽງເສຍ ເຕັມສີ້ຊາ ທັງເງິນພອງເຕັມປາກ ພະເອີຍ
ຈົວຫາກ ໄຫມຫມູ່ຂ້າ ເຫມືອນບ້າບາບຫນາ ແທ້ແລ້ວ
+ ພວກເຂົາເສຍທ່າແທ້ ແບບບໍ່ເຄີຍເຫັນ
ຈັກແມ່ນກຳ ເວນສັງ ສິ່ງມາພານພໍ້
ຕັ້ງຫາກເຫລືອແຮງຮ້າຍ ຫມົດຄືວ ເຮືອນກໍ່ບໍ່ຖ່ອງ
ປົດຂອດຫມົດ ໃຫ້ກ້ຽງ ບໍ່ເຕັມຊ້າແຫ່ງຈົວ ພະເອີຍ
+ ຝູງຂ້າຄືຊິບໍ່ໄດ້ ເປັນຂ້ອຍເຈົ້າ ທັດຖະບາດເຫນືອຫົວ
ພະເອີຍ

ຈັກໄດ້ເປັນທາສາ ແຫ່ງຄົນເຂົາໃຊ້
ແຕ່ນັ້ນ ລາຊາທ້າວ ອີດູຕົນເຂົາກ່າວ

| | |
|---|---|
| ເຈົ້າກໍ່ ຄຶດຄຽດໃຫ້ | ຈິດນັ້ນມາກຫລາຍ |
| + ພະຈຶ່ງອານັດໃຫ້ (1) | ເຣວຣີບໄຂສາງ |
| ເອົາເງິນຄຳ | ຖອກເທທານໃຫ້ |
| ມອບແກ່ຝູງທວາຍຄ້າ | ເປັນທຶນສືບຕໍ່ |
| ພໍໃຫ້ລ້ຽງ ຊີບໄດ້ | ເມືອໜ້າຢູ່ເຢັນ ທັ້ນແລ້ວ |
| + ພະກໍ່ຄຽດໃຫ້ຈິດ ໂຫດຮ້າຍ | ລ້ຽວເຫລ່ວລັງຄວາມ |
| ບອກໃຫ້ ລາສິກຂາ | ອອກເປັນຊາວບ້ານ |
| ຍ້ອນວ່າ ຜິດຄອງເຄົ້າ | ບູຮານສອງສິ່ງ |
| ໄປຊອກໃໝ່ພໍ້ຄາ | ແນວນັ້ນທ່ອນຊິເປັນ |
| + ຕັ້ງຫາກຜິດຮີດບ້ານ | ຂຶງເຂດຄອງຈິດ ແທ້ແລ້ວ |
| ຍ້ອນວ່າ ໄປປັບໄໝ | ສິ່ງບໍ່ຄວນກະທຳແທ້ |
| ແຕ່ນັ້ນ ຈິດກໍໂດຍຄວາມເຈົ້າ | ລາຊາສິກອອກ |
| ມາໃຫ້ເອົາຮຽກເອີ້ນ | ວ່າຊຽງໜ້ຽງທົ່ວເມືອງ ທັ້ນແລ້ວ |
| + ຍ້ອນວ່າ ພົນເອົາໜ້ຽງ | ໄດ້ຈາກໄຫລັງ ປາງນັ້ນ |
| ຄົນກໍເມືອງມັນສຽງ | ເລົ່າລືເປັນເລື່ອງ |
| ແຕ່ນັ້ນ ຊຽງກໍ່ຈິ່ງເມືອຢູ່ບົວລະບັດເຈົ້າ | ສະເຫວີຍເມືອງຕົນພີ້ |
| ພະກໍ່ເລົ່າໃຊ້ ຊ່ວງເຂົ້າ | ໄປໄດ້ນອກໃນ |
| + ອັນວ່າ ໂຮງຫລວງກວ້າງ | ບາຄານທ່ອງທ່ຽວໄປ |
| ຝູງໝູ່ ຊາວນາງສະໜົມເທັນ | ກໍ່ຢອກໄຍທັງເຍີ້ຍ |
| ນາງນາດ ເທວີແກ້ວ | ຊຽງກໍ່ໄປໃຊ້ຊ່ວງ |
| ທຸກສິ່ງ ອັນເຮັດໃຫ້ | ສະແຫວງໃຊ້ຊູ່ວັນ |

(1) ອານັດ : ບອກ

\+ ແຕນັ້ນ ພະບາດເຈົ້າ ທິງລາດພະຍາເມືອງ
ພະກໍ່ຈຳ ບາສິກ ໃຫ້ຖືກຄອງຄຸນແກ້ວ
ຈຳໃຫ້ ຊຽງລາໄຫ້ ວາງສິນຕັດຂາດ
ແລ້ວອອກໄປແຕ່ງສ້າງ ເຮືອນຢ້າວຢູ່ເອງ ຫັ້ນແລ້ວ

## 5— ຊຽງໝ້ຽງເລືອກເອົາເມຍ

+ ຊຽງກໍເນົາຢູ່ຫ້ອງ ໃຊ້ຊ່ວງພະລາຊາ
ແມ່ນເຮັດການ ງານຫຍັງ ກໍບໍ່ມີຄວາມຄ້ານ
ນັບທັງ ວັນຄືນນີ້ ວັນຍາມເຊົ້າຄ່ຳ
ພະບາດເຈົ້າ ກໍ່ຄວນໃຊ້ແຕມັ້ນ ມັ້ນແລ້ວ
+ ແຕນັ້ນ ພະກ່າວຕ້ານ ຈາຕໍ່ຊຽງຫລວງ
ຍາມເມື່ອ ລາສິກຂາ ອອກເປັນຊຽງແລ້ວ
ມຶງຈຶ່ງເອົາເມຍຊ້ອນ ແປງຄອງຄາລະວາດ
ເຮັດໃຫ້ຄືເຜົ່າເຊື້ອ ຊາວບ້ານຊູ່ຄົນ ຊອບແລ້ວ
+ ແຕ່ນັ້ນ ຊຽງກ່າວຕ້ານ ຖະແຫລງຕອບຕາມຄວນ
ບອກວ່າ ຕົນຍັງທຸກ ຍາກແຄນຖຸງໄຮ້
ຊຽງວ່າ ເງິນບໍ່ມີພໍສ້ຽວ ຫມາຍເອົາລູກສາວເພິ່ນ
ເຂົ້າບໍ່ມີຢູ່ເລົ້າ ຊິຂັ້ນລ້ຽງແມ່ເມຍ ໄດ້ລີ
+ ຍາມເມື່ອຍັງທຸກໄຮ້ ໃຈຫາກຍັງອຸກ
ຮ່ຳຄະນຶງ ທາງໃດ ກໍ່ທີ່ຮຸນແຮງລ້າ
ເກືອບໍ່ມີພໍ້ຊາ ຊິຫມາຍຕຳປາແດກ
ຍັງວ່າເປັນນ້ອງພະເຈົ້າ ຊິອາຍຫນ້າໄພ່ເມືອງ ພະເຮີຍ
+ ພະກໍ່ປາກກ່າວຕ້ານ ຂານຕອບຄຳຊຽງ
ບໍ່ໃຫ້ມຶງເນົາອຸກ ສິ່ງໃດທາງນັ້ນ
ຄັນວ່າມຶງປະສົງແທ້ ສາວໃນໂຮງບໍ່ໃຫ້ແຕ່ງ
ຕັ້ງຫາກມີບໍ່ແພ້ ກູຊິໃຫ້ແກ່ມຶງ

+ ໃຫ້ມຶງເລາະລຽບຢ້ຽມ ຫລິງລ່ຳແລດູ ທັ້ນຖ້ອນ
ໃຜຫາກພໍໃຈມຶງ ວ່າຊິພໍເອົາໄດ້
ມຶງຈຶ່ງຄືນມາເວົ້າ ໄຂຄະດີຕາມຊື່
ພໍ່ຊິໄປກ່າວຕ້ານ ເອົາໃຫ້ແກ່ມຶງ ແທ້ແລ້ວ

+ ຊຽງຕອບຖ້ອຍ ຖວາຍລາດລາຊາ
ຂໍໃຫ້ທັນກັນມາ ສູ່ໂຮງພະຍາເຈົ້າ
ຕາງໃຫ້ມີຄວາມເວົ້າ ຫລາຍຄົນຄຶດຊ່ອຍ
ທໍ່ແຕ່ ຕົວຂ້ານ້ອຍ ບໍ່ຫານເວົ້າຮ່ວມນາງ ແທ້ແລ້ວ

+ ເມື່ອນັ້ນ ພະບາດເຈົ້າ ເອີ້ນຮຽກນາງສະຫນົມ
ໃຫ້ເຂົາພາກັນມາ ສູ່ໂຮງດຽວນີ້
ເຂົາກໍ່ໂດຍພະລັນຟ້າວ ນາງ ງາມທໍແຕ່ງ ມາແລ້ວ
ນົບນອບໄຫວ້ ທູນໄທ້ນົ້ງເມືອງ

+ ສາວເຫັນຊຽງຫນ້ຽງນ້ອຍ ໂສມຮູບເຮືອງງາມ
ພ້ອມພ່ຳກັນແຍງດູ ລູກພະຍາບໍ່ເຊົາໄດ້
ເມື່ອນັ້ນ ອົງກະສັດຕ້ານ ຈາສາວສະຫນົມນາດ
ໄຂເຫດໃຫ້ ພໍຮູ້ຮ່າງກະບວນ

+ ກູຮຽກສູມາທີ່ນີ້ ເພື່ອຖາມເບິ່ງໃຈຈິງ ທັ້ນແລ້ວ
ໃຫ້ສູຮົມເພິງຄິດ ຮ່ຳຄະນິງໃຈແຈ້ງ
ໃນຫມູ່ ຊຸມສາວໃຊ້ ທີ່ມາໂຮມກັນຢູ່ ທີ່ນີ້
ໃຜຜູ້ຍັງຢາກໄດ້ ຊຽງນ້ອຍໃຫ້ວ່າມາ ນັ້ນເນີ

+ ໃຜຫາກຄຶດຮ່ຳແລ້ວ ໃຫ້ຕ້ານກ່າວຄວາມຈິງ
ຄິດຄະນິງແນວໃດ ໃຫ້ບອກມາຈົ່ງແຈ້ງ

ໃຜຢາກເປັນເມຍທ້າວ ຮຽງສອງສົມຄູ່ ກັນນັ້ນ
ຈະສະໜຸກຢູ່ສ້າງ ເຮືອນຢ້າວແຕ່ງແປງ
+ ເຂົາກໍ່ກົ້ມຂາບໄຫວ້ ຖວາຍລາດລາຊາ
ເອົາແຕ່ ບູຮານເຄີຍ ແຕ່ງເຮືອນດອມທ້າວ
ບັດນີ້ ໃຫ້ຊຽງກໍາມີໄວ້ ທັງສອງທວາຍເບິ່ງ ດູຖອນ
ໃຜຫາກທວາຍຖືກນັ້ນ ອຸບາຍໃຫ້ ໃສ່ມື ເຈົ້າແລ້ວ
+ ເມື່ອນັ້ນ ສາວສີລຸກຂຶ້ນເວົ້າ ຂານຕອບລາຊາ
ບອກວ່າ ບາຄານກໍາ ໜ່ວຍມະນີນິນແກ້ວ
ສາວອື່ນພາກັນເວົ້າ ຕາມດັ່ງໃຈຄະນິງຄິດ
ເຫັນຢ່າງໃດກໍ່ເວົ້າ ເອົາແທ້ແຕ່ບຸນ ພະເຮີຍ
+ ສາວບາງສາວແກ່ນແກ້ວ ກໍ່ໄຂກ່າວຕາມຈິງ
ສາວແຫວນອາຈາໄຂ ພ່ຳພາກັນເວົ້າ
ບອກວ່າ ທ້າວຫາກກໍາເງິນໄວ້ ກໍາຄໍາໃຫ້ໄຂເບິ່ງ ທ້າວເຮີຍ
ບາບ່າວທ້າວ ຊຽງນ້ອຍບໍ່ໄຂ ແທ້ແລ້ວ
+ ຝູງໝູ່ສາວຫລ້າຊ້ອນ ສາວອ່ອນສາວຄໍາ
ພ້ອມພ່ຳພາກັນໄຂ ດັ່ງໃຈຄະນິງໄວ້
ສາວສີ ທັງສາວຫລ້າ ພາກັນທວາຍວ່າ
ເຈົ້າຫາກກໍາທ່ອນໄມ້ ຈັບໄວ້ຢູ່ມື ຫັ້ນແລ້ວ
+ ຄັນບໍ່ແມ່ນຊາດເຊື້ອ ດວງດອກມາລາ ທ້າວເຮີຍ
ຂໍໃຫ້ ໄຂມາດູ ຢ່າອໍາເອົາໄວ້
ແຕ່ນັ້ນ ຊຽງຫົວແລ້ວ ເຕີນສາວຝູງໃໝ່
ນາດທະນ້ອງ ນາງແກ້ວໃຫ້ຄ່ອຍທວາຍ

+ ສາວຈັນສາວສ່ອງແກ້ວ    ສາວຜ່ອງສາວທອງ

ຂໍຈົ່ງພາກັນທວາຍ    ຮ່ວມກັບສາວແຍ້ມ

ສາວກໍ່ພາທີຕ້ານ    ກັນທວາຍຫມົດຫມູ່

ໃຜກໍ່ເວົ້າ ບໍ່ຖືກຕ້ອງ    ບາທ້າວບໍ່ໄຂ ແທ້ແລ້ວ

+ ຍັງແຕ່ສາວອ່ອນນ້ອຍ    ຜູ້ດຽວຊື່ສະເຫນຫາ

ຊຽງກ່າວ ວາຈາຂານ    ບອກນາງນົງນ້ອງ

ຂໍເຊີນ ສະເຫນຫາແກ້ວ    ທວາຍມາລອງເບິ່ງ

ນາງວ່າ ເຈົ້າຫາກກຳແຂນສາວສ່ຳນ້ອຍ ເມຍແກ້ວບໍ່ວາງໄດ້ແລ້ວ

+ ເມື່ອນັ້ນ ຊຽງຊື່ນຊ້ອຍ    ຟ້ອນແອ່ນຕົບມື ແທ້ແລ້ວ

ບອກວ່າ ນາງທວາຍເຖິງ    ຖືກຄວາມຈິງແທ້

ຕັ້ງແມ່ນແນນນ້ຳມາວ    ກັນມາແຕ່ປາງກ່ອນ

ອັນນີ້ ຫາກແມ່ນເມຍແຕ່ຟ້າ    ແນນກ້ຽວກ່ອມລົງ ແທ້ແລ້ວ

ພະບາດເຈົ້າ    ຕ້ານຕໍ່ຊຽງຫລວງ

ບັດນີ້ ມຶງຊິເອົາຄົນດຽວ    ບໍ່ເອົາສອງຊ້ຳ ນັ້ນລື

ສາວຫາກມີຫລາຍແທ້    ເຕັມໂຮງຄັບຄັ່ງ

ທ້າວຢາກເອົາຕື່ມຊ້ອນ    ກູເຖົ້າບໍ່ຂືນ ທ້າວເຮີຍ

+ ເມື່ອນັ້ນ ຊຽງກ່າວຕ້ານ    ດອມພໍ່ພະຍາຫລວງ

ຄັນຫາກເອົາທັງສອງ    ກໍ່ຊິດີໃຈແທ້

ຜູ້ຫນຶ່ງ ເປັນເມຍນ້ອຍ    ປົວແປງໃຊ້ຊ່ວງ

ຜູ້ຫນຶ່ງ ເປັນແມ່ເຄົ້າ    ເປັນເຈົ້າແມ່ເຮືອນ ພໍ່ເຮີຍ

+ ຊຽງກໍ່ເລືອກໄດ້ແລ້ວ    ລາຈາກພູທອນ

ສ່ອນລອນນົບ    ຂາບລາພະອົງອາຍ

ນຳທາວເທົ້າ    ເຖິງເຮືອນໂຮງແມ່
ນົບນອບໄຫວ້    ຖວາຍໄທ້ ແມ່ເມືອງ
 + ວັນນີ້ພະບາດເຈົ້າ    ຕົນພໍ່ລາຊາ
ພະໄດ້ກູມາພາຍ    ໂພດເຮົາຈິງແທ້
ພະໄດ້ເອົາເມຍໃຕ້    ເປັນທານທັງຄູ່
ແມ່ວ່າ ດີເລີດລ້ຳ    ບາທ້າວຈິ່ງແມ່ນບຸນ ແທ້ນໍ
 + ບັດນີ້ສອງຫນໍ່ແກ້ວ    ລູກໄພ້ແມ່ແພງຖະຫນອມ ແມ່ເນີ
ຈົ່ງຮັກແພງເອົາກັນ    ຊ່ວຍຊູປອງສ້າງ
ຊຽງກໍ່ລີງແຮງສ້າງ    ປຸກໂຮງຫລັງຫນຶ່ງ
ກໍ່ບໍ່ໃຫຍ່ບໍ່ນ້ອຍ    ສະເຫນີດ້ານໄພ່ຊຸມ ນັ້ນແລ້ວ
 + ແຕ່ນັ້ນ ທ້າວກໍ່ບໍ່ຄົ້ງແຄ້ນ    ເນົາຢູ່ສະບາຍໃຈ
ບໍ່ຂາດແຄນອັນໃດ    ເຄື່ອງມືນວນພ້ອມ
ຢູ່ທ່າງ ພາເມຍສ້າງ    ປະຄອງເຮືອນຕຸ້ມຕໍ່
ຢູ່ສະຫນຸກ ຍິ່ງແມ້ງ    ໃຈຊ້ອນຊື່ນບານ ຫັ້ນແລ້ວ

## 6— ຢາກິນເຂົ້າແຊບຂອງຊຽງໝ້ຽງ

 + ແຕ່ນັ້ນ ຊຽງດ່ວນອັ້ນ    ຫາພີ່ຢູ່ໃນໂຮງ
ພີ່ກໍ່ ວາຈາຂານ    ຊື່ນຊົມດອມນ້ອງ
ຊຽງເອີຍ ອາຫານລົ້ນ    ເຕັມພາກິນບໍ່ແຊບ
ກູກໍ່ ກິນຊູ່ມື້    ບໍ່ຄືດ້ານດັ່ງຫລັງ ແທ້ນາ
 + ອັນວ່າ ຢາກິນເຂົ້າແຊບນັ້ນ    ມີບໍ່ລີໃດ

ຊຽງກໍວາຈາຂານ ວ່າມີຈິງແທ້
ມື້ອື່ນ ພະບາດເຈົ້າ ອິດເອົາຢ່າກິນເທື່ອ
ອິດຣອດຢາຫາກມາຣອດແລ້ວ ພະອົງເຈົ້າຈຶ່ງຄ່ອຍກິນ ແທ້ເນີ
\+ ຄ້ອມວ່າຊຽງກ່າວແລ້ວ ລາຈາກໂຮງຫລວງ
ເມືອຢູ່ເນົາໃນເຮືອນ ບໍ່ເຄືອງຄຳຮ້ອນ
ເຖິງເມື່ອວັນລຸນແລ້ວ ຄອຍຢາບໍ່ມາຮອດ
ພະກໍຄອງແຕ່ເຊົ້າ ເຖິງເທົ້າຮອດເພນ
\+ ຈິ່ງວ່າ ແສນແສບທ້ອງ ພະຍາເລົ່າເລີຍສະເຫວີຍ
ອາຫານເຕັມພານທອງ ກໍເລົ່າກິນຈົນກ້ຽງ
ພະກໍ ທຳພຽນຫຍ້າ ກິນລົງບໍ່ຮູ້ອີ່ມ
ທັງກ້ວຍອ້ອຍ ຂະຫນົມກ້ຽງບໍ່ຫລໍ
\+ ທຸກສິ່ງພະ ໂມ່ນຫຍ້າ ດູແຊບນົວຫລາຍ
ທັງສາລີມັນກໍ ຟັກແຟງແຕງເຕົ້າ
ພະກໍ ກືນກິນລົ້ນ ເຕັມປຸ້ມບໍ່ຮູ້ເມື່ອ
ຈົ່ງແມ່ນນົວແຊບແທ້ ກິນບໍ່ຮູ້ອີ່ມເປັນ ແທ້ແລ້ວ
\+ ຫລັງຈາກນັ້ນ ພະຍໍຍົກຄັນທີ
ຈິ່ງໃຈຄຶກ ດູດກືນກິນນ້ຳ
ແຕ່ວ່າ ຄອງຫາທ້າວ ຊຽງຫລວງບໍ່ມາຮອດ
ພໍເມື່ອເຖິງຕູດຊ້າຍ ຊຽງນ້ອຍກໍຈົ່ງມາ
\+ ພໍຊຽງຂຶ້ນສູ່ຫ້ອງ ສະຖານພໍ່ພະຍາເທັນ
ພະກໍປີປາຍຖາມ ວ່າຢາຍັງໄດ້ ນັ້ນລີ
ພູກໍຄອງຫາແທ້ ຕາເວນສວາຍລ້ຳຫ່ຽງ

ດູທີ່ອົດບໍ່ໄດ້ ກິນເຂົ້າກ່ອນມຶງ ແທ້ດາຍ
+ ຈັ່ງແມ່ນປະຫລາດແທ້ ກິນຫລາຍລື່ນທີ່ຫລັງ
ກູກໍ່ກິນຈົນຫມົດ ຊູ້ອັນຈົນກ້ຽວ
ຊຽງວ່າ ຢາກຈື່ງກິນນີ້ ກໍເປັນຢາອັນຫນຶ່ງ
ບໍ່ຢາກແທ້ ກິນເຂົ້າບໍ່ລົງ
+ ແມ່ນຊິເອົາ ໄມ້ຄ້ອນ ມາບຊູ້ຕົບຕີ
ກໍ່ບໍ່ມີໃຈອົດ ຢາກກືນລົງທ້ອງ
ອັນວ່າເປັນພະຍານີ້ ຄຳກິນກໍ່ໃຫ້ບອກ
ຍົດຫາກສູງສ່ຳນັ້ນ ພະຫຍາຊ້ຳບໍ່ມີ ນັ້ນລີ
+ ຊຽງກໍ່ວ່າ ທີ່ນີ້ ລຸກຮີບລົງຫນີ
ນຳທາງເມືອ ສູ່ເຮືອນນອນລີ້
ພະຍາເລີຍໃຈຮ້າຍ ຄະນຶງດູແຄ້ນຄຶ່ງ
ກູກໍ່ຖາມຊື່ແທ້ ມາເວົ້າອວດເຊີງ ແທ້ນໍ
+ ຊື່ພະຍາ ກູນີ້ແຜ່ກວ້າງ ທົ່ວທັງໂລກເກັ້ງຂາມ
ບັກອັນນີ້ສັງຊິມາພາໂລ ຫລອກລວງກູຫລິ້ນ
ຄວນທີ່ຕັດສິນຂ້າ ໃຫ້ສິ້ນຄວາມເຄັ່ນຄຽດ
ຖີ້ມຄາບໄຫລລ່ອງນ້ຳ ໄປໄດ້ຈັ່ງຊິສົມ ແທ້ແລ້ວ
+ ພະຍາຄຽດເຄັ່ງຮ້າຍ ຄິດຢູ່ສາມວັນ
ຄິດຮອດອົງລາຊາ ພໍ່ພະອົງສອນໄວ້
ຄຳສັ່ງ ບິດາຕ້ານ ເປັນຄຳຫນັກຍິ່ງ ແທ້ດາຍ
ພໍ່ໄດ້ ສອນສັ່ງໃຫ້ ທົນກັ້ນຮ່ຳຄະນຶງ
+ ເພິ່ນວ່າ ຜູ້ມີໂທດນັ້ນ ແມ່ນຜູ້ນັ້ນເປັນເສິກ

ມາຍາດ ຊິວໂອຫັວ    ປາບເມືອງຕີປຸ້ນ
ອັນວ່າໂທດ ທີ່ຊຽງກະທຳນີ້    ບໍ່ຫນັກປູນປານປຽບ ໄດແລ້ວ
ສັງຊິມາ ຄິດຂ້າ    ໄຫລນ້ຳລ່ອງນະທີ
+ ກູນີ້ ເປັນຊາດເຊື້ອ    ແນວຫນໍ່ນາມກະສັດ
ຄວນທີ່ ຈົງໃຈຄິດ    ຮ່ຳຄະນຶງຈົງແຈ້ງ
ແປງຈິດໃຈ ບໍ່ຮີບຮ້ອນ    ຄະນຶງດູຖ້ວນຖີ່
ອັນໃດດີ ຈຶ່ງສ້າງ    ກະທຳໄວ້ໃຫ້ທ່ຽງທຳ ຊອບແລ້ວ

## 7— ຊຽງໝ້ຽງຕີຊ້າງພະຍາ

+ ມື້ຫນຶ່ງ ພະຍາໃຫ້ເຂົາໄປເລືອກຊ້າງ ເປັນທີ່ນັ່ງຄະລະ
ເຂົ້າມາ ໂຮມສະຫນາມຫລວງ    ສູ່ເຂົາຊຸມຊ້າງ
ແຕ່ນັ້ນ ເຂົາເລົ່າໄປເລືອກໄດ້    ພາຍວັນຊ້າງໃຫ່ຍ
ມີຮູບ ງາມຍິ່ງລ້ຳ    ອິນແຕ້ມດັ່ງດຽວ
+ ທັງຫູຫາງ ພ່ຳພ້ອມ    ງາມຍິ່ງງອງງາ ຈິງແລ້ວ
ງາມແຕ່ ຕາຈົນຫລັງ    ລ່ຽນສະເຫມີເຫມືອນແຕ້ມ
ຂົນກໍ່ດົກ ດີລ້ວນ    ທັງນອນຈົ່ງແມ່ນຄ່ອງ
ຍາມເມື່ອ ທົງເຄື່ອງຢ້ອງ    ແຂວນແກ້ວແຮ່ງຊິງາມ
ດອກແລ້ວ

+ ຄວນປະດັບເຄື່ອງຢ້ອງ    ຫົວສະອາດເວີຍງາ
ເອົາໄປຖວາຍ ພະຍາ    ຂີ່ທົງທຽມໄທ້
ແຕ່ນັ້ນ ເຂົາກໍ່ນຳເອົາຊ້າງ    ເມືອຖວາຍພະບາດ
ອັນວ່າ ຊຽງຫມ້ຽງ ມັນບໍ່ຊ້າ    ມາຢ້ຽມເບິ່ງດູ

+ ມັນຈິ່ງຕີ ຖະແຫລງແລ່ນກ້ຽວ ວຽນເບິ່ງສາມທີ

ແລ້ວຈິ່ງ ວາຈາຂານ ກ່າວຄຳແຄວນທ້ວງ

ບອກວ່າ ຫູຫາງພ້ອມ ງວງງາ ກໍດູອາດ ອີ່ຫລີແລ້ວ

ຕີແຕ່ຕາ ມັນຫາກມາໜ່ວຍນ້ອຍ ຫາຊ້ຳພັດບໍ່ມີ ນີ້ມາ

+ ຂົນກໍ ເສັ້ນນ້ອຍໆ ບໍ່ສົມເພດພາຍສານ ແທ້ນາ

ມີແຕ່ ເລົາລຳຂາ ໃຫ່ຍຍາວງາມແທ້

ສ່ວນວ່າ ຕາມັນນັ້ນ ຄວນເປັນທໍ່ຫມາກເວື່

ອັນນີ້ ຕານ້ອຍໆ ບໍ່ສົມແທ້ທໍ່ຕົວ ແທ້ແລ້ວ

+ ຊາດທີ່ ງົວຄວາຍລ້າ ຕາກໍໃຫ່ຍສົມຕົວ ແທ້ນາ

ຫລຽວເບິ່ງດູ ໄປຫາ ກໍໃຫ່ຍດີພໍດ້າມ

ທາງພະຍາເມືອງໄດ້ ຟັງຄວາມຊຽງວ່າ

ພະກໍເຫັນ ພ່ຳພ້ອມ ວ່າຊຽງເວົ້າຖືກກະບວນ ແທ້ແລ້ວ

## 8— ໄປໃຫ້ບ່າລາຊະຄູ

+ ຄັນຫາກ ຄິດຖີ່ແທ້ ກໍຄືແມ່ນຄວາມຊຽງ

ທໍ່ວ່າ ມັນຫາກມາລັງຄວາມ ຢູ່ບໍ່ຄືຄົນເວົ້າ

ແຕ່ນັ້ນ ຍັງມີລາຊະຄູເຈົ້າ ນໍລະນາລົດຊິ່ວ ໄປແລ້ວ

ຍ້ອນວ່າ ເຖົ້າແກ່ຮ້າຍ ຊະລາລ້າລ່ວງເຖິງ

+ ບໍ່ແມ່ນມີພະຍາດຮ້າຍ ມາບຽດບຽນຕົນ

ຕັ້ງວ່າ ສັງຂານຫມົດ ກໍຈິ່ງມໍລະນາມ້ຽນ

ລາຈາກ ເມືອງຄົນຂຶ້ນ ສະຫວັນພົມເທວະໂລກ

ແຕ່ບໍ່ມີ ພີ່ນ້ອງ ພົງເຊື້ອລ່ຳຄອຍ

+ ຕັ້ງວ່າ ສິນເພດແທ້ ພໍເວທະນານຳ ແທ້ແລ້ວ
ຍາມເມື່ອ ມໍລະນາຕາຍ ກໍບໍ່ມີໃຜໄທ້
ແຕ່ນັ້ນ ລາຊາໃຊ້ ຊຸມນາງສະໜົມໜຸ່ມ
ວ່າໃຫ້ ໄປໄຫ້ຫາທ່ານເຈົ້າ ລາຊະຄູເຖົ້າຮາກເມືອງ
ແດ່ຖອນ

+ ແຕ່ນັ້ນ ເຂົາກໍໂດຍບາດເຈົ້າ ກົ້ມຂາບພະຍາເມືອງ
ແລ້ວກໍໄປວອນເຖິງ ຮອດຊາຍຊຽງໝັ້ນຽງ
ໃຫ້ພໍ່າ ໄປເຖິງຫ້ອງ ອາຮາມຫລວງວັດໃຫ່ຍ
ມາຊ່ວຍ ກົ້ມຂາບໄຫວ້ ສິບເຈົ້ານັ່ງປະນົມ
+ ແຕ່ນັ້ນ ນາງສະໜົມກ່າວຕ້ານ ຈັບຈຶ່ມກັບຊຽງ
ວ່າບໍ່ຫານ ພາກັນ ກັນເທຫວງໄທ້
ເຫດວ່າ ບໍ່ແມ່ນແນວນາມເຊື້ອ ນານດາພໍ່ແມ່ ເຮົາດາຍ
ຍ້ອນພະຍາ ສັ່ງໃຫ້ ເຮົາແທ້ກໍຈຶ່ງມາ ດອກນາ
+ ລາງພ່ອງ ອິດຮ່າວໄທ້ ລາງພ່ອງຍັງຫົວ ກໍມີ
ເຫດວ່າ ບໍ່ແມ່ນພົງພັນຕົວ ບໍ່ຢາກເຮຮິນໄທ້
ນາງສະໜົມພ້ອມ ລົງຄວາມກອຍກ່າວ
ນວນຂ້ອຍ ເຊີນທ່ານທ້າວ ຊຽງໝັ້ນຽງ ໄຫ້ຮ່ວມກັນ ແດ່ຖອນ
+ ແຕ່ນັ້ນ ຊຽງກ່າວຕ້ານ ຂານຕອບສາວສະໜົມ
ວ່າພະຍາ ຈຳນາງ ຊູ້ຄົນມາໄທ້
ບໍ່ໄດ້ ຈຳເຮົານີ້ ມາໂຮມໄທ້ຮ່ວມ ກັນດາຍ
ເຮົາຊິມາ ຮ່ວມໄທ້ ນຳເຈົ້າ ຫ່ອນຊິເປັນ
+ ແຕ່ວ່າ ສາວສະໜົມພໍ່າພ້ອມ ວອນຫນ່ຽວນຳຊຽງ

ຊຽງກໍອາງ ຕົວເສີຍ　　　　ບໍ່ອາຈາຕ້ານ
ສາວສະໜົມ ວອນນ້ອມ　　　　ນຳຊຽງຫລາຍເທື່ອ
ຄັນວ່າ ເຈົ້າໄຫ້ແລ້ວ　　　　ຕູ້ຂອຍຊິໄຫ້ນຳ ດອກນາ
+ ແຕ່ນັ້ນ ຊຽງອີ່ດູ ພວກນ້ອງ ນ້ອຍໜຸ່ມ ນາງສະໜົມ
ຊຽງກໍຈຶ່ງ ອາຈາຂານ　　　　ຕອບຊຸມນາງນ້ອຍ
ຜີວ່າ ເຮົາຫາກເຮັດສິນໃດແທ້ ສູຊິໂດຍນຳໜ່ອມ ຈິງລື
ຄັນວ່າ ຊຽງໄຫ້ແລ້ວ　　　　ສູເຈົ້າຊິໄຫ້ນຳ ແທ້ລື ?
+ ເຂົາກໍ ພ້ອມພໍ່ເວົ້າ　　　　ຂານຕອບຄຳດຽວ
ວ່າໃຫ້ ບາຄານພາ　　　　ບອກວິທີທາງໄຫ້
ນ້ອງຊິພາກັນໄຫ້　　　　ຄືກັບອ້າຍພີ່
ຕາມພະຍາບອກໄວ້　　　　ວັນນັ້ນຊູ້ອັນ ພີ່ເອີຍ
+ ແຕ່ນັ້ນ ຊຽງກໍກົ້ມໂກ່ງໂກ້ຍ ເອົາຫົວທົ່ງລົງດິນ
ປະປ່ອຍ ໂຄຍຫົງຫຳ　　　　ຢ່ອນລົງເປັນພົ້ວ
ຊຽງຊ້ຳ ເອົາມືຕ້ອງ　　　　ໄປມາກົວດແກ່ວງ
ເອົາມື ແທງພາດຕ້ອງ　　　　ພວງພົ້ວແກ່ວງໄກວ
+ ແລ້ວເລົ່າດົ່ນໆດົ້ນ　　　　ຮ້ອງຮ່ຳເຕັ້ນແຮງ
ອ້າປາກ ໂອຍໆສຽງ　　　　ກ່າວເຮຮົນຮ້ອງ
ແນບແຫຍ່ ໄກວທົ່ງລີ້ນ　　　　ຄືງຕາອ້າປາກ
ແລ້ວຈຶ່ງ ຮ້ອງຮ່ຳໄຫ້　　　　ສຽງລົ້ວລັ່ນລົວ
+ ວ່າພະຊາພໍ່ເຈົ້າ　　　　ມໍລະນາດຕາຍໜີ ແລນໍ
ຍັງບໍ່ທັນ ມີເມຍ　　　　ຊິກອດນອນຕອມຕຸ້ມ
ບວດແຕ່ ຍາມຍັງນ້ອຍ　　　　ບໍ່ທັນເຫັນຫລັງເຕົ່າ

ຕາຍຜູ້ດຽວລ້າງ    ໃຜບໍ່ໄຫ້ຮຸ່ງນຳ
+ ຕົວຫາກ ຕາຍຄັກແລ້ວ    ຫນັງແຫ່ວທຳຫົດ ແທ້ນໍ
ເສຍດາຍ ທຳທັງໂດຍ    ຊິເປື່ອຍໄປເສຍລ້າ ແລນໍ
ນາງສະຫນົມຟັງແລ້ວ    ພາກັນຫົວອະເຫີ່ຍ
ມາຮ່າວເວົ້າ ດັ່ງນີ້    ເປັນຫນ້າບໍ່ຢາກຟັງ ແທ້ນໍ
+ ຊຽງຫມ້ຽງ ເຫັນດັ່ງນັ້ນ    ກໍຮ້າຍດ່າທັງຕີ ຫັ້ນແລ້ວ
ລາງພ່ອງ ຄຳຄິງເຈັບ    ໄຄ່ພອງຮອຍແສ້
ລາງພ່ອງ ຫນັງພອງແປ້ວ    ຫົວໂນເຈັບປວດ
ເຂົາກໍ ຮ້ອງຮ່ຳໄຫ້    ດັງກ້ອງຂ່ວງກະດີ ຫັ້ນແລ້ວ
+ ເພື່ອວ່າ ເຈັບບາດຄ້ອນ    ບັກຊຽງໄລ່ໂຈມຕີ
ລາງພ່ອງ ເປັນຮອຍນູນ    ເລືອດແດງເຕັມເນື້ອ
ລາງພ່ອງ ປິບໂຕນຟ້າວ    ຄໍຕີນຄົ້ນປວດ
ເຂົາຈຶ່ງ ເມືອກາບໄຫວ້    ພະຍາເຈົ້າຊາບນຳ ຫັ້ນແລ້ວ
+ ພະພໍ່ ບອກຂ້ານ້ອຍ    ຝູງຫມູ່ຊາວສະຫນົມ
ຝູງຂ້າ ໂດຍທຳຕາມ    ພໍ່ພະຍາຈາຕ້ານ
ພາກັນເດີນໄປໄຫ້    ຫາພະຄູມໍລະນາດ
ຕູ້ຂ້າ ໄປພ່ຳພ້ອມ    ກັນແທ້ຊູ້ຄົນ ພະເອີຍ
+ ແຕ່ວ່າ ຊຽງຫມ້ຽງຮ້າຍ    ກົ້ວໂກດໂກຫາ
ແລ້ວກໍ່ ມາໂຈມຕີ    ທຸກຄົນຝູງຂ້າ
ມັນກໍ່ ບາຍເອົາຄ້ອນ    ຕີຈົນເຈັບແສບ
ພວກຂ້າ ທົນບໍ່ໄດ້    ກໍເລີຍໄຫ້ຫອດແຮງ ພະເອີຍ
+ ຕູກໍ່ ຈຶ່ງເອົາກັນໄຫ້    ຫມົດຫມູ່ແຊວງ ນັ້ນແລ້ວ

ເພາະວ່າ ຊຽງໝ້ຽງມັນມາຕີ　　ແກ່ວງຕະບອງເປັນຄ້ອນ
ຕີທາງຫລັງທາງໜ້າ　　ມູມໃນເຈັບປວດ
ພວກຂ້າ ທົນບໍ່ໄດ້　　ກໍເລີຍໃຫ້ແລ່ນມາ ນີ້ແລ້ວ
　+ ແຕ່ນັ້ນ ພະບາດເຈົ້າ　　ຈາຕໍ່ນາງສະໜົມ
ສູຫາກ ທຳອັນໃດ　　ໃສ່ຊຽງຈົນຮ້າຍ
ມັນຈຶ່ງ ຕີສູໄດ້　　ເຄືອງໃຈເຈັບປວດ ແນວນີ້
ແຕ່ກ່ອນ ຊຽງໝ້ຽງນີ້　　ເຂົາຍ້ອງວ່າດີ ແທ້ນາ
　+ ນາງສະໜົມ ຕອບຕ້ານ　　ກົ້ມກາບວັນທາ
ພວກຂ້ານີ້ ບໍ່ໄດ້ອາຈາຂານ　　ແລະກະທຳແນວຮ້າຍ
ຊຽງຫາກ ບາຍເອົາຄ້ອນ　　ມາຕີຟົງຟາດ
ພວກຂ້າ ເຈັບປວດຮ້າຍ　　ກໍເລີຍໄດ້ແລ່ນມາ ນີ້ແລ້ວ
　+ ແຕ່ນັ້ນ ພະພໍ່ເຈົ້າ　　ອົງອາດລາຊາ
ພະຍາ ວາຈາຂານ　　ບອກຊຸມຄົນໃຊ້
ວ່າໃຫ້ ໄປທັນທາວ　　ຊຽງຫລວງຮີບດ່ວນ
ໃຫ້ຮີບມາ ພົບພໍ້　　ພະຍາເຈົ້າທ່ຽວພະລັນ
　+ ເມື່ອນັ້ນ ຝູງຂ້າໃຊ້　　ທູນບາດລາຊາ
ເຂົາກໍພາກັນປົບ　　ແລ່ນໄປທົງຟ້າວ
ໄປຮອດ ຕົວຊຽງໝ້ຽງ　　ກໍວາຈາຕ້ານກ່າວ
ໃຫ້ເຈົ້າ ຈົ່ງຮີບຟ້າວ　　ໄປເຝົ້າພໍ່ພະຍາ ທ່ຽວເທີ້ນ
　+ ແຕ່ນັ້ນ ຊຽງບໍ່ຂືນບາດເຈົ້າ　　ເລີຍຮີບເດີນໄປ
ຊຽງຄະນຶງໃນໃຈ　　ຮ່ຳຮອນ ເຫັນແຈ້ງ
ວ່າແມ່ນ ນາງສະໜົມໜ້າ　　ພາກັນຟ້ອງກ່າວ ຫັ້ນແລ້ວ

ພະຍາ ຟັງເຂົາກ່າວເວົ້າ ຈຶ່ງມາເອີ້ນຮອດເຮົາ ແທ້ແລ້ວ

+ ພໍເມື່ອ ມາຮອດຫ້ອງ ຜາສາດນົມທຽມ

ພໍ່ພະຍາ ເລີຍຖາມ ດັ່ງຊຽງຄະນຶງແທ້

ນຶງກໍເປັນສັນໃດແທ້ ຈຶ່ງຕີເອົາສະຫນົມຫນຸ່ມ

ຊຽງເອີຍ

ສັ່ງວ່າ ເຈັບບາດຄ້ອນ ຮອຍແສ້ຊູ້ຄົນ ແທ້ດາຍ

+ ແຕ່ນັ້ນ ຊຽງຫມ້ຽງກົ້ມກາບໄຫວ້ ຮັບພາກພູບານ

ນ້ອງບາດ ໂດຍຄຳພະ ອາດຍາເປັນເຈົ້າ

ວ່າໃຫ້ພານາງ ສະຫນົມໄປໄຫ້ ຫາຄູພະປູ່ ພາຍພຸ້ນ

ເຂົາກໍ ຫາກເຊີນ ຂ້ານ້ອຍ ອວນໄຫ້ຊູ່ຄົນ ພະເອີຍ

+ ຂ້າບໍ່ຂືນ ພາກຖ້ອຍ ເຂົາວິ່ງວອນຂໍ

ແລ້ວກໍ ພາກັນໄປ ຮອດອົງພະຄູເຈົ້າ

ແລ້ວກໍ ຍົມມະນາໄຫ້ ສະແດງຄວາມທຸກໂສກ

ແຕ່ວ່າ ເຂົາເຫລົ່ານັ້ນ ພັດຫົວຈົ້ນຊື່ນຊົມ

+ ອັນຫນຶ່ງເຂົາໄປເຫັນບ່າວນ້ອຍ ນັ່ງຕໍ່ແຍກັນ ພະເອີຍ

ເຂົາກໍ ພາກັນຫົວ ລວດບໍ່ມີໃຜໄຫ້

ເຂົາກໍ ຫາກຍິນສະຫນຸກຮູ້ ວາຈາເວົ້າມ່ວນ

ເຂົາກໍ ຍູທ່າງເວົ້າ ຊິເປັນຊູ້ຊູ້ຄົນ ພະເອີຍ

+ ລາງພ່ອງ ຈັບຈ່ອງມື້ວ ຊັບຊື່ນ ຄວາມລະຫັດ ກໍມີ

ລາງພ່ອງ ດຶງເອົາແຂນ ກອດຄໍຊົມແກ້ມ ກໍມີ

ລາງພ່ອງ ກຸມໆຄົ້ນ ບາຍນົມຫລາຍເທື່ອ ກໍມີແລ້ວ

ຂ້າບາດ ອົດບໍ່ໄດ້ ຈຶ່ງບາຍແສ້ໃສ່ຫລັງ ພະເອີຍ

+ ເຂົາບໍ່ເຮັດ ດັ່ງເຈົ້າ    ພະຍາສັ່ງສອນໄປ ພະເອີຍ

ບອກບໍ່ຟັງ ຄວາມດີ    ຂ້າຈິ່ງມີໃຈຮ້າຍ

ຈົນໄດ້ບາຍເອົາແສ້    ຕີໄປເຂົາຈິ່ງຢ່າ

ເຂົານີ້ ສາໂຫດແທ້    ໃຜຫ້າມກໍ່ບໍ່ຟັງ ພະເອີຍ

+ ເມື່ອນັ້ນ ພະຍາກໍກິ້ວໂກດໃຫ້ ຝູງໝູ່ນາງສະໜົມ ມາກແລ້ວ

ດີທີ່ວ່າ ຊຽງຝັນຫົວເສຍ    ສຳແດງຊິມາໄຫ້

ອັນວ່າ ເຂົາຝູງນີ້    ເປັນຍິງໂຖງໂລກ ອີຫລີແລ້ວ

ເຂົານີ້ ຕັ້ງວ່າມາຖ່ອຍແທ້    ຈັບເຂົ້າໃສ່ຄຸມ ຄອບດາຍ

+ ຄ້ອນວ່າ ພະດ່າແລ້ວ    ແລ້ວເລົ້າກະເຈົ້າໃຈ

ພະກໍ ບອກໃຫ້ທັນເສນາ    ຊູຄົນມາພ້ອມ

ໝົດທຸກຄົນມາເຝົ້າ    ພະຍາເມືອງນົບບາດ

ພ້ອມນັ່ງ ຟັງພໍ່ເຈົ້າ    ຊິປົງຖ້ອຍສັ່ງຄວາມ ຫັ້ນແລ້ວ

+ ເມື່ອນັ້ນ ພະບາດເຈົ້າ    ໄຂກ່າວວາຈາ

ບອກເສນາ ທັງຫລາຍ    ຊູອັນເອົາຕ້ານ

ໃຫ້ຮ່ວມກັນໄປສ້າງ    ສິ່ງສະການພະຄູປູ່

ເຮັດໃຫ້ງາມຊູດ້ານ    ລືມດ້ານຊື່ສຽງ

+ ເຂົາກໍ ໂດຍອາດເຈົ້າ    ພະບາດລາຊາ

ຝູງເສນາ ທັງຫລາຍ    ເລີກລາເມືອບ້ານ

ໄປຮ່ວມມືກັນສ້າງ    ທຳຕາມຄຳສັ່ງ

ເຂົາກໍ່ຕົກແຕ່ງທາງ    ຫໍແກ້ວສິ່ງສະການ

+ ຄ້ອນວ່າ ເສັດສິ້ນແລ້ວ    ທຸກສິ່ງບໍລະບວນ

ເຂົາກໍເວນ ກອງທານ    ດັ່ງຮີດຄອງມີໄວ້

ຄັນວ່າ ບໍລະບອນແລ້ວ ເອົາກັນລາເລີກ
ໃຜກໍເມືອ ສູ່ຫ້ອງ ເຮືອນຢ້າວແຫ່ງຕົນ
+ ແຕນັ້ນ ພະຍາກໍຄ້ຽວຄາບໝ້ຽງ ເໝືອນດັ່ງເຄີຍກິນ
ຊຽງກໍເລົ່າ ກິນນຳກັນ ດັ່ງພະຍາປູ້ນຄຽວ
ແຕ່ວ່າ ໃນໃຈນັ້ນ ຢາກຫາຄວາມມາດ່າ
ສຽດພະຍາໃຫ້ຮູ້ ວ່າຊຽງໝ້ຽງ ດ່າໂຕ
+ ມັນເລົ່າ ເອົາຫໍ່ໝ້ຽງ ຍັດໃສ່ຕົ້ນສົບ
ທັງເລົ່າ ເອົານ້ຳໝາກຫາ ຕື່ມແຖມຍັງແກ້ມ
ແຕນັ້ນ ພະກໍຈິ່ງຫຼິງດູໜ້າ ເຫັນຊຽງແກ້ມໃຫຍ່ ໄປນັ້ນ
ເຈົ້າກໍມີ ອາດຫ້ອງ ອົມໝ້ຽງ ໂພດເຫວີ ແຫ້ນໍ
+ ຫຼຽວເບິ່ງ ແກ້ມແກ່ນເຫຼື້ອມ ເໝືອນດັ່ງດວງມະນີ
ແກ້ມເຄັ່ງ ໂພງຄືຜີ ແບບເປັນຕາຢ້ານ
ມຶງຈຶ່ງ ແຍງຍັງແກ້ມ ຂອງກູລອງເບິ່ງ ດູທ້ອນ
ມັນເຄັ່ງ ຕຶງຫຼາກເຫຼື້ອມ ສະເໜີດ້ານດັ່ງມຶງ ບໍ່ເດ
+ ແຕນັ້ນ ຊຽງກ່າວຕ້ານ ຂານຕອບລາຊາ
ແກ້ມພະຍາ ກໍຫາກຮີງໆໃສ ດັ່ງຫຳໝາເຖົ້າ ນັ້ນແລ້ວ
ແຕນັ້ນ ເຮັງໂຍເຈົ້າ ຈອມເມືອງຄຶດຄຽດ
ກໍເລົ່າ ນາບເພັ້ງ ຈາຂ້າຜູກຕີ
+ ມຶງສົງມາຖ່ອຍຮ້າຍ ຖຽງຕອບຄວາມກູ ນີ້ນໍ
ກູຊິເອົາ ຕາວຕັດ ປາກຄຳມຶງຖິ້ມ
ແຕນັ້ນ ຊຽງກໍຖວາຍກອນໄຫວ້ ພູມີກົ້ມຂາບ
ທານໂທດຖ້ອນ ໃສເຫຼື້ອມດັ່ງນໍ ນັ້ນແລ້ວ

## ໑— ຕົວະພະຍາກິນຂີ້ແຮ້ງ

+ ແຕ່ນັ້ນ ພະຍາຫລວງເຈົ້າ ຄະນຶງຮ່ຳພິຈານ
ບັດນີ້ ກູຈັກພິໃຫ້ພະຫຍາມັນລຶດ ລຸ່ຍລົງຈົມກຽງ
ກູຈັກ ພິປອງໃຫ້ ພະຫຍາຊຽງຕົກຕ່ຳ ເສຍແລ້ວ
ບໍ່ໃຫ້ ມັນສະຫລາດຮູ້ ສະເຫນີດ້ານດັ່ງຫລັງ ນັ້ນແລ້ວ
+ ບັດນີ້ ກູຈັກໃຫ້ເຂົາເອົາຍັງແຮ້ງ ມາແກງອ່ອມໃຫ້ຊຽງກິນ
ກ່ອນແລ້ວ
ມັນກໍ່ຈັກ ຕົກເສື່ອມຊາມຈິດ ລຸ່ຍພະຫຍາລົງແທ້
ເຫດວ່າ ແຮ້ງນີ້ ເປັນສັດຖ່ອຍຮ້າຍ ກິນຂອງເຫມັນເນົ່າ
ກູຈັກເຮັດໃຫ້ ມັນມີປັນຍາລຸ່ຍປູ້ ບໍ່ແວວເວົ້າ ດັ່ງຫລັງ ກ່ອນແລ້ວ
+ ແຕ່ນັ້ນ ພະຍາກໍ່ຈຶ່ງຈຳເຂົາຊອກໃຫ້ໄດ້ ແຮ້ງໃຫ່ຍມາຖວາຍ
ເຂົາກໍ່ໂດຍລາຊາ ຊອກເອົາມາໄດ້
ພະຍາກໍ່ຈຶ່ງ ແກງຕົວແຮ້ງ ຂົນຂວາຍຫາໃສ່
ມີຫົວຫມາກ ພິກນ້ອຍ ເກືອພ້ອມເຄື່ອງຫອມ
+ ຄັ້ນວ່າ ປຸງແຕ່ງແລ້ວ ເອົາໃສເຫີງພາ
ຕັ້ງກໍ່ ຫາແນວດີ ສະອາດຂາວຫອມເຂົ້າ
ແລ້ວກໍ່ເຊີນ ຊຽງຫມັ້ນຽງ ໄປໂຮງມະຫາລາດ
ພະບາດ ຈຶ່ງຮັບລ້ຽງ ອາຫານຊອຍແຊບນົວ
+ ແຕ່ນັ້ນ ຊຽງກໍ່ຄຶດສະຫລາດຮູ້ ຢ້ຽມຢັ່ງໃນຈິດ
ບັດນີ້ ຄວນກູເມືອໂຮງຫລວງ ເຝົ້າພະຍາເມືອງເຈົ້າ
ຄັນວ່າ ວາຈາແລ້ວ ເດີນພະລັນຟ້າວຟັ່ງ

ໄປຮອດ ພະບາດເຈົ້າ ຖະຫນອມກົ້ມຂາບພະນົມ

+ ແຕນັ້ນ ພະບາດເຈົ້າ ໄຂກ່າວກອນຖາມ

ມຶງໄດ້ ທັນກິນງາຍ ຫລືວ່າ ຍັງຊຽວນ້ອຍ

ຊຽງກໍ່ຍໍມືນ້ອມ ວາຈາຕ້ານຕອບ

ບອກດ້ວຍ ຄວາມນອບນ້ອມ ພະຍາເຈົ້າວ່າຍັງ

+ ຂ້າກໍ່ຫາກ ມາແຕ່ເຊົ້າ ບໍ່ທັນຢາກກິນສັງ ພະເອີຍ

ຫລອນວ່າ ພະມີອາຫານ ຊິຢູ່ຄອງຕົວຂ້າ

ກໍ່ຈຶ່ງ ໄດ້ເຮອພະລັນຟ້າວ ມາເປືອງເຖິງບາດ ພາຍພີ້

ຂ້າຂໍ ອະນຸຍາດເຈົ້າ ບໍ່ທັນໄດ້ຮັບປະທານ ແທ້ແລ້ວ

+ ແຕນັ້ນ ພະບາດເຈົ້າ ໄຂກ່າວວາຈາ

ກູກໍ່ ສະເຫວີຍງາຍໄວ ແຕ່ຍາມຍັງເຊົ້າ

ກູສະເຫວີຍ ແກງຊົ້ວ ກຸດໂຕຕົວໃຫ່ຍ ຊຽງເອີຍ

ຕັ້ງວ່າ ແຊບແທ້ງ ກູນີ້ ຫາກອີ່ມເສຍ ດອກນາ

+ ອາຫານ ຍັງມາກລົ້ນ ເຫລືອຢູ່ໃນພາ

ມຶງຈຶ່ງ ໄປກິນສາ ແຕ່ເມືອແກງຍັງຮອນ

ຄິດເຖິງມຶງ ເຫລືອລົ້ນ ຈຶ່ງຈຳຄົນໄປບອກ

ບັດນີ້ ມາຮອດແລ້ວ ໃຫ້ມຶງຟ້າວຮິບກິນ ນັ້ນທ້ອນ

+ ແຕນັ້ນ ຊຽງຫມ້ຽງມັນບໍ່ຊ້າ ເຮອຮິບໄປກິນ

ບໍ່ຄິດວ່າ ໃຜທິງສາ ຊິບຽດຕົວລວງລ້ຽລ

ມັນກໍ່ຢຽວວ່າ ພະຍາຫລວງເຈົ້າ ລາຊາຕົນພີ້

ຮັກນ້ອງແກ້ວ ສະເຫນີດ້ານດັ້ງຕາ ນັ້ນດາຍ

+ ຍາມເມືອ ກິນຢູ່ນັ້ນ ບັກຊຽງຕື່ນໃນໃຈ

ຮ້ອຍວ່າ ພະຍາລວງຕົວະ　　　ບອກໃຫ້ກູກິນແຮ້ງ

ພະຍາກໍ່ມາພອຍເລົ່າ ຈຳໃຫ້ກູກິນແກງແຮ້ງ ຕົວຫລວງຊີ້ນຫຍາບ

ເຈົ້າກໍ່ຕົວະວ່າ ແມ່ນແກງໄກ່ແທ້　　　ບັກຊຽງຫມັ້ນຽງ ກໍ່ຈຶ່ງກິນ

+ ຕັ້ງວ່າ ຊີ້ນຫຍາບຮ້າຍ　　　ຄາວຍິ່ງແສນຖະຫນັດ ມາກແລ້ວ

ອັນນີ້ ບໍ່ໃຊ່ຂອງຄົນກິນ　　　ເງື່ອນຫມູຫມາຮ້າຍ

ຫຍາບກໍ່ຫາກ ທຳພຽນຄ້ຽວ　　　ກິນລົງຫລາຍເທື່ອ ເລີງແລ້ວ

ຕັ້ງຫາກ ດູບໍ່ແຊບແທ້　　　ກໍ່ເລີຍລ້າງສ່ວຍມື

+ ຮີບເອົານ້ຳລ້າງປາກແລ້ວ　　　ຊຽງກໍ່ຍ່າງເດີນຫນີ

ເຮວຮີບຈົກເອົາຄຳ　　　ຫມາກມາປຸ້ນຄ້ຽວ

ບໍ່ລ່ຳແລ ພາເຂົ້າ　　　ຄາວເຫມັນແຫນງຫນ່າຍ

ໃຈຄິດຄຽດຄັ່ງແຄ້ນ　　　ທົນໄວ້ກໍ່ບໍ່ໄຫວ

+ ແຕ່ນັ້ນ ພະຍາຖາມກ່າວເວົ້າ　　　ແຊບບໍ່ຊຽງເອີຍ

ກູຕັ້ງ ຈິງໃຈຄຶດ　　　ແຕ່ງແປງປະສົງລ້ຽງ

ເຮັດໃຫ້ ມຶງກິນແລ້ວ　　　ຄະນຶງດູຖ້ວນຖີ່

ອັນວ່າ ແກງໄກ່ເຖົ້າ　　　ຕົວນີ້ອ່ອນນົວ ບໍ່ເດ

+ ເມື່ອນັ້ນ ຊຽງຕອບຖ້ອຍ　　　ຮັບພາກລາຊາ

ຕັ້ງຫາກ ດູ ເຄັນເສຍ　　　ຫຍາບຄາວເຫລືອລົ້ນ

ຕັ້ງວ່າ ບໍ່ເປັນກິນແທ້　　　ອົດເອົາໄປເທຖອກ ເສຍທ້ອນ

ໄປໃຫ້ຫມາ ຂີ້ເຮື້ອນ　　　ກິນແທ້ກໍ່ຈຶ່ງສົມ ພະເອີຍ

+ ແຕ່ນັ້ນ ພະຍາຫລວງກ່າວຕ້ານ　　　ຂານບອກຍັງຊຽງ
ທັ້ນແລ້ວ

ຕັ້ງແມ່ນຂອງກິນດີ　　　ທີ່ມຶງຄວນຍ້ອງ

ກູຜິປອງ ເອົາໄດ້ ມາຄືວແສນຍາກ
ອັນນີ້ ຕົວວ່າແມ່ນແກງໄກ່ຜູ້ ຕົວຮ້າຍຢູ່ບົນ ນັ້ນແລ້ວ
+ ມັນນັ້ນ ຕົວແມ່ນ ແຮ້ງ ຫົວບໍ່ມີຂົນ

ມັນຊອກກິນ ຍັງເປັດ ໄກ້ງົວຄວາຍມ້າ
ສັດທີ່ຕາຍ ໄປແລ້ວ ຕົວມັນເຫມັນສາບ
ອັນວ່າ ຝູງຫມູ່ຊາກເນົ່າຮ້າຍ ເອົາຊ້ຳແຮ່ງສະແຫວງ ທ່ານເອີຍ
+ ມັນກິນຊາກສັດເນົ່າຮ້າຍ ມັນຈຶ່ງກີ່ນຄາວເຫັມນ

ກູຊອກເອົາ ມັນມາ ແຕ່ງຄືວຄາວນີ້
ຕັ້ງແມ່ນໃຈປະສົງແທ້ ດັດແປງໃຫ້ມຶງຈື່
ກູກໍ່ຈຶ່ງ ໄດ້ເອົາແມ່ແຮ້ງ ແກງຂ້າແມ່ພະຫຍາ ແທ້ແລ້ວ
+ ບັດນີ້ ມຶງໄດ້ກິນແກງແມ່ແຮ້ງ ຕົວຊົ່ວເລວຊາມ ຈັງແລ້ວ

ມັນຈະແປງໃຈມຶງ ໃຫ້ຈື່ຈຳເອົາໄວ້
ຮູ້ວ່າ ປັນຍາສ້ຽມ ຂອງມຶງແຕ່ເມື່ອກ່ອນ
ພະຫຍາມຶງ ລຸ່ຍສ້ຽງ ບໍ່ເລີງລ້ອນດັ່ງຫລັງ ອີກແລ້ວ
+ ແຕ່ນັ້ນ ຊຽງຫມ້ຽງອົດຄັ່ງແຄ້ນ ຄຽດເຄັ່ງໃນມະໂນ

ມັນຈື່ຈຳໃນໃຈ ແຕ່ບໍ່ອາຈາຕ້ານ
ອັນວ່າ ພະຍາຫລວງນີ້ ຊັ້ງກູເປັນຂະຫນາດ ແລ້ວນໍ
ບັດນີ້ ກູຈັກຄຳຂາດໃຫ້ ຂຶ້ນຊ້ຳສັ່ງມື ກ່ອນແລ້ວ
+ ແຕ່ນັ້ນ ຊຽງກໍ່ເລົ່າລາຈາກຫ້ອງ ຫນີຕ່າວເມືອເຮືອນ

ໃຈຄຽດເຄັນ ຄະນຶງຄຶດ ຈົ່ມພຸມພຳຮ້າຍ
ບັດນີ້ ສັງບໍ່ຄຶດແຕປີຕາເຈົ້າ ນໍລະນາຕາຍຈາກ ຄາວນັ້ນ
ພະກໍ່ ຫາກສອນສັ່ງໃຫ້ ຄຳຮູ້ຕໍ່ກູ ແທ້ເດ

+ ສັງບໍ່ຄຶດວ່າ ສອງກ່ຳພ້າ ແຂງເຂື່ອນເມືອງຫລວງ ດັ່ງນັ້ນ

ຄົນວ່າ ມີໃຈຮັກ ແຕ່ງກູເປັນນ້ອງ

ອັນນີ້ ຕັ້ງວ່າປອງພິ້ຂາ ຍັງກູກັບອາດ ຈິງນໍ

ສັງບໍ່ຄຶດວ່າ ສອງກ່ຳພ້າ ຊິເອົາລ້ຽງພ່ຳກັນ ນັ້ນເດ

+ ຊາດທີ່ ຫນໍປົວຫລ້າງ ຍັງລ້າງສ່ວຍຂຶນຄຸນ ແທ້ດາຍ

ກູຊິມາມົວອົດ ຕໍ່ໄປບໍ່ມີໄດ້

ຈຳຕ້ອງຫາ ທາງໃຊ້ ລືມໄປສະຫນອງຕອບ

ຈື່ງຈະຫາຍ ສ່ວາງໄຂ້ ໃນເນື້ອຢູ່ເຢັນ ແທ້ແລ້ວ

+ ຄ້ອນວ່າ ຊຽງຈື່ມແລ້ວ ຕົ້ນສົ້ມປ່ອຍສະທົວ

ຕັກອາບ ທັງຕີນຕົວ ສ່ວຍສີ ສົງລ້າງ

ພໍໃຫ້ຫາຍ ໂພຍຕ້ອງ ອົນຕາຍບັງບຽດ

ຂໍໃຫ້ ມີພະຫຍາແກ້ກາ ທະວີຂຶ້ນກວ່າຫລັງ ແດ້ທອນ

+ ແຕ່ນັ້ນ ຊຽງຫມ້ຽງກໍ່ຈົ່ງໄປເກັບເອົາຂີ້ແຮ້ງ ມາຕອກເປັນສີ
ຫັ້ນແລ້ວ

ຊຽງກໍ່ຈົ່ງ ນຳເມືອຖວາຍລາຊາ ພະຍອດເມືອງເປັນເຈົ້າ

ແຕ່ນັ້ນ ພະຍາກໍ່ຈົ່ງບາຍດູແລ້ວ ໃສງາມກ້ຽງກ່ອງ

ກໍ່ຈົ່ງ ອອກປາກຕ້ານ ຖາມຊັ້ນໂຈດຊຽງ

+ ຊຽງເອີຍ ມຶງຫາກໄປຮ່າວໄດ້ ສີທີ່ທາງໃດ ນັ້ນເດ

ຕັ້ງຫາກງາມ ໃສສຸດ ດັ່ງຄືສີແກ້ວ

ແຕ່ນັ້ນ ບາຖະແຫລງຖ້ອຍ ວາຈາຕ້ານຕອບ

ແມ່ນໄທຄວາຍພໍ່ຄ້າ ເອົາຕ້ອນຮັກແພງ ພະເອີຍ

+ ຂ້າກໍ່ນຳ ດຸ່ງດັ້ນ ມາຖວາຍພື່ພະຍາຫລວງ

ໃຫ້ພະຍາເອົາໄປ ຂີດຂຽນພຽນໃຈ ທັນທ້ອນ

ແຕ່ນັ້ນ ພະຍາກໍຈຶ່ງບາຍເອົາສໍຂຽນແຕ້ມ ດູຂຽນຂີດບໍ່ອອກ

ສິ້ນຕົວວ່າແຂວງພອກພັ້ນ ປະມານແທ້ກໍເລົາເລຍ

+ ພະຍາກໍຫາກເລຍເລື້ອຍໆ ແລ້ວເນັ້ນນໍ້າລີວຂຽນ

ເນັ້ນນໍ້າແຮງ ປານໃດ ກໍແກ່ນແຂວງບໍ່ຂຽນໄດ້

ສຸດແຕ່ເລຍໆເລື້ອຍ ກໍຍັງແຂວງຂຽນບໍ່ອອກ

ພະກໍເຫັນ ປະຫລາດແທ້ ສິແນວນີ້ກໍຮ່າວມີ ແທ້ນໍ

+ ພະຈຶ່ງຊໍ້າ ກ່າວຖ້ອຍ ຈັ່ນໂຈດຖາມຊຽງ

ອັນວ່າ ສິ່ງສັງ ວ່າເປັນແນວນີ້

ກູກໍເລຍ ສຸດແຮງແລ້ວ ເອົາຂຽນຂີດບໍ່ອອກ ຊຽງເອີຍ

ກູບໍ່ມີທ່ອນຮູ້ ອີສັງແທ້ກໍບໍ່ຄື

+ ແຕ່ນັ້ນ ຊຽງຕອບຕ້ານ ຮັບພາກລາຊາ

ຂ້າບາດ ກິນຕົວມັນ ພີ່ພະຍາພັດກິນຂີ້

ຂ້າກໍ ໄປທ່ຽວເກັບເອົາຂີ້ແຮ້ງ ມາປຸ້ນແປງຕອກ

ເຮັດເປັນສໍ ມາຖວາຍພະພີ່ເຈົ້າ ແທນໃຫ້ສິ່ງຄຸນ ພະເອີຍ

+ ລອງເບິ່ງ ພະຍໍາເກົ້າ ຊິສະຫລາດພຽງໃດ

ນີ້ແມ່ນລອງປັນຍາ ຍອດພະຍາເປັນເຈົ້າ

ຍັງວ່າ ເປັນພະຍາລໍ້າ ສະເຫວີຍເມືອງທີ່ວແທ່ນ

ມາຄ່ວາ ກິນຂີ້ແຮ້ງ ຂະຍອນຊໍ້າພອກບໍ່ອາຍ ແທ້ນໍ

+ ຜູ້ກິນຕົວ ແມ່ແຮ້ງ ກໍຍັງເບິ່ງພໍຄວນ ພະເອີຍ

ແມ່ນຊິຄາວ ເຄັມເຫມັນ ກໍຫາກໄຄແຄນແທ້

ຜູ້ທີ່ເປັນ ພະຍາແລ້ວ ຄວນລະວັງແວນຖີ່ ພະເອີຍ

| | |
|---|---|
| ອັນນີ້ ຕັ້ງວ່າເກັບເອົາກ້ອນຂີ້ແຮ້ງ | ກິນແທ້ກໍ່ບໍ່ຄວນ |
| + ໃຜຜູ້ກິນຂີ້ແຮ້ງ | ຕົວຜ່ອນເສຍສັກ ມາກແລ້ວ |
| ເໝືອນດັ່ງ ເດຍລະສານ | ບໍ່ໃຊ່ຄົນຈິງແທ້ |
| ບັດນີ້ ຢ່າໄດ້ພິປອງໃຫ້ | ເຫີງສາບັງບຽດ ໃຜເດີ |
| ບາດວ່າ ຂືນຄາດໃຫ້ | ຍັງຊິແມ້ງກ່ວາຕົວ ພະເອີຍ |
| + ພະຍາ ຮູ້ດັ່ງນັ້ນ | ກໍ່ກີ້ວໂກດໃນໃຈ ແທ້ແລ້ວ |
| ຄິດວ່າ ຊິປອງປຸນລົບ | ກວາດພະຫຍາເພມ້າງ |
| ໃຫ້ພະຫຍາຊຽງຫມ້ຽງ | ທະລາຍລົງກ້ຽງມຸ່ນ |
| ເລີຍເລົ່າ ຕົກບາດຊາ | ເສຍຫນ້າຄອບເຂົາ ແທ້ແລ້ວ |

## 10— ຊຽງຫມ້ຽງຕີສາວສະຫນົມ

| | |
|---|---|
| + ຄ້ອນວ່າ ຊຽງກ່າວແລ້ວ | ມັນເລີກລາລົງ |
| ເຖິງເຮືອນຕົນ | ນັ່ງນອນບໍ່ມີຮອນ |
| ແຕ່ນັ້ນ ພະຍາຫລວງເຈົ້າ | ລາຊາຄິດຄຽດ |
| ກໍ່ຈິ່ງ ມີອາດໃຫ້ | ສາວໃຊ້ຫມູ່ສະຫນົມ |
| + ບັດນີ້ ສູຈົ່ງໄປຂີ້ໃສ່ເຮືອນ | ບັກຊຽງຫມ້ຽງ ຫມົດທຸກບ່ອນ |
| | ໃຫ້ມັນເຕັມ ທີ່ວນັ້ນ |
| ທຸກຕັ່ງຕຽງ ຫົວຫມອນ | ເສື່ອນອນຫົວມຸ້ງ |
| ທຸກທີ່ວເຮືອນ ໃຫ້ມີຂີ້ | ເຫມັນຄາວຄຸງເມກ |
| ແລ້ວຈິ່ງຄືນ ສູ່ຫ້ອງ | ໂຮງກວ້າງບອກກູ ທ່ຽວເທີ້ນ |
| + ແຕ່ນັ້ນ ສາວຊ່ວງໃຊ້ | ໂດຍອາດພະຍາຫລວງ |

| | |
|---|---|
| ເຂົາກໍ່ພາ ກັນໄປ | ສູ່ເຮືອນຊຽງຫມັນຽວ |
| ຄັນວ່າ ໄປເຖິງແລ້ວ | ສາວສະຫນົມເລີຍບອກ |
| ບັດນີ້ ພະບາດເຈົ້າ | ຈຳຂໍ້ໃສ່ເຮືອນ ວ່ານາ |
| + ແຕ່ນັ້ນ ຊຽງຕອບຖ້ອຍ | ຖາມຫມູ່ສາວສະຫນົມ |
| ຈອມຫົວ ມີກູມາສັນໃດ | ໃຫ້ບອກມາຈິງແຈ້ງ |
| ເມື່ອນັ້ນ ສາວສະຫນົມພ້ອມ | ປົງຄວາມບົນບອກ |
| ພະຫາກ ມີອາດຍາມາທີ່ນັ້ນ | ຈຳຂໍ້ສົ່ງດຽວ ທ່ານເອີຍ |
| + ແຕ່ນັ້ນ ຊຽງຕອບຖ້ອຍ | ເວົ້າຕໍ່ສາວສະຫນົມ |
| ຂ້ອຍກໍ່ ໂດຍຄຳພະ | ອາດຍາບໍ່ຂືນໄດ້ |
| ສູຈົ່ງ ເອົາກັນຂີ້ | ຕາມຄວາມພະຍາກ່າວ ນັ້ນທ້ອນ |
| ເມື່ອວ່າ ເຮົາບໍ່ໂດຍອາດເຈົ້າ | ກໍ່ກົວຍ້ານໂທດມີ ແທ້ນາ |
| + ແຕ່ນັ້ນ ເຂົາກໍ່ເອົາກັນໄປທ່ຽວຂີ້ | ລົງໃສ່ເຮືອນຊຽງ ຫັ້ນແລ້ວ |
| ທົ່ວຢ່ຽວລົງ ເຕັມເຮືອນ | ປຽກອືນດູຮ້າຍ |
| ບາງພ່ອງ ຄາກຂີ້ເທີ່ແລ້ວ | ໄອຈານນ້ຳລາຍຖົ້ມ |
| ເປັນທີ່ກາຍ ລື່ນຂີ້ | ພະຍາເຈົ້າສົ່ງມາ ແທ້ແລ້ວ |
| + ຊຽງກໍ່ ຈັບຄ້ອນໄດ້ | ຂ້ຽນຕ່ອຍຕີລົງ |
| ສູນີ້ ຕັ້ງຫາກກາຍຄວາມພະຍາ | ສົ່ງມາຈິ່ງແທ້ |
| ພະຍາບອກມາຂີ້ | ເປັນສົ່ງສູມາຢ່ຽວ |
| ກູຊິຕີ ຕອບໃຫ້ | ສູ້ຮ້ອນເນື່ານຸ່ມ ກ່ອນແລ້ວ |
| + ພວກເຂົາ ກໍ່ຈິ່ງຢ້ານ | ຟ້າວແລ່ນໂຕນເຮືອນ ຫັ້ນແລ້ວ |
| ສີ້ນຂາດ ເປັນຍອຍຕົກ | ຈາກຄິງດູຮ້າຍ |
| ປະເປີດໄປ ແປນກົ້ນ | ແປນໄປຫມົດທຸກບ່ອນ |

| | |
|---|---|
| ບາງພ່ອງ ສິ້ນຂາດຕົກຈາກກົ້ນ | ແປນເນື້ອແລ່ນໜີ ຫັ້ນແລວ |
| + ປະປ່ອຍ ຫົວເຕົ່ານ້ອຍ | ເຕົ່າໃຫ່ຍຍືນຍາວ |
| ບາງພ່ອງ ໂຮຍແຮງອິດ | ເມື່ອຍຈົນນອນລົ້ມ |
| ບາງພ່ອງ ສົບຕຳຕ້ອງ | ກົມດິນຄາບຂີ້ຝຸ່ນ |
| ບາງພ່ອງ ຕຳໃສ່ໄມ້ | ໄຫລລົ້ນເລືອດແດງ |
| + ບາງພ່ອງ ປົບປ່ອງຟ້າວ | ຕຳແມ່ປະຕູເຮືອນ |
| ຫົວໂນນູມ | ເນົ່າໃນຈົນໄຫ້ |
| ເຂົາກໍ່ ຍິນກົວຢ້ານ | ຊຽງຕີປົບແລ່ນ ໜີແລ້ວ |
| ອັນວ່າ ສຽງໂຫ່ໄຫ້ | ຫົວພ້ອມສະນັ່ນເນືອງ |
| + ແຕ່ນັ້ນ ເຂົາຈຶ່ງເມືອໄຫວ້ທ້າວ | ທູນບາດພະຍາເມືອງ |
| ຖວາຍຄຳຄວນ | ຊູ່ອັ້ນເອົາຕ້ານ |
| ບັດນີ້ ຈອມຫົວໃຊ້ | ຕູທັງຫລາຍໝົດໝູ່ |
| ວ່າໃຫ້ ພາໝູ່ພ້ອມ | ໄປຂີ້ໃສ່ເຮືອນ ວ່າດາຍ |
| + ຝູງຂ້າ ໂດຍອາດເຈົ້າ | ຢຳຂະໝ່ອມບໍ່ມີຍືນ |
| ກໍຫາກ ພາກັນໄປ | ຂີ້ໃສ່ເຮືອນຊຽງໝັ້ນຽງ |
| ບັດນີ້ ຊຽງໄດ້ຕີຝູງຂ້າ | ທັງຫລາຍໝົດຄູ່ ຄືນແລ້ວ |
| ຕັ້ງວ່າ ຫລັງແຕກຍ້ອຍ | ຮອຍແສ້ເລືອດໄຫລ. ພະເອີຍ |
| + ຝູງຂ້າ ພ້ອມພໍ່ຢ້ານ | ຊຽງໄລ່ຈຳຕີ |
| ພາກັນ ໂຕນເຮືອນໜີ | ແລ່ນຄືນພາພີ້ |
| ມັນນັ້ນ ຮຸນແຮງແທ້ | ຈິດໃຈຫີນະໂຫດ ພະຍາເອີຍ |
| ມັນໄລ່ຕີ ພວກຂ້າ | ເຈັບແຄ້ນເນົ່ານູມ ແທ້ແລ້ວ |
| + ແຕ່ນັ້ນ ພະບາດເຈົ້າ | ກິ້ວໂກດໂກຫາ |

ກໍຈຶ່ງ ບອກໃຫ້ທັນຊຽງມາ	ສູ່ກູດຽວນີ້
ເຂົາກໍ່ ໂດຍຄວາມເຈົ້າ	ເຣວພະລັນເລີຍແລ່ນ
ຮອດທີ່ ຊຽງໜັ້ນຽງແລ້ວ	ຂານເວົ້າຊູ້ອັ້ນ
+ ບັດນີ້ ພະບາດໃຊ້	ພວກເຮົາດ່ວງເດີນມາ
ບອກໃຫ້ຊຽງໄປຫາ	ພໍ່ພະຍາດຽວນີ້
ຈຶ່ງຮີບເຣວ ພະລັນແທ້	ເດີນໄປພ້ອມພ່ຳ ເຮົານີ້
ຢ່າໄດ້ ມົວຢູ່ຊ້າ	ກົວຢ້ານໂທດມີ ທ່ານເອີຍ
+ ແຕ່ນັ້ນ ຊຽງຕອບຖ້ອຍ	ໂດຍລາດລາຊາ
ມັນກໍ່ເຣວ ພະລັນເມືອ	ພ່ຳໂດຍຄືນໃຊ້
ຄັນວ່າ ເຖີງໂຮງກວ້າງ	ປະນົມກອນກົ້ມຂາບ
ແຕ່ນັ້ນ ພະບາດເຈົ້າ	ບຸນກວ້າງກໍ່ເລົ່າຖາມ
+ ເປັນຫຍັງ ນຶ່ງຈຶ່ງໄດ້	ຕີຫມູ່ນາງສະຫນົມ ຊຽງເອີຍ
ເຂົານັ້ນ ຟັງຄວາມກູ	ກໍຈຶ່ງໄປແນວນັ້ນ
ຕັ້ງວ່າ ເປັນຮອຍແສ້	ຫນັງພອງຊຶ່ນຂາດ ໄປນັ້ນ
ລາງຄືນ ຫລັງບາດ ຫ້ວນ	ຮອຍແສ້ເລືອດໄຫລ ແທ້ນາ
+ ຊຽງນີ້ ຕັ້ງຖ້ອຍແທ້	ບໍ່ຮູ້ຮ້ອນຄອງຂຸນ ແທ້ນໍ
ວ່າບໍ່ຈຽມ ຕົວເຂົາ	ແຕ່ກູກໍ່ຄວນຢ້ານ ແດ່ຕີ
ນຶ່ງນີ້ ເປັນຄືນດີ	ສັນດານແນວຖ້ອຍ ຈິງແລ້ວ
ເຮັດສິ່ງ ແນວຊົ່ວຮ້າຍ	ບໍ່ຢຳຢ້ານຢ່ອນກູ ແທ້ນໍ
+ ແຕ່ນັ້ນ ຊຽງກໍ່ຮັບພາກຕ້ານ	ຂານຂອບລາຊາ
ຂ້າຈັກ ຖວາຍຄະດີກອນ	ຈຶ່ງຟັງດູຂໍ້
ເຂົາຫາກ ກາຍຄຳເຈົ້າ	ເໜືອຫົວປົ່ງອາດ ຍານັ້ນ

ພະຫາກ ບອກແຕຂໍ້ ເຂົານັ້ນຫາກລືມຄວາມ ແທ້ດາຍ
+ ກໍ່ຫາກ ກາຍຂໍ້ແລ້ວ ຊ້ຳພັດຢ່ຽວແກມຕິດ ພະເອີຍ
ທັງເລົ່າ ຖົມລາຍລົງ ຄາກເທີ່ແກມດູຮ້າຍ
ຜິວ່າ ມີແຕ່ພາກັນຂໍ້ ບໍ່ທຳໄປແນວອື່ນ
ຂ້າຊິ ປະປ່ອຍໃຫ້ ກະທຳໄດ້ບໍ່ວ່າສັງ ພະເອີຍ
+ ອັນນີ້ ເຂົາຫາກໂພດກະດ້ ເຮັດຫລາຍຫລາກຕາມໃຈ
ຕັ້ງຫາກ ກາຍຄຳພະ ບອກສອນຈິງແທ້
ມັນທັງຕິດ ທັງຂໍ້ ທັງໄອທັງຢ່ຽວ
ເຮັດຊູ່ອັ້ນ ອ່ວຍຮ້າຍ ເຫລືອລົ້ນລືນປະມານ
+ ຂ້າໄດ້ ຫ້າມຈ້ອຍໆ ເຂົາກໍ່ບໍ່ຟັງຄວາມ
ຕັ້ງວ່າ ໃຈຈອງຫອງ ບໍ່ແຕ່ງ ຕາມພະຍາເວົ້າ
ແຕ່ນັ້ນ ພະຍາ ກໍຫາກຊຸກໆແລ້ວ ຫິວແກມຄວາມປາກ
ກູໄດ້ບອກ ບໍ່ຜ້ຽນ ເສຍແລ້ວແມ່ນຄວາມ ແທ້ນໍ
+ ຜິວ່າ ຄິດຖີ່ແທ້ ກໍ່ຄືແມ່ນຄວາມຊຽງ ຢູ່ແລ້ວ
ທໍ່ວ່າ ກູຫາກໂກຫາຫລົງ ບໍ່ບອກເຂົາຕົງຖ້ອນ
ແຕ່ນັ້ນ ຊຽງກໍ່ລາລົງຫ້ອງ ທໍ່ປາງພາສາດ
ກັບຕ່າວ ເມືອຢູ່ຫ້ອງ ເຮືອນຢ້າວຢູ່ສະບາຍ ຫັ້ນແລ້ວ

11— ເກບຄົບປາກແວ່ງມາຖ້າຊາບ

+ ແຕ່ນັ້ນ ພະຍາກໍ່ຄຶດຢາກຜູກແທ້ ມັນຜອກຫລອນຄວາມ ແທ້ດາຍ

ບັດນີ້ ກູຈັກຕຶຣະນຶງຫາ ເຫດຈັກມີເນື້ອໜ້າ
ແຕ່ນັ້ນ ຊານມິນເຈົ້າ ພະຍາຫລວງຫັກແປ່ ເສຍແລ້ວ
ພະຈຶ່ງ ມີອາດໃຊ້ ຊຽງໝ້ຽງເບິ່ງແປງ
+ ບັດນີ້ ຊານຫລວງລົ້ມ ຈົນກົນແຕກຫັກເພ ເສຍແລ້ວ
ບອກໃຫ້ ຊຽງໄປຫາ ປາກວ່ານມາພຽນຄ້ຳ
ແຕ່ນັ້ນ ຊຽງຄະນຶງຮູ້ ໃນໃຈແຈ້ງສະຫລາດ
ມັນຈຶ່ງ ລາພະບາດເຈົ້າ ເດີນຟ້າວຟັ່ງໄປ
+ ມັນຈຶ່ງ ແຍງເຂດດ້າວ ບ້ານນອກຄາເມ
ໄປຊອກເອົາ ຄົນສິບ ແວ່ງມາຫລາຍລົ້ນ
ບອກວ່າ ລາຊາໃຫ້ ສູເນືອຄ້ຳສຶກ ຊານແລ້ວ
ແຕ່ນັ້ນ ເຂົາກໍ່ຄຶດຍາກແທ້ ແຕ່ຊຽງໝ້ຽງຫາກບອກໄປ
+ ມັນໄປເກນ ເອົາຫລາຍໝູ່ບ້ານ ໄດ້ຮອດຊາວຄົນ
ລ້ວນແຕ່ ເປັນຄົນສິບ ແວ່ງຈິນແປນແຂ້ວ
ພໍເມື່ອ ເດົາດາແລ້ວ ຊຽງກໍ່ພາດັ້ນດ່ວນ
ຖືຫາບ ເດີນຍ່າງຍ້າຍ ນ່ຳກົ້ນຫລັ່ງໄປ ແທ້ແລ້ວ
+ ພໍເມື່ອ ໄປຮອດຫ້ອງ ນະຄອນແຫ່ງພະຍາຫລວງ
ເຂົາກໍ່ ເດີນເປັນແຖວ ຕໍ່ກັນຍາວກ້ວາງ
ພວກເຂົາ ຍົນຍ້າຍ ກາຍເດີນລ້ຳລ່ວງ
ຝູງປະຊາລາດຫ້ວງ ທັງຄ້າຍປະຫລາດໃຈ ແທ້ແລ້ວ
+ ດູທີ່ຊຽງ ໝ້ຽງໄປຊັກຊາ ເຫິງໜ່ວງດົນນານ
ຂຸນໃຫຍ່ ປົວແປງ ຫລ່ອຍຄອງຈົນແລ້ວ
ຫວັງຊິເຫັນ ຊຽງໝ້ຽງ ເອົາມາໄມ້ປາກວ່ານ

ພະຍາຄອງຊູມື້ ຊຽງຫມັ້ນຮຽງກໍ່ບໍ່ມາ

+ ແຕ່ນັ້ນ ລາຊາເຈົ້າຈິນຈື່ມເວົ້າ ຄຶດຄຽດໃນໃຈ

ກູກໍ່ຈຳມັນໄປ ຕັ້ງແຕ່ດົນນານແລ້ວ

ຮ້ອຍທີ່ ມັນໄປຫລິ້ນ ເປັນຄວາມກັບກ່າຍ ເສຍແລ້ວ

ຄວນກູ ຈັກຈຳຈື່ໄວ້ ຄາຊີ້ຖົມໃສ່ຄໍ ບໍ່ຢ່າແລ້ວ

+ ບັດນີ້ ຈັກກ່າວເຖິງ ຊຽງຫມັ້ນຮຽງເຈົ້າ ກັບຕ່າວຄືນມາ ກ່ອນແລ້ວ

ມັນກໍ່ພາຄົນສິບ ແວ່ງມາຫລາຍລົ້ນ

ເຮັດໃຫ້ ຄົນຊາວບ້ານ ເມືອງມັນຫົວຊ່າ

ຫົວວ່າ ຄົນແບບນີ້ ຊິມາໃຊ້ຈັ່ງໃດ

+ ເຂົາກໍ່ຫົວຊັ້ວໆ ເທົ້າທົ່ວທັງເມືອງ

ເຮືອງກັນ ວາຈາຖາມ ເຖົ້າແກ່ຮາມທັງນ້ອຍ

ຕັ້ງຫາກ ອັດສະຈັນແທ້ ເຮົາເອີຍມາເບິ່ງ

ຊຽງຫມັ້ນຮຽງໄດ້ຫມູ່ສິບແວ່ງຮ້າຍ ມາແທ້ມາກຫລາຍ ເຈົ້າເອີຍ

+ ໃຜຜູ້ຈຳມັນໃຫ້ ມັນຊອກເຕົ້າ ຄົນສິບແວ່ງມາຫລາຍ ດັ່ງນີ້

ຈັກວ່າ ໂພຍໄພເຂັນ ເຫດໃດມາຕ້ອງ

ມອງບໍ່ເຫັນ ນຳແທ້ ການກະທຳບໍ່ຮູ້ເລື່ອງ

ຊິວ່າ ຄົນປ່ວງບ້າ ມາແທ້ກໍ່ບໍ່ເຊີງ

+ ຄາວເມື່ອ ໄປຮອດຫ້ອງ ທໍໃຫຍ່ໂຮງພະຍາ

ຝູງປະຊາຊົນແຫນ ແຫ່ໄປມອງຢ້ຽມ

ແຕ່ນັ້ນ ຊຽງກໍ່ເລົ່າ ພາເຂົາຟ້າວ ເມືອເຖິງຄຸ້ມໃຫຍ່

ມັນຈຶ່ງບອກຫມູ່ສິບ ແວ່ງຮ້າຍ ເຊົາຫັ້ນຈອດເກີຍ ກ່ອນຖ້ອນ

\+ ເຮົາຈັກເມືອກາບໄຫວ້ ທູນພໍ່ພະຍາຫລວງ

ຄັນວ່າ ພະຫາກມີອາດຍາແນວໃດ ຈິ່ງແຕ່ງໄປແນວນັ້ນ

ຊຽງກໍ່ເລົ່າ ພາເຂົາຂຶ້ນ ໂຮງຫລວງກົ້ມຂາບ

ແຕ່ນັ້ນ ພະບາດເຈົ້າ ຫລິວຢ້ຽມຜໍ່ດູ

\+ ກໍ່ຈຶ່ງເຫັນ ຊຽງຫມ້ຽງພາພວກພ້ອງ ຊາວແປດຄົນມາ

ຫມົດທຸກຄົນ ມີສິບ ແວ່ງຄືກັນແທ້

ພະຍາດູແລແລ້ວ ເລີຍຫົວເຢີ້ຍດ່າ

ນາງສະຫນົມຫົວຫນ້າ ກໍ່ຫົວຮ້ອງມື່ນັນ

\+ ຊຽງນີ້ ຕັ້ງວ່າມີຜະຫຍາແທ້ ລັງຄວາມກັບກ່າຍ ຈິງນໍ

ກູບອກໄປ ຫາປາກວ່ານໄມ້ ສັງມາໄດ້ປາກວ່ານຄົນ

\+ ແຕ່ນັ້ນ ພະຍາກໍ່ຈຶ່ງຈໍາເຂົາໃຫ້ ຫນີເມືອເຮວຮີບ

ເຂົາກໍ່ ໂດຍອາດເຈົ້າ ຍໍມືໄຫວ້ລວດລາ ຫັ້ນແລ້ວ

\+ ເຂົາກໍ່ເລົ່າ ເມືອສູ່ບ້ານ ເລີຍຈົ່ມນໍາທາງ

ແຊວງງສຽງ ຈົ່ມເມືອເພືອນຟື້ນ

ຕັ້ງວ່າ ບໍ່ມີສັງແທ້ ຈອມຫົວບໍ່ປົວອາດ ເຮົາເອີຍ

ຊຽງຫມ້ຽງນີ້ ຕັ້ງຫາກມາຖ່ອຍແທ້ ຈິ່ງໄບເວົ້າຢອກເຮົາ ດອກນາ

\+ ມັນກໍ່ຕົວະໃຫ້ມາເສຍຫນ້າ ລັກອາຍເພິ່ນຂາຍຄີງ ແທ້ແລ້ວ

ຕັ້ງຫາກ ເປັນການຝູມ ຄຽດແກ່ໃຈຈິງແທ້

ເພິ່ນບອກ ເອົາປາກວ່ານໄມ້ ສັງເອົາຄົນປາກແວ່ງ

ມາປ່ຽນແທນ ວ່ານໄມ້ ຖວາຍໃຫ້ພໍ່ພະຍາ ນີ້ເດ

## 12– ໄຂ່ເສັງກັນ

+ ມື້ໜຶ່ງ ພະບາດເຈົ້າ  ສະເຫວີຍລາດນະຄອນຫລວງ
ບອກໃຫ້ ເສນາພົນ  ພວກພະອົງເອົາໃຊ້
ບັດນີ້ ສູຈົ່ງຫາມາໄວ້  ຄົນໃດໜຶ່ງໜ່ວຍໄຂ່
ເຖິງເມື່ອ ວັນໜ້າເຊົ້າ  ຊິໄປຫລິ້ນທ່ານະທີ ພຸ້ນດາຍ
+ ກູຈັກ ສົມມຸດໃຫ້  ສູເປັນໄກ່ແມ່ ຄົນລະໂຕ
ສູຈົ່ງ ກະຕາກປຸ້ນເປັນສຽງ  ອອກໄຂ່ມາຖວາຍໄດ້
ຄັນວ່າ ໃຜບໍ່ມີອັນຖວາຍແທ້  ເຮົາພະອົງຈັກຈຳຜູກ
ກູຈັກ ໃສ່ຄຸກໄວ້  ຄາຖຸ້ມໃສ່ຄໍ ແທ້ດາຍ
+ ທໍ່ວ່າ ຄຳລະທັດນີ້  ຢ່າໄດ້ນຳບອກໃຫ້ຊຽງເທັນ
ແທ້ເນີ

ສູທໍ່ໄປ ບອກໃຫ້ຊຽງມາຫາ  ຮ່ວມກູເດີນດັ້ນ
ແຕ່ນັ້ນ ເຂົາກໍ່ ໂດຍຄວາມເຈົ້າ  ບໍ່ມິນານເລີຍແລ່ນ
ຮອດທີ່ ຊຽງໝັ້ນຽງເຈົ້າ  ຜາຍຜ້ຽນບອກບົນ
+ ເຖິງເມື່ອ ມື້ອື່ນເຊົ້າ  ພະຍາພໍ່ເໜືອຫົວ
ພະກໍ່ຈັກ ສະເດັດໄປຫາ  ຫາດຊາຍພາຍພຸ້ນ
ພ້ອມພ່ຳ ເອົາກັນຫລິ້ນ  ດອນຊາຍໃຫ້ມັນມ່ວນ ວ່າເນີ
ບອກໃຫ້ ຂຸນໃຫ່ຍເຈົ້າ  ໂຮມພ້ອມຊູ້ຄົນ ແທ້ເນີ
+ ພະເລົ່າ ນິອາດໃຫ້  ຊຽງດ່ວນໄປນຳ ຈົ່ງແລ້ວ
ວັນໜ້າ ເຊີນຊຽງໄປ  ຮ່ວມໂຮມຍາມເຊົ້າ ແທ້ເນີ
ແຕ່ນັ້ນ ຊຽງກໍ່ໂດຍຄວາມເຈົ້າ  ບໍ່ມີຂືນພະບາດ

ຄັນວ່າ ເຖິງຮຸ່ງເຊົ້າ ວັນໜ້າຫາກຊິເມືອ ດອກເນີ

+ ຄ້ອນວ່າ ຊຽງກ່າວແລ້ວ ນັ່ງຢູ່ສະບາຍໃຈ

ອັນວ່າ ສຸລິໂຍເລີຍ ຄ່ຳຈວນນອນພ້ອມ

ເຖິງເມື່ອ ວັນລຸນແລ້ວ ລາຊາສະເດັດອອກ

ພະບາດ ທິງວ່ອນແກ້ວ ເວົ້າເຫລື້ອມສູ່ເຮືອ

+ ແຕ່ນັ້ນ ເຂົາກໍ່ຍາບງເປື້ອງ ທົ້ນແກ່ວງສີພາຍ ພຸ້ນເຢີ

ນາວາ ເຖິງດອນຊາຍ ຈອດເຊົາຜານກວ້າງ

ພໍ່ດູ ສິນງອ້າ ຊຸນຫລວງຫລາຍໝູ່

ເຂົາກໍ່ເຊົາຈອດຢັ້ງ ໂຮມທົ້ນບ່ອນດຽວ

+ ແລ້ວຈຶ່ງ ຢາຍອອກຫລົ້ນ ຊຸດຄົວດ ດອນຊາຍ

ຈັ່ງແມ່ນ ແຊວງຊຸດ ກົນຊາຍເຟືອນຟົ້ນ

ພະຈຶ່ງ ປົງອາດຍາໃຫ້ ແປງຄົວເປັນໄກ່ ທ່ຽວເຕັ້ນ

ເຂົາກໍ່ ໂດຍອາດເຈົ້າ ຕາມຖ້ອຍພະຍອດເມືອງ

ແທ້ແລ້ວ

+ ເຂົາກໍ່ ກະຕາກກ້ອງ ຕີນເຂ່ຍດິນຊາຍ

ນອນໜູບລົງ ຄາວດຽວ ໄດ້ໄຂ່ໄປຖວາຍເຈົ້າ

ເຂົາກໍ່ ເລົ່າທ່ານຽມພ້ຽງ ເໝືອນດຽວກັນຢູ່

ຄັນວ່າ ໝົດໝູ່ແລ້ວ ບັກຊຽງໝັ້ນຽງ ຈຶ່ງຄົວດຊາຍ

+ ແຕ່ນັ້ນ ເຂົາກໍ່ເວົ້າບອກອ້າຍ ໃຫ້ເອົາໄຂ່ໄປຖວາຍ

ເປັນກຸດໂຕ ດັ່ງກູຈິງແທ້

ຊຽງມັ່ງ ລົງຄາວນ້ອຍ ເລີຍຢືນລຸກແລ່ນ

ເອົາແຂນຕົບປີກແລ້ວ ຂັນທ້າເອິກກືເດີ ແທ້ດາຍ

+ ແລ້ວໄລ່ ເຊີງ ພວກພ້ອງ ຊຸມໝູ່ຊຸມຫລວງ

ເຂົາກໍ່ແຊວງປີບ ຊູ້ຄົນເພື່ອນຟົ້ນ

ລາງຄົນລົ້ມ ກິນຊາຍໃຈຈັກຂາດ

ລາງພ່ອງ ອິດເມື່ອຍລ້າ ເຊລົ້ມສະວາບເວີຍ

+ ລາງພ່ອງ ຊາຍຖ້ວມພົ້ນ ເຕັມປາກເຕັມຫູ ກໍ່ມີ

ຈຶ່ງແມ່ນ ສຽງບິນແຊວ ສະນັ່ນເນືອງເພື່ອນຟົ້ນ

ເຂົາກໍ່ ຫາກກົວເກັງຢ້ານ ຊຽງກຸມກອນໄລ່

ເໝືອນດັ່ງ ໄກ່ຜູ້ເຖົ້າ ນຳປອງແມ່ເຊີງ ນັ້ນແລ້ວ

+ ມັນກໍ່ຫາກ ກຸມບິບກົ້ນ ໝົດໝູ່ເສນາ

ເຂົາກໍ່ຫາກ ສິນໆປີບ ບໍ່ອາດຈາຈິງໄດ້

ແຕ່ນັ້ນ ເຂົາກໍ່ ຈຶ່ງຈັດຊຽງໃຫ້ ນຳມາຍັງໄຂ່

ຖວາຍແກ່ພະບາດເຈົ້າ ດຽວນີ້ທ່ຽວເປືອງ ທ່ານເອີຍ

+ ແຕ່ນັ້ນ ຊຽງຕອບຖ້ອຍ ຮັບພາກຝູງເຂົາ

ກູນີ້ ກຸດໂຕຫລວງ ໄກ່ແດງຕົວກ້າ

ກູຈຶ່ງ ໄປກອນຫລົ້ນ ເຊີງສູ່ພວກໄກ່ແມ່

ສູກໍ່ຈຶ່ງ ມີໄຂ່ໄດ້ ຖວາຍເຈົ້າພໍ່ພະຍາ ນັ້ນແລ້ວ

+ ກູສິນມຸດ ໄລ່ຫລົ້ນ ໄປຊອກເຊີງສູ

ມັນແມ່ນຊ່ວຍໃຫ້ສູສິນມຸດ ອອກໄຂ່ມາຈິນໄດ້

ຊາດທີ່ ກຸດໂຕນີ້ ບໍ່ມີພົວມັນຊິໄຂ່ ເປັນລື ?

ຄັນວ່າ ໄກ່ຜູ້ບໍ່ມາເຊີງຊ່ວຍໃຫ້ ຊິມີເຊື້ອສືບມາ ນັ້ນລື

+ ກູນີ້ ເປັນໄກ່ຜູ້ ບໍ່ທ່ອນໄຂ່ມາຖວາຍ ແທ້ດາຍ

ມີແຕ່ ໝາກໄຂ່ຫລັງ ຢູ່ໃນເພົາຜ້າ

ໃຜບໍ່ຫ່ອນ ເອົາໄປໄດ້ ຖວາຍພະຍາຈັກເທື່ອ ສູເອີຍ
ຢຽວວ່າ ຕັດຂາດຂວ້າ ຄໍຊ້ຳກໍ່ຈຶ່ງຫວັງ ດອກແລ້ວ
+ ແຕ່ນັ້ນ ພະບາດເຈົ້າ ຮູ້ສຶກກໍ່ເລີຍຫິວ
ຮູ້ວ່າ ເອົາກິນລວງ ຫລອກຊຽງບໍ່ມີໄດ້
ຈິນອອກປາກວາຈາເວົ້າ ຊຽງເອີຍ ມຶງເວົ້າຖືກ ຈຶ່ງແລ້ວ
ຊຽງກໍ່ ທູນແທບພື້ນ ພະຍາເຈົ້າຂາບພະນິມ ທັ້ນແລ້ວ

## 13— ພະຍາໃຫ້ຫາສົ້ນຕີນແຕ້ມ

+ ແຕ່ນັ້ນ ພະຍາກໍ່ປົ່ງອາດໃຫ້ ຟູງຫມູ້ຄົນໃນ
ສູຈຶ່ງ ນຳເງິນໄປ ໄຖ່ເອົາຟູງຜ້າ
ພະກໍ່ ປົ່ງເງິນໃຫ້ ເຂົາເອົາໄປຈ່າຍ
ສູ້ນີ້ ຊູ້ແຜ່ນແພຜ້າພ້ອມ ຕີນແຕ້ມຮິບຖວາຍ ທ່ຽວເທີ້ນ
+ ແຕ່ນັ້ນ ເຂົາກໍ່ໂດຍອາດເຈົ້າ ໝົດຫມູ່ເລີຍໄປ
ເດີນຄາເມ ທຽວຖາມຫາຊື້
ຊຽງກໍ່ໂດຍ ອາດຍາເຈົ້າ ເດີນໄປພ້ອມພ່ຳ
ຖືເງິນເມືອ ປ່ອຍຖິ້ມ ວາງໄວ້ທີ່ເຮືອນ
+ ອັນວ່າ ຟູງພວກຂ້າ ທັດຖະບາດຄົນໃນ ຫມູ່ນັ້ນ
ເຂົາກໍ່ ເດີນໄປຖາມ ທ່ຽວວັນວຽນນີ້
ເອົາສົ້ນ ແນວຕີນແຕ້ມ ອັນງາມສຸດຂະໜາດ
ຄັນວ່າ ມັນຫາກຫາບໍ່ໄດ້ ກູຊິຂ້ຽນຜູກຕີ ແທ້ດາຍ
+ ສ່ວນວ່າ ມັນເມືອເຖິງເຮືອນແລ້ວ ເລີຍນິ່ງນອນເສີຍ

ມັນບໍ່ລົງ ເຮືອນໄປ　　ຊອກປຸນປອງຊີ້
ມີແຕ່ ເມົາໃນຫ້ອງ　　ເຮືອນຕົນນອນຢູ່
ກໍ່ບໍ່ ຄຶດເດືອດຮ້ອນ　　ເຄືອງແຄ້ນເຍື່ອງໃດ ແທ້ດາຍ
　　+ ແຕ່ນັ້ນ ພະໃຊ້ຄົນຊອກເອີ້ນ　　ໃຫ້ຊຽງຮີບຄືນມາ
ເອົາສິ່ງຂອງ ອັນມັນ　　ທ່ຽວໄປປອງຊີ້
ມັນຈະດີ ຫລືຮ້າຍ　　ງາມຕາ ຫລືວ່າບໍ່
ຄົນວ່າ ຊຽງຫາກຊີ້ໄດ້ແລ້ວ　　ເອົາຜ້າທ່ຽວຖວາຍ ວ່າດາຍ
　　+ ອັນວ່າ ພະບາດເຈົ້າ　　ຄອງເບິ່ງດອມຊຽງ ນີ້ແລ້ວ
ຈັກວ່າ ງາມປານໃດ　　ຊົ່ວຕາດີຮ້າຍ
ແຕ່ນັ້ນ ຊຽງກໍ່ ປີປາຍຕ້ານ　　ຂານຄໍາປຸນຕອບ
ເຮົາກໍ່ ໂດຍຄໍາພະບາດ ໄປທ່ຽວຊີ້　　ໄປທັນໄດ້ດັ່ງຫວັງ
　　+ ຂໍໃຫ້ ພະບາດເຈົ້າ　　ຜາຍໂຜດກູມາ ກ່ອນທ້ອນ
ເຮົາຫາກ ຊີ້ໄດ້ໃນຍາມໃດ　　ຊິຮີບເມືອຖວາຍໄທ້ ດອກມາ
ແຕ່ນັ້ນ ຄົນເຊີງທ້າວ　　ເມືອທູນພະບາດ
ຕ້ານກ່າວຖ້ອຍ　　ຈາເວົ້າຊູ່ອັນ
　　+ ແຕ່ນັ້ນ ພະບາດເຈົ້າ　　ຄຶດຮ່ຳໃນໃຈ
ແມ່ນຊິຈັດປານໃດ　　ກໍ່ບໍ່ມີທັນໄດ້
ຊຽງນີ້ ເປັນຄົນສື່　　ຕໍ່ແລເວົ້າຍາກ ຈິງແລ້ວ
ຕານແຕ່ ມັນຈ່າຍຊີ້　　ຫາໄດ້ຊິຖວາຍ ທັ້ນທ້ອນ
　　+ ອັນວ່າ ຕົວຊຽງຫມ້ຽງນັ້ນ　　ເມົາຢູ່ເຮືອນມັນ ພາຍພຸ້ນ
ໃນເມື່ອ ຂ້າໃຊ້ຫນີກັບເມືອ　　ມັນກໍ່ນອນສະບາຍເນື້ອ
ເຖິງເມື່ອ ຍາມກິນເຂົ້າ　　ກໍ່ຍູກິນເຕັມອີ່ມ

ຕັ້ງຫາກ ວຽກບໍ່ໄດ້ ນອນຫລັ້ນອ່ານໂຄງ ແທ້ແລ້ວ
+ ມັນບໍ່ຄຶດຍາກຮ້ອນ ປະການສິ່ງສັນໃດ
ຍູທ່າງກິນສະລາ (1) ຫລາຍ ຫມາກພູຄວນດ້ຽວ
ເຖິງເມື່ອ ວັນຖ້ວນເຈັດແລ້ວ ມັນເມືອທູນຄອບ
ສຸດທີ່ຂາ ຫາກຫາທ່ຽວຊື້ ຫົວດ້າຍກໍ່ບໍ່ມີ ພະເອີຍ
+ ຕັ້ງວ່າ ບໍ່ມີໃນຫີນຫ້ອງ ຈັກບ່ອນເມືອງເຮົາ ຈິງນາ
ເບິ່ງບ່ອນໃດ ມັນກໍ່ມີຄົນເອົາມື ຕ່ຳເອົາຈຶ່ງເປັນສິ້ນ
ສິ້ນທີ່ຄົນ ເອົາມືແຕ້ມ ມີເຕັມທົ່ວທຸກແຫ່ງ
ອັນຈັກໃຫ້ ເອົາຕີນຄີບແຕ້ມ ພື້ນຜ້າກໍ່ບໍ່ມີ ພະເອີຍ
+ ຂ້າຫາກຖາມ ຊ່າງຜ້າ ຫມົດຫມູ່ມາໂຮມ ຖ້ວນແລ້ວ
ເຂົາກໍ່ວາຈາຂານ ວ່າບໍ່ມີຈິງແທ້
ກໍ່ຫາກ ຮຸນແຮງແລ້ວ ຖາມຫາອີກອ່ອນ ຈິງດາຍ
ເຂົາກໍ່ບໍ່ໄດ້ ເອົາຕີນຄີບແຕ້ມ ພື້ນຜ້າແຜ່ນໃດ ພະເອີຍ
+ ມີແຕ່ ເອົາມືມັດຫມີ້ແຕ້ມ ແລ້ວຕ່ຳເປັນພື້ນ ພະເອີຍ
ຈັ່ງແມ່ນ ຮຸນແຮງເລາະ ຊອກທຽວຖາມຊື້
ໄປທ່ຽວ ຈົນຫມົດຫ້ອງ ນະຄອນເຮົາເທົ້າທົ່ວ
ຂ້າຈຶ່ງ ບໍ່ໄດ້ຊື້ ຖວາຍເຈົ້າ ເພື່ອບໍ່ມີ ພະເອີຍ
+ ລາງເທື່ອ ເມືອງບົນຫ້ອງ ຫີນແຫ່ງເມືອງສະຫວັນ
ອາດຈະມີ ຄົນຄິດ ຊ່າງເອົາຕີນແຕ້ມ
ອັນຢູ່ໃນແດນພື້ນ ຊຸມພູພຽງໂລກ ເຮົານີ້
ອັນໃຫ້ ເອົາຕີນຄີບແຕ້ມ ເມືອງນີ້ຢ່າຫວັງ ເທາະນາ

(1) ສະລາ : ຫມາກດ້ຽວ

+ ແຕ່ນັ້ນ ພະຍາກໍຈົ່ງສັ້ງດັ້ງໜ້າ ຄຽດແລວເລີຍຫົວ

ຄິດຮອດ ຄວາມຂອງຕົນ ເວົ້າອອກໄປວັນນັ້ນ

ຄິດບໍ່ທັນ ຄວາມເວົ້າ ເດົາເອົາແລ້ວສັ່ງ

ພິວ່າ ຄິດໃຫ້ພ້ຽນ ກໍຄືແທ້ຊູ່ຄວາມ ຢູ່ແລ້ວ

+ ມື້ກ່ອນນີ້ ບໍ່ຮ່ຳເພິງດີ

ເລີຍໄດ້ ມີວາຈາ ສັ່ງໄປຜິດແທ້

ກູຫາກ ໂມໂຫແທ້ ຫລົງລືມບໍ່ຄິດຖີ່ ສູເອີຍ

ບັດນີ້ ກໍຫາກມາແມ່ນຂໍ້ ຊຽງເວົ້າຊູ່ອັ້ນ ແທ້ນໍ

## 14– ຊຽງໝ້ຽງດູລາຍກັ້ບຍາພ່

+ ແຕ່ກ່ອນພຸ້ນ ມີເລື່ອງເລົ່າກັນມາ

ຊຽງໝ້ຽງ ກັບພະຍາ ແຂ່ງກັນການເວົ້າ

ບັດນີ້ ຍັງມີພະຕາເຖົ້າ ເຖລະທຳອົງໜຶ່ງ

ວັດເຈົ້ານັ້ນ ມີໝາກໄມ້ ສີບເພພ້ອມຊູ່ອັ້ນ (1)

+ ມີທັງ ພ້າວມາກລົ້ນ ຕານໄຂ່ວລຽນລຳ

ມີທັງ ພູພາງຫລາຍ ໝູ່ຂະໜຸນແກມມີ້

ມີທັງ ເຟືອງໄຟພ້ອມ ນາວການແກມເວື່

ກັບທັງ ກ້ຽງກອກຫວ້າ ຊາງພ້ອມມ່ວງມັນ

+ ມີທັງ ໝາກຂຽບກ້ຽງ ຂາມເທດຄັນທະລົດ

ມີທັງ ຍົມແງວຂາມ ໝາກທັນແກມຕ້ອງ

---

(1) ສີບເພ : ທັງປວງ, ໝົດທຸກຢ່າງ

ອັນວ່າ ສີດາລົ້ມ    ກຸທະລີ (1) ອ້ອຍແອບ
ໝາກອໍ ລະນັດມີບໍ່ໄຮ້    ພິລາເຂັ້ມຂູດເຂືອ ກໍ່ມີ
+ ກັບຫົວໝາກເດືອກົຽວ    ແກມດອກລຳດວນ ກໍ່ມີ
ຄົນໃດ ຫຼຽວຫາງເຫັນ    ກໍ່ເບິ່ງດູດາຍລ້າ
ຝູງໝູ່ ຄົນຊາວບ້ານ    ຊາວເມືອງມາອໍ່ຈອດ ດອມນັ້ນ
ເຂົາກໍ່ ມາຂໍບໍ່ໃຫ້·    ຫວງໄວ້ຊວດປະມານ ແທ້ດາຍ
+ ແຕ່ນັ້ນ ຊຽງໝັ້ນຽວໄປຄ່ວາບ້ານ    ແວະຈອດເຊົາອາຮາມ
ຄັນວ່າ ພະຕາເຫັນ    ກໍ່ເລົ່າຖາມຊຽງໝັ້ນຽວ
ທ່ານນີ້ ລຸກທີ່ໃດແທ້    ເດີນມາເຊົາຈອດ ທາງນີ້
ກໍ່ຫາກ ເປັນເຫດດ້ວຍ    ໃດແທ້ກໍ່ຈິ່ງມາ ນີ້ເດ
+ ເມື່ອນັ້ນ ຊຽງກໍ່ຮັບພາກຕ້ານ    ຂານຕອບຖຸນຫລວງ
ອ້າກໍ່ ເນົາໃນເມືອງ    ຢູ່ດອມພະຍາເຈົ້າ
ທໍ່ວ່າ ທ່ຽວມາຫລາຍບ້ານ    ສະບາຍໃຈອິດເມື່ອຍ ເຈົ້າເອີຍ
ກໍ່ຈິ່ງ ເດີນດຸ່ງເຂົ້າ    ມາພໍ້ຈອດເຊົາ
+ ຂ້ອຍກໍ່ ເມື່ອຍແຄນເຮັ່ງຮ້າຍ    ຈິ່ງເຊົາຢູ່ຕີນດຽວ
ອິດຫິວ ມາພໍ່ແຮງ    ບໍ່ຊ່າງປຸ່ນປອງແທ້
ຫລຽວເບິ່ງ ທາງໄກໃກ້    ບໍ່ມີຄົນຊິມາຊ່ວຍ
ບັດນີ້ ຂ້ອຍກໍ່ຂໍໝາກສົ້ມ    ກິນທ້ອນສະໜ່ອຍດອມ ເຈົ້າເອີຍ
+ ແຕ່ນັ້ນ ພະຕາຂຶ້ນສູ່ຫອງ    ລີ້ຢູ່ເຫິງກະດີ
ອັດປະຕູ ຫົວອັດ    ປ່ອງຄົນເລີຍຢ້ຽມ

---

(1) ກຸທະລີ = ກ້ວຍ

ຫົວບໍ່ ວາຈາຕ້ານ ຂານຄໍາໄປຕອບ
ເກັງວ່າ ເຂົາວຽນຂໍໝາກສົ້ມ ຂອງຕ້ອນເຄື່ອງຫວານ
+ ແຕນັ້ນ ຊຽງກໍ່ອຶດຄັ່ງແຄ້ນ ຄຶດຄຽດໃນໃຈ
ພະຕາເຖົ້ານີ້ ຕັ້ງຫາກມາເລວຊານ ຊ່າງບໍ່ມີຄວາມຮູ້ ແທ້ນໍ
ອຶດພໍ ກູມາໃຫ້ ຈັກສອງສາມໜ່ວຍ ກໍ່ດີແມ
ອັນນີ້ ມາຊ່າງວ່າເຮັດໜ້າບູດບຶ້ງ ເມືອລີ້ຢູ່ກະດີ
+ ໃຜຜູ້ ຕີຄ່າເຈົ້າ ເຖລາແກ່ຊະລາການ ນັ້ນເດ
ໝາກໄມ້ ມີລວມຫລາຍ ມ່ວງນາວແກມນີ້
ອຶດພໍ ອີ່ດູຕົນໃຫ້ ອຶດແຄນຄາວເມື່ອຍ ແດ່ແມ
ແຕນັ້ນ ຊຽງກໍ່ຄຶດຄັ່ງແຄ້ນ ຄະນຶງໄວ້ຢູ່ໃຈ
+ ມຶງຈະຕ້ອງພົບພໍ້ ຄໍາຕອບພາຍລຸນ
ມຶງຈື່ງ ຄອງຄອຍອຶດ ເບິ່ງມືຊຽງໝັ້ນຽງ
ກູຈັກ ມາບາຍແທ້ ທີລຸນໄວ້ ຫັ້ນກ່ອນ
ໃຫ້ຮັກສາ ໜ້າຜາກລ້ານ ຫົວເຈົ້າໄວ້ໃຫ້ດີ ຫັ້ນທ້ອນ
+ ກູຈັກ ຄືນສູ້ຫອງ ສະຖານຖິ່ນເຄຫັງ ກ່ອນແລ້ວ
ຈື່ງຈັກ ກັບຄືນມາ ຕອບມືພາຍທ້າຍ ແທ້ດາຍ
ຄ້ອນວ່າ ຊຽງຈື່ມພຶມພໍາແລ້ວ ໜີເມືອລາເລີກ
ກັບຕ່າວເມືອສູ້ຫອງ ເຮືອນຢ້າວແຫ່ງຕົນ
+ ຄ້ອນວ່າ ວັນລຸນມາຮອດແລ້ວ ກໍ່ຕົກແຕ່ງເດົາດາ
ຖືຂັນມາລານິມົນ ດ່ວນໄປມີ້ຊາ
ຊຽງກໍ່ແຍງ ຫົນຫ້ອງ ພະຕາຫລວງຕົນພີ
ເລີຍເລົ່າ ເຖິງເຂດເຈົ້າ ພະຕາເຖົ້າຈອດເຊົາ

+ ມັນກໍ່ຕົກແຕ່ງໄດ້ ທຸກສິ່ງມວນມີ
ແລ້ວເລົ່າ ແປງກະບອນດີ ເພດຄືຄົນໃຊ້
ຊຽງກໍ່ ຍໍຂັນຂຶ້ນ ເມືອກະດີໂຍບນັ່ງ
ແລ້ວຈຶ່ງ ຕ້ານກ່າວໄຫວ້ ຖະແຫລງເວົ້າຄ່ອຍດີ
+ ບັດນີ້ ພະພໍ່ເຈົ້າ ຕົນໃຫ່ຍພະຍາເມືອງ ພາຍພຸ້ນ
ບອກຂ້ານຳເອົາຂັນນິມົນ ບາດຄຳມາໄຫວ້
ຂໍໃຫ້ ເໜືອຫົວເຈົ້າ ກູນາພາຍໂພດ
ຮັບເອົາ ຂັນດອກໄມ້ ນິມົນນີ້ຢ່ານານ
+ ຈຶ່ງໂພດສັດ ໃຫ້ໄດ້ ເຖິງຍອດນິລະພານ ພຸ້ນຫອນ
ຝູງຂ້າ ປາຖະໜາສຸກ ຮ່ວມບຸນຈອມເຈົ້າ
ແຕ່ນັ້ນ ຊຽງກໍ່ຍໍຂັນເຂົ້າ ຖວາຍທຽນດວງດອກ
ຫົວເລົ່າ ແປະໃສ່ເກົ້າ ຄືແທ້ຊູ່ອົ້ມ
+ ບັດນີ້ ພະບາດເຈົ້າ ອົງອາດຈອມເມືອງ
ວ່າຈັກ ທຳການທົດ ຍົກພະເຖນຂຶ້ນໃຫ້ສູງລ້ຳ
ວ່າດາຍ

ພະຈັກ ທົດສົ່ງໃຫ້ ເປັນຄູຍົດໃຫ່ຍ ຈິ່ງແລ້ວ
ເພື່ອໃຫ້ ຢູ່ສືບສ້າງ ຍູດຄ້ຳສາສະໜາ ແທ້ດາຍ
+ ພໍໃຫ້ ເປັນເຂື່ອນກວ້າງ ສອນໂລກທັງທຳ ພະເອີຍ
ຕັ້ງຫາກ ສົມຄວນເປັນລາຊະຄູ ກໍ່ຈຶ່ງແຍງມາໄຫວ້
ອັນວ່າ ພະຍາຫລວງເຈົ້າ ໃຈໃສມີມາກ ຈິ່ງແລ້ວ
ກໍ່ຈຶ່ງ ໃຊ້ຂ້ານ້ອຍ ມາໄຫວ້ບາດຄຳ ນີ້ແລ້ວ
+ ແຕ່ນັ້ນ ພະຕາເວົ້າກ່າວຕ້ານ ຄຳມ່ວນດອມຊຽງ

ເມື່ອວ່າ ເຮົາບໍ່ຮັບຂັນນິມົນ ກໍຜິດກົວພະຍາເຈົ້າ ທ່ານເອີຍ
ຢຽວທີ່ລາຊາເຈົ້າ ຈອມທົວກົ້ວໂກດ
ພະຈັກ ຕຽມດ່າຊ້ຳ ກະທຳຮ້າຍແກ່ເຮົາ ບໍ່ຮູ້
+ ກໍຈັກຍິ້ມ ອາຍໜ້າແທ້ ທີ່ໄດ້ບອດດຽວດາຍ
ຄັນວ່າ ພະບໍ່ທົງພະໄທຄຶດ ຮັກແພງປຸນລ້ຽງ
ບໍ່ຫວັງ ເປັນເຖນໄດ້ ທົງທຳສະຖິດຢູ່
ພະຫາກ ຄຽດເຄັ້ງຂ້າ ເຮົານີ້ ກໍສ່ວນຕາຍ ແທ້ແລ້ວ
+ ແຕ່ນັ້ນ ເຖນເຖົ້າຮ້າຍ ຮັບຂັນໝາກນິລະມິນ
ຊຽງເລົ່າ ຍໍມືນົບ ວ່າຊາຈິງແທ້
ເມື່ອນັ້ນ ຊຽງກໍຕິຖະແຫລງເວົ້າ ໜີໄປຄວາມໃໝ່
ອັນໜຶ່ງ ເຈົ້າກໍມີອາດໃຫ້ ດອມແທ້ສົ່ງມາ ເຈົ້າເອີຍ
+ ວ່າໃຫ້ ຕົກແຕ່ງເຕົ້າ ຫາມແຫ່ເປັນຂະບວນ ທ່ານເອີຍ
ຄັນວ່າ ມີບ່ອນໃດ ເປັນທີ່ຂັດຂວາງ ກໍໃຫ້ຮານໂຮມແກ້
ຢ້ານວ່າ ມີຂອງຂັ້ນ ຕົນທາງທໍ່ຜາສາດ
ທາງທົງ ທັງຊໍ່ຟ້າ ຊິເພ້ນາງຂາດລົງ ນັ້ນແລ້ວ
+ ຜາສາດ ຫັກເປັ້ນາງ ຊິເສຍຮູບຊົງງາມ ພະເອີຍ
ທັງກົດທາງ ພາຊີ ກົດກະບວນ ຝູງຊ້າງ
ແຕ່ນັ້ນ ພະຕາເຖົ້າ ກໍທົວຊົມຊ້ອຍຊື່ນ
ຄັນວ່າ ພະຫາກມີອາດໃຫ້ ຊິອີນໄດ້ຫ່ອນເປັນ ນັ້ນເດ
+ ພະຕາກໍຈຶ່ງ ບົນບອກໃຫ້ ຕາມແຕ່ຊຽງເຫັນ ທັ້ນທ້ອນ
ເຈົ້າຈຶ່ງ ໄປແນມດູ ເບິ່ງຂະບວນທັງຄ້າຍ
ເຈົ້າຫາກ ເປັນຄົນຮູ້ ດູລວງສຽງຕ່ຳ

ນອກຈາກເຈົ້າ ບໍ່ມີຜູ້ຊິຊ່ອຍຊານ ແທ້ແລ້ວ

+ ທ່ານຈຶ່ງ ຕວງດູເບິ່ງໃຫ້ ສູງຕ່ຳພໍດີ ແທ້ເນີ

ບ່ອນໃດ ມັນຂັດຂວາງ ກໍ່ຈຶ່ງຮານໃຫ້ພໍດ້າມ

ເມື່ອບໍ່ ໂດຍຄຳເຈົ້າ - ກົວປຸ່ນເປັນໂທດ ຈົງມາ

ແຕ່ນັ້ນ ຊຽງກໍ່ເຮັດຍຸ້ມເປີ້ຍ ຫົວແຂ້ວໄຂ່ຂາວ

+ ມັນຈຶ່ງ ໄປເບິ່ງຜົນໝາກໄມ້ ພຶດສະຫລາກອາການ

ຄັນວ່າ ເຫັນອັນໃດດີກ ຊິຂຶ້ນຮ້ານເພມາງ

ຝູງໝາກຕາວ ຕານພ້າວ ຂະໜຸນທັນຄັນທະລຶດ ກໍ່ມີ

ຫົວພູຜາງ ມ່ວງແກ້ວ ຂາມກ້ວຍຂຽບຍົມ

+ ຊຽງກໍ່ໄດ້ ໂອກາດແລ້ວ ເລີຍຮີບຟັນຖາງ

ບໍ່ໃຫ້ມີ ອັນໃດ ກີດທາງພໍນ້ອຍ

ມັນກໍ່ ພາງານແທ້ ຟັນລົງຂິນໄຂ່ວ

ຕົ້ງຫາກ ໝົດຊູຕົ້ນ ເຫລືອລົ້ນອະເນກນອງ

+ ແຕ່ນັ້ນ ປະຊາຊົນຢູ່ບ້ານ ກໍ່ມາເບິ່ງເນືອງນັນ

ພາກັນມາ ເປັນຝູງ ໃຫ່ຍຮານຫົວນ້ອຍ

ເມື່ອນັ້ນ ຊຽງກໍ່ປົງຄວາມໃຫ ຂົນເອົາໝົດໝູ່

ເຂົາກໍ່ ສ່ວາງຍ້ອງ ຊຽງໝັ້ນຮຽງວ່າດີ ແທ້ແລ້ວ

+ ຊຽງກໍ່ຮານຕົ້ນໄມ້ ລົງຢ່າງພໍໃຈ

ແລ້ວກໍ່ປຸ່ນແປງມັດ ໃສ່ກັນຈົນກ້ຽວ

ເອົາຄານມາຊອນເຂົ້າ ປຸ່ນແປງເປັນຫາບ

ມັນກໍ່ ຊຸກເຊື່ອງໄວ້ ດີແລ້ວບ່ອນປະຕູ

+ ແລ້ວຈຶ່ງເນືອຂາບໄຫວ້ ເຖນໃຫຍ່ເຖິງກະດີ

ບັດນີ້ ຂ້າຫາກປຸ່ນແປງຜີ    ທ່ຽວຮານຫມົດແລ້ວ

ດູທີ່ ທົ່ນທາງກວ້າງ    ເມືອງທໍ່ຊິມາວ່າຍ ຈິງແລ້ວ

ຄຶດວ່າ ບໍ່ມີບ່ອນເກາະວ່າມ້ອຍ    ຫາງຫົງວ້ອຂອງທີ່ໃດ ເຈົ້າເອີຍ

+ ແຕ່ນັ້ນ ຊຽງກ່າວຍ້ອງ    ຍໍຮູບມະຫາເຖນ

ຕັ້ງຫາກ ສົມເປັນລາຊະຄູຫລວງ    ຄ່ອງຄືຈິງແທ້

ຜີວ່າ ຫລີງໂສນແທ້    ຕົນຕົວກໍ່ເນົາຄ່ອງ ຈິງແລ້ວ

ຍາມເມື່ອ ທົງເຄື່ອງຢ່ອງ    ຄືພັງຽງດັ່ງພຸດໂທ ນັ້ນແລ້ວ

+ ບັດນີ້ ຂ້າຂໍເບິ່ງລາຍຕົວໃຫ້ເຈົ້າ ຫມົດທົ່ວທັງຄີງ ແດ່ທ່ອນ

ເບິ່ງລຶກເກນ ໃນຕົວ    ຊີຊົ່ວດີ ຫລືຮ້າຍ

ເພື່ອຊິ ທຳນາຍໃຫ້    ພະເຖລາໄດ້ຮູ້ເລື່ອງ

ພະຈັກ ໄດ້ສືບສ້າງ    ແທນເຊື້ອສາສະຫນາ ບໍ່ມົ້ນ

+ ແຕ່ນັ້ນ ເຖນເຖົ້າເວົ້າ    ຕານບອກຍິນດີ

ເຈົ້າຈິ່ງ ດູຕາມໃຈ    ທຸກສິ່ງອັນຈົນສ້ຽງ

ຊຽງ ຈິ່ງລົງມືຍ້ຽມ    ດູໄປທຸກໆຍ່າງ

ລັກສະນະ ຖີ້ຖ້ວນ    ເສຍແລ້ວຈິ່ງທວາຍ

+ ອັນວ່າ ລາຍຕີນສຸບເກີບແກ້ວ    ມັນໄດ້ບອກຊະຕາດີ

ລາຍມື ບອກວ່າມີຄວາມສຸກ    ພ່ຳນານຈິງແທ້

ຍັງຈັກໄດ້ຖືຕາລະບັດແລະໄມ້ເທົ້າ    ຈຳນອນອັນປະເສີດ

ດູທີ່ລາຍຫົວບອກວ່າ ຈະໄດ້ຖືວ່ອນແກ້ວ    ສູງຖານຕະຫລອດໄປ

+ ດູທີ່ລາຍບ່າ ບອກວ່າຍັງຊິໄດ້ ຫົ່ມຜ້າແຜ່ນປາງີ ແທ້ແລ້ວ

ດູທີ່ລາຍຄີງ ມີອັນດີ    ທົ່ວກັນທັງຄ້າຍ

ບອກວ່າ ຄວາມສຸກລົ້ນ    ໄປໃສໄດ້ກັ້ງຮົ່ມ ຈິງແລ້ວ

ຄຸນປະວີ ກໍຈັກມາຫົວທ່ານແທ້ ພີ້ຕຸ້ມຫົ່ມຕົວ ແທ້ດາຍ
+ ດູທີ່ລາຍຫລັງ ບອກວ່າຍັງຊິໄດ້ ໃສຍາດໃນເມືອງ
ຈະໄດ້ນອນໃນເຫິງ ເສື່ອນວມງາມຍ້ອຍ
ມີຫົງ ແນວພື້ນຜ້າ ຟານອນຕຸ້ມຫົ່ມ
ອີນວ່າ ລາຍໜ້ານັ້ນ ຕາລະບັດກັ້ງ ກໍຫາກມີ
+ ລາຍແອວ ມັນບອກໄວ້ ຊິໄດ້ນຸ່ງສະບົງໄໝ
ຊິໄດ້ມີຄົນຊົມ ວ່າງາມເງົາຕ້ອງ
ຊິມີສາຍແອວຄ້ອງ ຄຽນຄີວງາມຄ່ອງ
ຫົວເລົ່າ ຍ້ອມຄົ່ງແທ້ ຊະເອັ້ງແກ້ວຮັດເຫິງ ແທ້ແລ້ວ
+ ຕັ້ງຫາກຖືກ ໂສກແມ້ງ ຊູ່ບ່ອນໜົດຕົວ ເຈົ້າເອີຍ
ກໍບໍ່ມີອັນຕິ ແຕ່ງງາມເລີງລົ້ນ
ທໍ່ວ່າ ຂໍລູກລາຍກົ້ນ ສະໜາແຮຮອງນັ່ງ ນັ້ນນາ
ຍັງຈັກ ຖືກໂສກແມ້ງ ປານໃດແທ້ກໍ່ໃຫ້ເຫັນ ເຈົ້າເອີຍ
+ ຝູງນີ້ ຈອມອາດເຈົ້າ ຮັບສິ່ງມີອາດຍາ
ອ້າກໍ່ຈັກ ເມືອທູນຖວາຍ ຊູ່ອັນໃຫ້ມັນແຈ້ງ
ເມື່ອນັ້ນ ພະຕາຕ້ານ ຂໍນຳດອມບໍ່ໃຫ້ເບິ່ງ
ຂຶ້ນຕົວ ມັນຫາກລຸກເຍືອກຄ້ານ ຢາກອາຍແທ້ບໍ່ຢາກໄຂ ບ່າວເອີຍ
+ ແຕ່ນັ້ນ ຊຽງກໍ່ຮັບພາກຕ້ານ ຂານຕອບເຖນຫລວງ
ທໍ່ແຕ່ ສອງຄົນເຮົາ ເບິ່ງກັນພາຍພຸ້ນ
ໃນທີ່ ຫໍສີວນ້ຳ ປະຕູອັດແຈບ
ຢ່າໃຫ້ ໃຜລ່ວງໄດ້ ເຫັນແທ້ເຊິ່ງເຮົາ ເຈົ້າເອີຍ
+ ແຕ່ນັ້ນ ເຖນຫລວງຍ້າຍ ໄປເຖິງສວນອາບ ຈິ່ງແລ້ວ

| | |
|---|---|
| ພະຕາເຖນ ກໍຈົ່ງກອງກົ້ນໃຫ້ | ຊຽງຢຽນເບິ່ງດູ |
| + ນີເລົ່າ ຄວາຖືກໄດ້ | ດັງສະນັ່ງຮ້ອອກ ເສຍນັ້ນ |
| ຊຽງກໍ່ຫລິງ ລຳຢຽນ | ທຳແຫລ ດັ່ງຄານ |
| + ແຕ່ນັ້ນ ຊຽງບໍ່ຊ້າ | ຕີນແດກມະຫາເຖນ |
| ອັນວ່າ ຫົວຊວນຄຸບ | ໃສ່ຝາກະດີນັ້ນ |
| ພະຕາເຖນຮ້ອງ | ໂອຍໆຄາງຢູ່ |
| ມັນກໍ່ຍໍຕີນຖີບແກ່ວແກ້ | ພໍໃຈແລ້ວແລ່ນໜີ |
| + ມັນກໍ່ກັບສູ່ຫ້ອງ | ຫົນແຫ່ງເຮືອນຕົນ ຫັ້ນແລ້ວ |
| ບໍ່ຄະນິງ ນຳໃຜ | ຢູ່ສະບາຍເບົາເນື້ອ |
| ບັດນີ້ ຈັກກ່າວເຖິງ ພະຕາເຖົ້າ | ຊຽງທຳໃນສ່ວນອາບ |
| ເຈົ້າກໍ່ ເຈັບປວດແທ້ | ຄາງໄອ້ສະແນ່ງຕາຍ |
| + ເຂົາກໍ່ຫາມມາມັດຢ່າງ | ເທິງບ່ອນດັງໄຟ |
| ເອົາມືລູບໄປ | ທົ່ວຄີງກຸມຄົ້ນ |
| ເອົາທັງຫວ້ານ | ຈົນມາຂາງຍົ້ນ |
| ທັງເລົ່າ ຕົ້ນເປືອກໄມ້ | ແດງຄົ້ນທົ່ວຄີງ |
| + ເຈັດວັນ ພະຈິ່ງໄດ້ | ຫາຍສວ່າງເບົາຄີງ |
| ກໍ່ຮີບ ລົນຄວາຫາ | ເຄື່ອງດີໄປຕ້ອນ |
| ເຈົ້າກໍ່ ແຍງຫົນຫອງ | ທີ່ຄຳພູວະນາດ |
| ຮອດບໍ່ຊ້າ | ເລີຍຂຶ້ນລ່ວງໄປ |
| + ເຈົ້າກໍ່ ສະຖິດຢູ່ຢັ້ງ | ເທິງອາດສະຫນາສູງ |
| ພັກຢູ່ ໃນໂຮງຄຳ | ໜ້າຄອງພະເມືອງເຈົ້າ |
| ເຈົ້າກໍ່ ພຸມໆຕານ | ທູນອົງພູວະນາດ |

ຖວາຍເຫດໃຫ້ ວານເວົ້າຊູອັ້ນ
+ ວ່າວັນນັ້ນ ພະບາດເຈົ້າ ໄດ້ບອກນິມິນ
ບອກຄືນໄປ ນຳເອົາ ອາດຕະມາມາເຝົ້າ
ວ່າຈັກ ທົດສົງໃຫ້ ເປັນຄູຍົກໃຫ່ຍ ຈິງແລ້ວ
ເລີຍເລົ່າ ຕົວະຍົວະເຍົ້າ ດູລາຍກົ້ນແຫ່ງເຮົາ ພະເອີຍ
+ ມັນເລົ່າ ທຳຂ້ອຍນໍລະນາດແທ້ ຕີນຖີບທັງແຮງ ແທ້ດາຍ
ສະແໜ່ງ ເສຍຄິງແພງ ຄອບມັນຕາຍມ້ຽນ
ດີທີ່ ບຸນຄຸນແກ້ວ ທັງສາມຍັງເຫລືອມ ຈິງມາ
ຂ້ອຍມະຫາລາຊະເຈົ້າ ວັນນັ້ນ ຈຶ່ງບໍ່ຕາຍ ພະເອີຍ
+ ແຕ່ນັ້ນ ພະບາດເຈົ້າ ຮັບພາກມະຫາເຖນ
ຂ້ອຍບໍ່ໄດ້ຈຳໃພໄປ ໃສ່ນິລະມິນເຈົ້າ
ໃພຫາກ ໄປລ້ວງຖອຍ ວາຈາຕົວະລ່າຍ ແນວນັ້ນ
ຕົ້ງແມ່ນ ປະຫລາດແທ້ ແນວນີ້ກໍ່ຮ່າວມີ ແທ້ນໍ
+ ຂ້ອຍບໍ່ໄດ້ ຄິດຮ່ຳຮູ້ ຄຳແຫ່ງທົດສົງ ແທ້ນາ
ໃພເດ ນຳຄຳໄປ ຂາບທູນເຖນເຈົ້າ
ເມື່ອນັ້ນ ພະຕາຕ້ານ ວ່າຄົນໃນທັດຖະບາດ ນີ້ແລ້ວ
ບໍ່ໃຊ່ ຄົນນອກແທ້ ທົນເປື້ອງຝ່າຍໃດ ພະເອີຍ
+ ແຕ່ນັ້ນ ພະຈຶ່ງບອກຂ້າໃຊ້ ໄປທ່ຽວທົນເປືອງ
ໃຫ້ເຂົາ ມາໂຮມກັນ ຊູ້ຄົນຫມົດສ້ຽງ
ພໍໃຫ້ ມະຫາເຖນເຈົ້າ ຫລິງແລຍ້ຽມເບິ່ງ ເອົາທ້ອນ
ຄົນວ່າ ເຈົ້າຫາກເຫັນຜູ້ຜິດທ່ຽງແທ້ ມີຊີ້ບອກມາ ເຈົ້າເອີຍ
+ ແຕ່ນັ້ນ ຊຸມພວກຂ້າພະຍ່ຳເກົ້າ ຄົນຢູ່ໃນໂຮງ

| | |
|---|---|
| ເຂົາກໍ່ ໂດຍລາຊາ | ພ່ຳນວນພາເຕົ້າ |
| ແຕນັ້ນ ພະຈຶ່ງຈຳເຖນເຈົ້າ | ນິນຕາດູເບິ່ງ ເອົາຫ້ອນ |
| ຄັນວ່າ ໃພຫາກພິດທ່ຽງແທ້ | ເຖນເຖົ້າບອກມາ ທ່ຽວເຫັ້ນ |
| + ຂ້ອຍຈັກ ຈຳຈ່ອງໃຫ້ | ລົງໂທດຕົວມັນ ຈິ່ງແລ້ວ |
| ຈັກຜູກສອກ ເອົາໄປມັດ | ຕາກລົມສາມມື້ |
| ຄືນນັ້ນ ໃຈຈິງຮ້າຍ | ບໍ່ກົວເກັງຢ້ານບາບ ແທ້ແລ້ວ |
| ຕ້ອງໃຫ້ ມັນຫລາບແທ້ | ເສຍແລ້ວຈຶ່ງປ່ອຍມັນ |
| + ເມື່ອນັ້ນ ເຖນກ່າວຖ້ອຍ | ຕ້ານຕອບພະລາຊາ |
| ກໍ່ຫາກ ເຫັນກະບອນດູ | ບໍ່ຄືຈັກຄົນແທ້ |
| ຕັ້ງບໍ່ແມ່ນ ຜູ້ມັນທຳຂ້ອຍ | ໃນແຈສ້ວມອາບ  ຈິງມາ |
| ຂໍແກ່ ມະຫາລາຊະເຈົ້າ | ທັນຊ້ຳບອກມາ ອິກຫ້ອນ |
| + ແຕນັ້ນ ພະບາດຕ້ານ | ຂານຕອບມະຫາເຖນ |
| ດູດັ່ງ ຄົນໃນເຮົາ | ກໍ່ຫາກມາຫມົດຖ້ອນ |
| ເມື່ອນັ້ນ ລາຊາເຈົ້າ | ຖາມເຂົາຂ້າມະຫາດ |
| ດູດັ່ງ ຫມົດທໍ່ນີ້ | ຈິງແທ້ຮູ້ວ່າ ຍັງ ນັ້ນເດ |
| + ແຕນັ້ນ ເຂົາກ່າວຕ້ານ | ຂານຕອບລາຊາ |
| ຍັງແຕ່ ຄົນໆດຽວ | ຊື່ວ່າຕົວຊຽງຫມ້ຽງ |
| ເມື່ອນັ້ນ ພະກໍ່ຈຶ່ງຈຳເຂົາໃຫ້ | ໄປທັນມາທ່ຽວ ຈິງເຫັ້ນ |
| ເຂົາກໍ່ ໂດຍອາດເຈົ້າ | ໄປຟ້າວຮອດຊຽງ |
| + ບັດນີ້ ພະບາດເຈົ້າ | ໃຫ້ມາບອກຊຽງເມືອ  ແທ້ດາຍ |
| ຢ່າໄດ້ ເນີນນານເຫິງ | ຮີບດ່ວນໄປດຽວນີ້ |
| ແຕນັ້ນ ຊຽງກໍ່ກິນຫມາກຕອດຊູ້ຫ້ອງ | ຄິງໂຊພອມຈ່ອຍ |

ເຫັນແຕ່ ດົງ ແລະ ແຂວ — ເດີນດົ້ນຍ່າງບໍ່ເປັນ
+ ພໍເມື່ອ ເຫັນຂ້າໃຊ້ — ເດີນດ່ວນມາທັນ
ມັນກໍ່ ໂຊມຄີງລູກ — ນັ່ງເຫງົາເພີຍຜ້າ
ຊຽງກໍ່ ໂດຍອາດຍາແທ້ — ໂງເງລູກຢ່າງ
ສອງມື ຈັບໄມ້ເທົ້າ — ເອົາຄ້ຳຊ່ວຍແຮງ
+ ຊຽງກໍ່ ເມືອຮອດຫ້ອງ — ໂຍບນັ່ງຫໍຄຳ
ແຕ່ນັ້ນ ພະຕາເຖນຫລີງເຫັນ — ກໍ່ວ່າຄືຄົນນີ້
ທໍ່ວ່າ ດູພອມຮ້າຍ — ຕາຂາວຫນ້າຫລ່າ ເຮວນີ້
ຄືດັ່ງ ພີ່ກອງກ່ອຍຮ້າຍ — ເຂົາເອີ້ນສະມ່ອຍດົງ ນັ້ນດາຍ
+ ແຕ່ນັ້ນ ຊຽງຖະແຫລງກ່າວຕ້ານ — ວ່າບໍ່ສະບາຍເຫິງເຕີບ
ໄດ້ແປດວັນວຽນຕິດ — ບໍ່ສ່ວາງພໍຄາວນ້ອຍ
ມະຫາເຖນ ກໍ່ສີງກາແຫ້ — ຈັກແນເດົາຢ້ານບໍ່ແມ່ນ
ດູທີ່ມັນ ຫາກພອມພອກພົ້ນ — ໂສມຮ້າຍບໍ່ດີ ແທ້ນາ
+ ແຕ່ນັ້ນ ພະຕາກໍ່ຈຶ່ງລາຈາກຫ້ອງ — ລົງຈາກຫໍຄຳ
ເລີຍເລື້າ ເດີນຈອນຫນີ — ອອກໄປທັງຟ້າວ
ເຈົ້າກໍ່ແຍງ ເມືອຫ້ອງ — ກະດີຕົນເຊົາຈອດ
ພະຕາ ຈື່ມໃຈ້ງ — ທັງໄຫ້ຮ່ຳໄຮ
+ ໂອນໍ ເສຍດາຍຕົ້ນຫມາກພ້າວ — ນີ້ມ່ວງຜູຜາງ ແທ້ເດ
ທັງຫມູ່ເຟືອງ ຂະຫນຸນຍົມ — ຂຽບນາວແກມກ້ຽງ
ກັບທັງ ສັບພະສັນພ້ອມ — ຜາລາຫລາຍສ່ຳ
ຄຶດເມື່ອ ຍາມມັນສຸກແກ້ຖວນ — ຮຽມຂ້ອຍກໍ່ຈຶ່ງກິນ ແທ້ດາຍ
+ ແມ່ນວ່າ ໃຜຫາກເຂົ້າ — ມານ້ອມນ່ຽວຂໍ ກໍ່ດີນາ

ກູກໍ່ບໍ່ ໄດ້ວາຈາໄຂ　　ມອບເວນອາງໃຫ້ ແທ້ນາ
ເພື່ອວ່າ ເສຍດາຍແທ້　　ເຂົາກິນຢ້ານແກ່ມ
ບັດນີ້ ບັກຂີ້ຮ້າຍ　　ມາລ້ຽວລ່າຍກູ ແທ້ນໍ
　　+ ມັນຫາກ ພາງານແທ້ງ　　ຮານກື່ນລົງຫມົດ ນີ້ເດ
ຈົນບໍ່ເຫັນ ຍັງມີ　　ຫນ່ວຍໃດຄາຕົ້ນ
ມັນຫາກ ຕົວະກູແທ້　　ຈະທຶດສິງແຖມຕື່ມ
ວ່າໃຫ້ ຍົດໃຫ່ຍກວ້າງ　　ເປັນສູແທ້ທ່ຽງຈິງ ແທ້ນາ
　　+ ຍັງບໍ່ພຽງທໍ່ນັ້ນ　　ມັນຍັງຖີບຫຳກູ ອີກນາ
ບໍ່ອື່ດູ ກູນາ　　ພະສົງອົງເຈົ້າ
ມັນຍັງ ຫຳກູໃຫ້　　ຕຳຝາຫນ້າຜາກແຕກ
ຈົນວ່າ ເລືອດຢາດຍ້ອຍ　　ຮຳແທ້ທົ່ວຄີງ ນີ້ແລ້ວ
　　+ ຕົນຕົວເຈັບຄອບຄົນຊົ່ວຮ້າຍ　　ມາທ່ຽວຮາວີ ແທ້ແລ້ວ
ຄັນວ່າ ໄປຫູນເຖິງ　　ພໍ່ພະຍາເປັນເຈົ້າ
ພະກໍ່ວາງ ງານໃຫ້　　ເຮົາໄປຊອກເບິ່ງ
ເລົ່າບໍ່ເຫັນ ເພົ່າຜູ້　　ຄືອ້າຍຖ່ອຍພານ ແທ້ນາ
　　+ ກູຈັກ ຂຳຂາດໃຫ້　　ໃຊ້ສິ່ງລົງມື ວ່າດາຍ
ວ່າຈັກ ທັນດະກຳມັນ　　ໃຫ້ນອດວາຍອາງເນື້ອ
ວ່າຈັກ ຜູກຕາກແດດ ທໍລະມານຂ້ຽນ　ຍັງມັນຮອດພັນເທື່ອ ພຸ້ນດາຍ
ອື່ດູ ພະພໍ່ເຈົ້າ　　ໃຈແຈ້ງທ່ຽງທຳ ແທ້ແລ້ວ
　　+ ອັນຈັກໃຫ້ ສົມກໍ່ໃຈຂ້ອຍແທ້ ແມ່ນຟັນຟາດຈົນຕາຍ ພຸ້ນແລ້ວ
ຕັດຕ່ອນຕົວ ຄືງມັນ　　ໂຜດກາແກມແຮ້ງ
ຢ່າໃຫ້ ມັນຄາຄ້າງ　　ຊູງດິນຄົນຖ່ອຍ

ຈົ່ງສະຫງົບງຽບໄດ້ ແດນທ້າວໂລກຄືນ
+ ຄັ້ນວ່າ ພະກ່າວແລ້ວ ນິດທະເນົ້ງເນົານອນ
ຫັງຄະນຶງ ໃຈຄຶດ ມືດມົວບໍ່ມີແລ້ວ
ຫລັບກູ ກໍ່ບໍ່ຝັນເຫັນໜ້າ ຊາຍໂຈນຄືນຊົ່ວ
ຊີວິດ ຍັງບໍ່ມ໊ວ ຊີຊັງໜ້າບໍ່ລືມ ແທ້ແລ້ວ

## 15– ເອົາຫົວລ້ານຊົນກັນ

+ ບັດນີ້ຈັກກ່າວເຖິງ ພະບາດໄທ້ ເມືອງໃຫ່ຍຕານີ (1) ກ່ອນແລ້ວ
ເຈົ໊າກໍ່ ສະເຫວີຍເມືອງສຸກ ຢູ່ເຢັນບໍ່ມີຮ້ອນ
ຝູງໝູ່ ໂຍທາທ້າວ ເສນາມິມາກ
ເຂົາຫາກ ລືຊ່າເຮື້ອງ ເມືອງນີ້ວ່າງາມ ຍິ່ງແລ້ວ
+ ພະກໍ່ ຍູສະໜຸກຍິ່ງລ້ຳ ປະສິງແຕ່ງກິນທານ
ຝູງໝູ່ ເຖລານຸ ເຖລະ ສູດຮຽນແປງສ້າງ
ໂຮມຮ່ວມ ຮຽນ ຄຸນແກ້ວ ສາມປະການ ໄຕຍະເພດ
ແປອິໄນ ອອກໄດ້ ຄວາມຮູ້ເພີ່ມທະວີ
+ ກັບທັງອະ ພິທຳກໍ່ໄດ້ ກັບປາກແປເປັນ
ບໍ່ໄດ້ ເຄືອງແຄນສົງ ຢູ່ສະບາຍເບົາເນື້ອ

---

(1) ຕານີ: ແມ່ນເມືອງປັດຕານີ ຢູ່ຕໍ່ແດນປະເທດໄທ ທາງແຫລມມາລາຢູ ພົນລະເມືອງເປັນຊາດແຂກ.

ພະບໍ່ກົວເກັງຢ້ານ ເມືອງໃດຊິມາຂີ່ມ
ໃຜຊິຖາມ ໂຈດແກ້ ກໍ່ແປໄດ້ບໍ່ກົວ ແທ້ແລ້ວ
+ ພະກໍ່ ສະຫງວນຊອບຫລີ້ນ ຂັນແຂ່ງພັນກັນ
ໃຜຊິພັນແນວໃດ ພະກໍ່ພັນນຳໄດ້
ໃຜຫາກ ພັນເສຍໃຫ້ ພະອິງເອົາທຸກສິ່ງ
ໃຜຫາກ ພັນແພ້ແລ້ວ ເອົາຊ້າງສ່ວຍສິນ
+ ຈັ່ງແມ່ນ ສວ່າງຊອງ ທີ່ວປະເທດພັນກັນ
ໃຜຫາກມີອັນໃດ ກໍ່ເລົ່າພັນອັນນັ້ນ
ແຕ່ນັ້ນ ພະຍາກໍ່ມີຫົວລ້ານ ລິດທີແຮງຄົນໜຶ່ງ
ຄົນວ່າ ຊິນຕົ້ນພາວ ເຟືອນຂວ້ຳ ຂາດສະເດັນ
+ ພະຍາເຫັນດັ່ງນັ້ນ ຍິນຊື່ນຊົມບານ
ເອົາເລື່ອງໃດມາພັນ ກໍ່ແມ່ນອິງພະຍາໄດ້
ພະຍາກໍ່ ຫາກເອົາຫົວລ້ານ ໃນເມືອງມາຊິນຄູ່ ຄົນແລ້ວ
ໃຜບໍ່ມີ ຕໍ່ໄດ້ ຫົວມ້ວນແຕກທະລາຍ ແທ້ກາຍ
+ ເມື່ອນັ້ນ ພະຍາກໍ່ ຕົກແຕ່ງໃຫ້ ໄປທ່ຽວຫາຊິນ
ເອົາສິນພັນ ຕ່າງເມືອງຖວາຍເຈົ້າ
ແຕ່ນັ້ນ ເອົາກໍ່ເລົ່າເດີນເຖິງເຫົ້າ ທະວາລາວະດີ ເມືອງເອກ
ສະເພົາ ຫ້າຮ້ອຍ ເຊົາຢັ້ງທ່າເມືອງ
+ ແລ້ວຈຶ່ງ ໃຊ້ຖີບຖ້ອຍ ເຖິງທ່ານນາຍແສງ (1)
ເອົາກໍ່ ຖະແຫລງຄຳຄວນ ຄູ່ອັນເອົາຕ້ານ

---

(1) ນາຍແສງ: ແມ່ນນາຍລ່າມ.

ເມື່ອນັ້ນ ລ່ານກໍ່ນຳຄວາມຂຶ້ນ    ເມືອທູນພະບາດ
ຕ້ານເຫດຖ້ອຍ    ເມືອງຕານີໃຊ້ຂ່າວສານ
+ ແຕ່ນັ້ນ ພະບາດເຈົ້າ    ຊົມຊື່ນຍິນດີ
ກໍ່ຈຶ່ງ ປົງອາດຍາ    ສົ່ງນຳຄົນໃຊ້
ອັນວ່າ ວັນໜ້າເວລາເຊົ້າ    ພໍງາຍສວາຍແກ່
ໃຫ້ສູ ທັນນາຍສະເພົາຮີບດັ້ນ    ມາເຝົ້າພໍ່ພະຍາ ທ່ຽວເທີ້ນ
+ ແຕ່ນັ້ນ ລ່ານກໍ່ລາຈາກຫ້ອງ    ພາສາດພະຍາເມືອງ
ໄປສູ່ ໂຮງເຮືອນຕົນ    ນັ່ງເມົາໃນບ້ານ
ແລ້ວກໍ່ ເດີນໄປເຫົ້າ    ນາຍສະເພົາພໍ່ຄ້າໃຫຍ່
ວ່າພະຍາ ບອກໃຫ້    ໄປເຕົ້າພົບພະຍາ ທ່ຽວເທີ້ນ
+ ຂໍໃຫ້ ຮີບຟັ່ງຟ້າວ    ເມືອໂລດຢ່ານານ ວ່າດາຍ
ແຕ່ນັ້ນ ເຂົາກໍ່ເຕົ້າດາຫາ    ເຄື່ອງປັນນາການໄດ້
ກໍ່ຈຶ່ງ ນຳເອົາໄປຖວາຍໃຫ້    ພະຍາເມືອງຕົນພໍ່
ກົ້ມຂາບໄຫວ້    ພະອົງເຈົ້າພໍ່ພະຍາ
+ ເມື່ອນັ້ນ ພະບາດເຈົ້າ    ທະວາລາວະດີ ກ່າວວາຈາ
ຖາມວ່າ ນາຍສະເພົາມາ    ຄ່ອຍສະບາຍບໍເຈົ້າ
ນາຍສະເພົາຕານ    ຂານຄຳຮັບພາກ
ບອກວ່າຂ້າ ຫາກໍ່ເອົາສະເພົາມາຈອດຢັ້ງ ວັນນີ້ກໍ່ຮີບມາ ນີ້ແລ້ວ
+ ອັນວ່າ ພວກສະຫາຍອື່ນນັ້ນ ກໍ່ຍັງຢູ່ສະບາຍດີ ພະເອີຍ
ໃຜບໍ່ມີ ໂລຄາ    ບຽດບຽນໃນເນື້ອ
ທໍ່ວ່າ ຍັງເລົ່າເຄືອງໃຈເຈົ້າ    ພະສະຫາຍມາຫາລາດ ພາຍພີ້
ກໍ່ຈຶ່ງ ໃຊ້ໄພ່ນ້ອຍ    ທັນຂ້າດ່ວນມາ ພະເອີຍ

\+ ວ່າໃຫ້ ເອົາຫົວລ້ານ    ມາແອບຊົນກັນ

ຄັນວ່າ ໃຜຫາກມີແຮງດີ    ຊະນະການຊົນນີ້

ພະຊິເອົາ ຍັງຊາງ    ມາເປັນບຳເນັດ

ກໍຈຶ່ງ ພາພວກພ້ອງ    ມາພ້ອມພ່ຳກັນ ພະເອີຍ

\+ ເມື່ອນັ້ນ ພະບາດຕ້ານ    ວ່າບໍ່ເປັນສັງ ດອກແລ້ວ

ຕາງໃຫ້ ເຫັນລິດທິເອົາ    ຊຶ່ນຕາຕາງຫລິ້ນ

ແຕ່ນັ້ນ ທູຕາໃຊ້    ລາລົງຖອຍເລີກ

ເຂົາກໍ່ ເມືອສູ່ຫອງ    ສະເພົາແລ້ວແຕ່ງດາ

\+ ເຂົາກໍ່ ອອກປາກຕ້ານ    ຂານວ່າຄວາມດຽວ

ແລ້ວກໍ່ພາກັນຕົກ    ແຕ່ງເດົາດາຫາງ

ຊາດທີ່ ເຊີງຫົວລ້ານ    ຊົນກັນບໍ່ມີລື່ນ ເຮົາແລ້ວ

ກໍ່ຫາກ ໄປພາບແພ້    ເອົາໄດ້ຊູ່ເມືອງ ແລ້ວເດ

\+ ເມື່ອນັ້ນ ພະບາດເຈົ້າ    ເມືອງໃຫຍ່ທະວາລາວະດີ

ກໍ່ບອກ ເສນາມາ    ຮ່ວມກັນໂຮມເຕົ້າ

ແລ້ວຈຶ່ງ ທັນເອົາຄົນຫົວລ້ານ    ມາໂຮມຫມົດທຸກແຫ່ງ

ພະຈຶ່ງ ຕ້ານໄຕ່ຖອຍ    ຖາມຊັ້ນຊູ່ອັ້ນ

\+ ບັດນີ້ ໃຜຈັກຊົນພາບແພ້    ພວກຜູ້ອື່ນທັງຫລາຍ ໄດ້ເດ

ໃຫ້ຮີບ ວາຈາຂານ    ບອກມາດຽວນີ້

ຄັນວ່າ ໃຜຜູ້ເອົາການໄດ້    ສິນບັດຊິທານທອດ ຈິງແລ້ວ

ຈັກບໍ່ໃຫ້ ຖືກວຽກບ້ານ    ການເມືອງແທ້ເຍື່ອງໃດ ດອກນາ

\+ ແຕ່ນັ້ນ ສະເພືອກພ້ອມ    ຝູງຫມູ່ອະເກສາ ( 1 )

(1) ອະເກສາ = ບໍ່ມີຜົມ : ຄົນຫົວລ້ານ

ເຂົາກໍ່ ພາກັນຍອມ    ວ່າກົວເກັງຢ້ານ

ແລ້ວຈຶ່ງ ເອົາກັນເຂົ້າ    ໄປຫູມພະບາດ

ໃຜບໍ່ອາດຕໍ່ໄດ້    ກົວຢ້ານອ່ອນຍອມ ພະເອີຍ

+ ແຕ່ນັ້ນ ພະບາດເຈົ້າ    ຂະລັງຢູ່ໃນຫວງ

ລືວ່າ ຈັກໃຫ້ເສຍສັກສີ    ປະເທດເຮົາໄປລ້າ

ສູຈົ່ງ ໄປຫັນທ້າວ    ກະບິດຖານ້ອຍມາດ ເຮົາທ້ອນ

ບອກໃຫ້ ມາພ່ຳພ້ອມ    ຄືນໃຊ້ຢ່ານານ ວ່າເດີ

+ ເມື່ອນັ້ນ ເຂົາກໍ່ໂດຍບາດເຈົ້າ    ພາກັນແລ່ນເຮວພະລັນ

ໄປວາຈາ    ຕໍ່ຊາຍຊຽງຫມ້ຽງ

ບັດນີ້ ພະຍາຫລວງໃຊ້    ເຮົາມາແອນຮີບ

ເຊີນທ່ານ ໄປເຝົ້າເຈົ້າ    ດຽວນີ້ຢ່ານານ ພະເອີຍ

+ ຕັ້ງຫາກ ເຄືອງຄັ້ງແຄ້ນ    ພະໄທແຫ່ງພະຍາຫລວງ ແທ້ແລ້ວ

ຕູ້ຂອຍ ພາກັນເດີນ    ດ່ວນມາທັງຟ້າວ

ແຕ່ນັ້ນ ຊຽງກໍ່ໂດຍຄຳເຈົ້າ    ບໍ່ມີນານເລີຍແລ່ນ

ໄປຮອດ ພະບາດເຈົ້າ    ຕົນອ້າຍກໍ່ຮີບຖາມ

+ ເຫນືອຫົວເຈົ້າ ຟັງຟ້າວ    ບອກໃຫ້ຮີບເດີນມາ ນັ້ນບໍ

ຂ້ານ້ອຍ ປະນົມກອນຖາມ    ວ່າແມ່ນການໃດແທ້

ເມື່ອນັ້ນ ພະຍາຫລວງເຈົ້າ    ຈາລະຈາບົນບອກ

ພະກໍ່ເລົ່າ ບອກໃຫ້    ຊຽງແຈ້ງຊູ່ອັນ

+ ບັດນີ້ ເພື່ອນກໍ່ເອົາຫົວລ້ານ    ມາພັນຮີບຊົນກັນ ຊຽງເອີຍ

ໃຜຜູ້ ມີໂຊກດີ    ວ່າຊິເອົາຍັງຊ້າງ ວ່າດາຍ

ບັດນີ້ ເຮົາຈັກໄປຫາໄດ້ ຜູ້ໃດມາຮັບຕໍ່ ເຂົານັ້ນ
ເຈົ້າຈົ່ງ ຄຶດຮ່ຳຮູ້ ລະນີງພຽນຊູອັ້ນ ພີ່ທ້ອນ
+ ຢ່າໄດ້ ປະປ່ອຍໃຫ້ ເສຍກຽດເມືອງເຮົາ ແທ້ເນີ
ຄັນວ່າ ເຮົາປະລາໄຊ ຊິສ່ວຍສິນເສຍລ້າ
ແຕ່ນັ້ນ ຊຽງຈາຕານ ຂານຄຳຮັບພາກ
ຂ້າບໍ່ ຢູດຢ່ອນຢ້ານ ເຂົາແທ້ທີ່ໃຍ ພະເອີຍ
+ ຫົວລ້ານ ເຂົາຫລີ່ານັ້ນ ມີປ່ຽວຄືນດຽວ ດອກນາ
ເຮົານີ້ ມີຈຳນວນຫລາຍ ທົ່ວເມືອງມວນລົ້ນ
ຂ້າຈັກ ອາສາແທ້ ບໍ່ມີເຄືອງຈັກສິ່ງ
ກະກູມ ວ່າການທີ່ນີ້ ຊິມາຮ້ອນຮ່ອນໃດ ນັ້ນເດ
+ ແມ່ນວ່າ ເຂົາຫາກມີລິດທີກ້າ ແຮງມາກຫລືອຫລາຍ

ກໍຕານທ້ອນ

ຂ້າຈັກເອົາ ພະຫຍາຄຶດ ຂື່ນມັນຈົນໄດ້
ຂໍໃຫ້ ອົງກະສັດເຈົ້າ ທົງພະໄທ ຕັ້ງທ່ຽງ ທົ້ນທ້ອນ
ອັນວ່າ ໄຊຊະນະນັ້ນ ຕ້ອງເປັນແທ້ແກ່ຝ່າຍເຮົາ
+ ແຕ່ນັ້ນ ຊຽງກໍ່ຂຽນສະລາກແລ້ວ ຢາຍຫມູ່ອະເກສາ
ທັນມາໂຮມ ໃນນະຄອນ ອະເນກນອງເນືອງລົ້ນ
ຕາມແຕ່ ໃນເມືອງໄດ້ ສາມພັນທັດທ່ຽງ ຈິງແລ້ວ
ອັນວ່າ ບ້ານນອກພຸ້ນ ຫລືອລົ້ນໃຫມ່ມາ ເຈົ້າເອີຍ
+ ເຂົາກໍ່ມາໂຮມເຮືອນຊຽງຫມັ້ນຽງ ຝົດສະນັ່ນນັນເນືອງ
ຫລຽວເບິ່ງ ໄປທາງໃດ ແມ່ນແຕ່ຄົນຫົວລ້ານ
ຊຽງຈິ່ງບອກໃຫ້ ໄພລັງເຈ້ຍ ປຸນແປງຕົກແຕ່ງ

ບອກໃຫ້ຫາ ໝູ່ເຈ້ຍ	ມາໃຫ້ມາກຫລາຍ

+ ແລ້ວຈຶ່ງບອກໃຫ້ ເອົາຝັ້ນເຊືອກເຈ້ຍ ກົ້ວກ່ອນສາມແກວ

ແລ້ວໃຫ້ເອົາ ຂີ້ນຄວາຍ	ທັງເປືອກດຳໂລມໄວ້

ແລ້ວຈຶ່ງ ປັ້ນເປັນເສັ້ນ	ຊາວວາທັງສີ່ ເສັ້ນເນີ

ເຮັດໃຫ້ຄື ດັ່ງເສັ້ນ	ໜັງຄ້ອງຊູ່ອ້ນ

+ ສູຈຶ່ງກຽມໃຫ້ໄດ້	ຕົກແຕ່ງປຸ່ນແປງ

ຈຶ່ງຮີບໂຮມເອົາມາ	ຢ່າໜ່ວງເນີນນານຊ້າ ແທ້ເນີ

ປະກາດໄປປອງໃຫ້	ຊາວເມືອງຮູ້ທົ່ວ

ເພື່ອຊິ ປຸ່ນແຕ່ງຕັ້ງ	ກຽມໄວ້ຮ່ວມມື

+ ສູຈຶ່ງ ຮີບດຸ່ງດັ້ນ	ໄປຊອກເອົາສະໂນ

ເອົາມາຕົກ	ແຕ່ງປຸ່ນເປັນຄອນ

ລວງຍາວໄດ້	ສາມວາເປັນຂະໜາດ

ລວງໃຫຍ່ດ້ານ	ທຽມເທົ້າທໍ່ສາກມີ ນັ້ນເນີ

+ ແລ້ວໃຫ້ເອົານ້ຳທາງລວາດແຕ້ມ ທາທົ່ວໄປໝົດ

ເຮັດໃຫ້ ມັນເປັນຄື	ແກ່ນກະຍູງຈີງແລ້ວ

ສູຈຶ່ງ ເອົາກັນພ້ອມ	ປຸ່ນແປງໂດຍຮີບ

ຢ່າໃຫ້ຊ້າ	ນານແທ້ທ່ຽວໂຮມ ທ່ານເຮີຍ

+ ແຕ່ນັ້ນ ຝູງໝູ່ທົວເຫລືອມລ້ານ ມາມາກຫລວງຫລາຍ

ອະເນກນອງມາໂຮມ	ທີ່ເຮືອນຊຽງໝັ້ນຽງ

ສິນໆຍາຍ	ເມືອງມັນຕ້ານປາກ

ເອົາຢາກຮູ້	ໃຫ້ມາຍ້ອນເຫດໃດ

+ ບາງພ່ອງ ຂອງຝາກລົ້ນ	ເດຍລະດາດຍໍຖວາຍ ກໍ່ມີ

ລາວພ່ອງ ເອົາເວີນຄຳ ມອບເວນຊຽງໝັ້ນຽງ
ອັນນີ້ ພໍແຕ່ເປັນສິນຈ້າງ ຂໍດອມທານໂທດ
ຄັນວ່າ ນ້ອງພະເຈົ້າບໍ່ລ້ຽງ ຝູງຂ້າສ່ວນຕາຍ ແທ້ແລ້ວ
+ ເຂົາກໍ່ ຂົນເຄື່ອງຕ້ອນ ມາມອບຍັງຊຽງ
ຝູງຂ້ານີ້ ເປັນແນວຫລານ ແກ່ບໍ່ມີແຮງແລ້ວ
ບັດນີ້ ຝູງຂ້າຂໍດອມຖ້ອນ ບໍ່ເຄີຍຊົນດອມເພື່ອນ ຈົງນາ
ທໍ່ວ່າ ເກີດມາແຕ່ນ້ອຍ ຈົນເຖົ້າບໍ່ທ່ອນເຫັນ ເຈົ້າເອີຍ
+ ເຂົາກໍ່ ວອນທ່ອນທ້າວ ຫລາຍເທື່ອເລີງ ຫັ້ນແລວ
ແຕ່ວ່າ ຊຽງໃຈທານ ບໍ່ຍອມຟັງໄດ້
ເມື່ອນັ້ນ ຊຽງຈາຕ້ານ ອະເກສາເວົ້າບອກ
ສູ່ຈົ່ງ ໄປຢູ່ປັ້ງ ສະໜາມກ້ວາງພັກເຊົາ ກ່ອນທ້ອນ
+ ກູຈັກ ໄປເລືອກເລັ້ມ ເອົາແຕ່ຕົວດີ
ຄັນວ່າ ຕົວໃດວາຈາແຂງ ກ່າວທານໃຈກ້າ
ຍັງຈັກ ເອົາການໄດ້ ຊົນພັນແພ້ເພື່ອນ ດັ່ງນັ້ນ
ພະບາດເຈົ້າ ຈັກປົງໃຫ້ລາຊະທານ ແທ້ດາຍ
+ ແຕ່ນັ້ນ ເຂົາກໍ່ຄຶດຄັ່ງແຄ້ນ ກົວແຕ່ຄວາມຕາຍ
ທໍ່ວ່າ ບໍ່ອາດຈົງໃຈຂືນ ອ່ອນຍອມທະລອນເຍື້ອນ
ອົດສາ ຈົງໃຈກັ້ນ ເດີນໄປຕາມສັ່ງ
ຂໍພະອິນ ຢູ່ຟ້າ ລົງຢຽມລ່ຳຄອຍ ແດທ້ອນ
+ ແຕ່ນັ້ນ ເຂົາກໍ່ລຸດໆຍ້າຍ ໄປຈອດເຊົາສະໜາມ
ຊາວອະເກສາໝົດ ໝູ່ມວນມາພ້ອມ
ແຕ່ນັ້ນ ກະນິດຖານ້ອຍ ໄປດູເລືອກເບິ່ງ

ຕົວໃດ ຍັງລື່ນລົ້ນ　ດີແທ້ກໍຈື່ງເອົາ ວ່າດາຍ

+ ລາງພ່ອງ ຕົ້ງແມ່ນລ້ານ　ແຕ່ພຽງວ່ອນທາງຫລັງ

ໜ້າຜາກ ຍັງມີຜົມ　ຍືດຍາວດຳປີ້

ຫລຽວເບິງ ທາງຫລັງລ້ານ　ຜົມບໍ່ມີຕົກຫລື່ນ

ບາດວ່າ ໜ້າຜາກຊ້ຳ　ຜົມດົ້ວຍືດຍາວ

+ ຕົວນີ້ ຊື່ວ່າລ້ານສະເນັ້ງເຄັ້ງ ບໍ່ຄວນຖືກລາຊະການ

ເປັນທໍ່ ເບົາໃນເຮືອນ　ໃຫ້ລູກເມຍເຂົາໃຊ້

ເຮົາຊິເອົາ ໄປໃຊ້　ຊົນກັນມັນບໍ່ຖືກ

ເອົາອອກໄປມອບໃຫ້　ພະຍາເຈົ້າຊິບໍ່ເອົາ

+ ລາງພ່ອງ ລ້ານແວດລ້ອມ　ເປັນຍ່ອມຢູ່ຈອມຂ້ອນ ກໍ່ມີ

ຄືດັ່ງ ຈອມໂພນພຽງ　ພຸ່ມແກມກໍຫຍ້າ

ເປັນທີ່ ເຕົາທີວໄຫ້　ຫາກັນເຂັ້ນກູກ

ເພາະວ່າ ພັດພື້ນອງ　ທັງເຊັ້ອຍ່ານາຍ ແທ້ແລ້ວ

+ ຕົວນີ້ ລ້ານອ້ອມແກ້ວ　ຮັກຊັບສິ່ງຂອງເຮືອນ

ບໍ່ຄວນ ເອົາການພະ　ທໍ່ຢູ່ດອມເມຍແກ້ວ

ເອົາໄປ ຖວາຍພະຍາເຈົ້າ　ຊິຟຸ່ນເຟືອນຮ້າຍຂາດ

ຊິເອົາໄປ ຕໍ່ສູ້　ຊົນໄດ້ກໍບໍ່ດີ

+ ລາງພ່ອງລ້ານ　ໜ້າຜາກອ່າວເບົາເຂີນ

ເປັນເດື່ນ ຄືໂນນນາ　ບ່ອນສະຫາຍເຄີຍຄຸ້ມ

ຕົວນີ້ ຊື່ວ່າ ສະແນແຂລ້ານ　ການບໍ່ມີຈັກສິ່ງ

ດີທໍ່ ເຊິງຫລົ້ນຖອຍ　ພາງລົ້ນແວ່ງວອນ ແທ້ແລ້ວ

+ ຕັ້ງຫາກ ແບະແຮະແທ້　ກັບກ່າຍລວງພາງ ເຈົ້າເອີຍ

ມັນກໍ່ຕົວະ ວ່າຕົວຊະລາການ　　ພະຍາດມີໃນເນື້ອ
ລາງພ່ອງ ພົມບໍ່ມີຈັກເສັ້ນ　　ຫົວມົນຄືບາດ
ຕົວນີ້ ຊື່ວ່າ ໝາກນ້ຳເຕົ້າແລ້ງ　　ແຮງນ້ອຍບໍ່ຖືກການ ແທ້ດາຍ
　+ ລາງພ່ອງ ໜ້າຜາກລ້ານ　　ເທົ້າຮອດຈອມຂວັນ
ພີຈັກ ແຍງກະບວນດູ　　ຖ່ອງຫົວຈິງແທ້
ຍັງແຕ່ ວຽນໄປອ້ອມ　　ກົກຫູສອງຝ່າຍ
ຕັ້ງຫາກຄື ຄົນປອກໄຂຕົ້ມ　　ໃສເຫລື້ອມດັ່ງດຽວ
　+ ຕົວນີ້ ຊື່ວ່າ ຕະໂໝກໂຂກລ້ານ　　ຫຳມະໂອດແຮງຝູມ
ກໍ່ທໍ່ ແຮງຖຽງຄວາມ　　ຄຽດເລີງບໍ່ມີແລ້ວ
ຄົນວ່າ ເພື່ອນຫາກເຈລະຈາເວົ້າ　　ຫົວຂວັນຊິສວ່າ ເມື່ອໃດນັ້ນ
ມັນກໍ່ ຮີບຄຽດຕ້ອນ　　ຂຶມໜ້າຢູ່ເລີງ ດອກແລ້ວ
　+ ຕົວໜຶ່ງ ຕົນສູງໃຫ່ຍແທ້　　ພົມຫລື່ນໝົດຫົວ
ແຕ່ວ່າ ເຕັມຕົວດຳມືຂົນ　　ດັ່ງຕົວໝີແທ້
ຕົວນີ້ ມີແຮງກ້າ　　ເອົາໄປລອງເບິງ
ລາງເທື່ອ ຊົນຫາກແພ້　　ຊິມີໜ້າພໍ່ພະຍາ
　+ ຕົວນີ້ ຊື່ວ່າ ລ້ານຈື້ຄີ　　ເຮັດໄຮ່ກາງດົງ
ມັນນີ້ ສີພາວດຳ　　ໃຫ່ຍແຮງຄົນກ້າວ
ຕົວນີ້ ຄວນທີ່ເອົາການເຈົ້າ　　ເຫນືອຫົວຍັງຂະໜ່ອມ ເຮົາແລ້ວ
ມັນນີ້ ຄົນຖືກດ້ານ　　ບູຮານແທ້ຄ່ອງຄື ເຈົ້າເອີຍ
　+ ຊຽວກໍ່ ຕົກແຕ່ງພ້ອມ　　ປົງລາຊະລາງວັນ
ຊຽວໄດ້ ເອົາຄຳແສນ　　ມອບເວນວາງໃຫ້
ກັບທັງ ອາພອນຜ້າ　　ພືນດີທາງເທດ

| | |
|---|---|
| ຊຽງກໍ່ ຍໍມອບມ້ວນ | ວາງໃຫ້ແກ່ມັນ ແທ້ແລ້ວ |
| + ຊຽງກໍ່ຈຶ່ງ ອາບັດໃຫ້ | ສອນທຸກສິ່ງອັນດີ |
| ບອກໃຫ້ ມີຄວາມຫລັກ | ເລກົ້ນລວງລີ້ |
| ເອົາໃຫ້ ອົບຈົບແຜ້ | ມີໄຊຊະນະໃຫຍ່ |
| ຮູ້ໃຊ້ເຊືອກຫລາກລ້າວ | ກົນແກ້ວາດຜະຫຍາ |
| + ມັນກໍ່ ຮຽນຮ່ຳໄດ້ | ທຸກສິ່ງຊຽງສອນ |
| ຊິອອກແຮງ ອົບເອົາ | ຊະນະມານຈົບໄດ້ |
| ຊຽງກໍ່ ດີໃຈແທ້ | ມະໂນໃນຊອຍຊື່ນ |
| ຊຽງຈຶ່ງ ບອກແກ່ ຊຸມອື່ນນັ້ນ | ທົວລ້ານເລີກເມືອ |
| + ຕັ້ງຫາກ ຫລາຍລື່ນລົ້ນ | ທົວລ້ານຫມື່ນປາຍຄົນ |
| ເອົາກໍ່ ບິນແຊວສຽງ | ເລີກລາເມືອ ບ້ານ |
| ຈຶ່ງແມ່ນຄົນທົວລ້ານ | ລຽນກັນເປັນຫມູ່ |
| ລ້ານກໍ່ ຫາກລ້ານບໍ່ແພ້ | ທົວຫລ້ອນບໍ່ຖືກການ ເຈົ້າເອີຍ |
| + ບໍ່ອາດ ຈັກນັບອ່ານໄດ້ | ທົວລ້ານມາກຫລືອຫລາຍ |
| ລ້ານຕ່າງກັນ ໄປຫມົດ | ແບບບໍ່ ຄືກັນແທ້ |
| ຈຳແນກໄປ ບໍ່ມີໄດ້ | ດີໄປຫມົດຊູ່ອາດ ເສຍແລ້ວ |
| ເມື່ອຈັກເວົ້າ ຢູ່ຊ້າ | ກໍ່ຍັງກວ້າງຍືດຍາວ ເຈົ້າເອີຍ |
| + ອັນນີ້ ພໍແຕ່ເວົ້າເລື່ອງໃຫ້ | ພໍຄິດຄະນິງເຫັນ |
| ຂໍໃຫ້ ຄົນເຮົາຄຶດ | ຮ່ຳໃນໃຈໄວ້ |
| ແຕ່ນັ້ນ ເອົາເລົ່າເອົາກັນພ້ອມ | ລາຫນີທຸກຫມູ່ |
| ເອົາກໍ່ ເລີຍເລົ່າຍ້ອງ | ຊຽງຫມັ້ນຮຽວວ່າດີ |
| + ບັດນີ້ ຊຽງຫມັ້ນຮຽງໄດ້ | ຄຶດຮ່ຳໃນໃຈ |

ວ່າແມ່ນ ບຸນປາງຫລັງ　　　　ສົ່ງມານຳຍູ້
ຊູໃຫ້ເຫັນ ຫົວລ້ານ　　　　ຄົນດີກ້າແກ່ນ
ຢຽວວ່າ ຊິບໍ່ມີ　　　　ການເຈົ້າແຜ່ນດິນ ແທ້ດາຍ
　　+ ເທື່ອນີ້ ຈຶ່ງແມ່ນໄດ້　　　　ສົມດັ່ງຄວາມຫວັງ
ສາມາດເຮັດໃຫ້ ພະຍາດີໃຈ　　　　ຄອບເຮົາຈົນໄດ້
ສຳນົວ ເຮົາທັງຫລາຍພ້ອມ　　　　ກັນຕາຍທົວແຕກ
ອັນວ່າ ເມຍ ແລະ ລູກເຕົ້າ　　ຊິເປັນຫມ້າຍເພື່ອນຫຍັນ ແທ້ແລ້ວ
　　+ ບັດນີ້ ບຸນມາກລົ້ນ　　　　ຊາຕາເກົ່າຍັງມີ
ຈຶ່ງໄດ້ຄືນມາເຮືອນ　　　　ພົບລູກເມຍຄາວນີ້
ຄົນບໍ່ມີບຸນລົ້ນ　　　　ເທວະດາບໍ່ຊູຊ່ອຍ
ແມ່ນຊິລົດຊົ່ວມ້ຽນ　　　　ຕາຍຍ້ອນພໍ່ພະຍາ ແທ້ແລ້ວ
　　+ ຄ້ອມວ່າ ເຂົາກ່າວແລ້ວ　　　　ແລ້ວຢູ່ເຢັນໃຈ
ຊຽວກໍ່ ແຈນງສຽງ　　　　ແຕ່ງແປງຕາງເຈົ້າ
ນັບແຕ່ ອະເກສາເຂົ້າ　　　　ມາໂຮມພໍ່ຫມື່ນ
ຊຽວກໍ່ ໄປເລືອກໄດ້　　　　ຫົວລ້ານຜູ້ດຽວ
　　+ ຄືຈັກ ສາມາດແພ້　　　　ຮູບຊົງຊິມີແຮງ
ມັນແມ່ນ ຄົນດຳແດງ　　　　ຮ່າງຄິງກົງກາ
ເບິ່ງຮູບຊົງ ສີຫນ້າ　　　　ວາຈາ ກໍ່ສະຫລາດ
ອັນວ່າ ລ້ານຫມູ່ນັ້ນ　　　　ໂສມຫນ້າພອກບໍ່ຄື
　　+ ແຕ່ນັ້ນຊຽງບອກໃຫ້ ໄພເຊືອກຈ້ຍ ເຮວຮີບນຳມາ
　　　　　　　　　　　　　　ທ່ຽວເທີ້ນ
ເຮົາຈັກ ປຸນດາດີ.　　　　ແຕ່ງແປງທຳໄວ້

ແຕ່ນັ້ນ ໄທຄັງເຈ້ຍ　　ເຣອພະລັນຟ້າວຟັ່ງ
ເລີຍເລື່າແລ້ວ　　ນຳໃຫ້ຫ່ຽວຖວາຍ
+ ແລ້ວຈຶ່ງ ບອກໝູ່ໄດ້　　ຈັດຮີບເຣອພະລັນ
ເຂົາກໍ່ ໂດຍຄຳພະ　　ອາດຍາຊຽງໝັ້ນຽງ
ເລີຍເລື່າ ບໍລະບອນແລ້ວ　　ນຳໄປມອນມອບ
ຖວາຍແຈ່ມ ເຈົ້າ　　ກະນິດຖານ້ອຍຊູອັ້ນ
+ ເຖິງເມື່ອ ວັນຮຸ່ງເຊົ້າ　　ຊຽງແຕ່ງເດົາດາ
ແລ້ວປ່າວເຕືອນ ປະຊາຊົນ　　ພວກຊຸມຊາວບ້ານ
ຊຽງກໍ່ສອນ ເຂົາໃຫ້　　ຟັງດູທຸກໝູ່
ເຂົາກໍ່ ໂດຍອາດເຈົ້າ　　ຈຳແຈ້ງຊູຄົນ
+ ແລ້ວ ຈຶ່ງເອົາເຊືອກເຈ້ຍ　　ຮິງຜູກຍັງແອວ
ຫົວມອນເປັນ　　ສີ່ອັນພໍເສັ້ນ
ແລ້ວເລື່າ ບິດສະພັນເຂົ້າ　　ດອມກັນກຸມຜູກ
ອັນວ່າ ຄົນສີ່ຮ້ອຍ　　ໄປໄວ້ເວື່ອນຫລັງ
+ ຝູງໝູ່ ໄທຄ້ອນໂປ້ງ　　ໄປກ່ອນນຳຫລັງ ກໍ່ມີ
ອັນວ່າ ໄທຊາວເມືອງ　　ຫລົ່ງນຳເຫລືອລົ້ນ
ຊຽງກໍ່ ທຳກະບວນໃຫ້　　ຊາວສະເພົາຢ້ານຢ່ອນ
ຈຳໃຫ້ເຂົາ ໄປຕີປ່າວຄ້ອງ　　ກອງເອີ້ນທົ່ວເມືອງ
+ ວັນນີ້ ເຮືອນໃຜກໍ່ໃຫ້　　ລີ້ຢູ່ອັດປະຕູ ຈິງເນີ
ເພີ່ນຈັກເອົາ ລ້ານສິນບັດໄປ　　ອາບເສຍສິ່ງນ້ຳ
ອັນວ່າ ປະຕູບ້ານ　　ທາງຫລວງໃຫ້ອັດທີ່ ດີເນີ
ຫລອນວ່າ ມັນຫາກມາລູ່ເຊົ້າ　　ເຮືອນມ້າງມຸ່ນກະຈອນ ບໍ່ຢ່າແລ້ວ

+ ອັນວ່າ ອັກຄີໄຟກໍໃຫ້ ມຸດມອດປົກຖົມ ເສຍເນີ
ຫລອນວ່າ ມັນມາຕຳ ຖືກເຮືອນຊິເພມ້າງ ບໍ່ຮູ
ໄຟຈັກ ລົນລາມໄໝ້ ທັງເມືອງເຊັງຊ່າ
ມັນຈັກ ດັບຫ່ຽວແຫ້ ວາຍບ້ານຄອບໄຟ ແທ້ດາຍ

+ ແລ້ວເລົ່າ ເຕີນທັງໄທສະເພົາໃຫ້ ເອົາເພຕາອອກໄປໄກ
ໄປຢູ່ກາງວັງໃສ ແມ່ນະທີທານກວ້າງ ພຸ້ນທ້ອນ
ແລ້ວໃຫ້ເອົາ ທີວລ້ານ ໃນສະເພົາຊຸກເຊື່ອງ ເສຍເນີ
ມັນນີ້ ຣ້າຍຂະໜາດແທ້ ພານທ້ານກໍ່ບໍ່ຟັງ ເຈົ້າເອີຍ

+ ຢ່າໃຫ້ຄົນ ຜູ້ໜ້າພາກລ້ານ ຢືນຢູ່ໃນສະເພົາ ແທ້ເນີ
ຫລອນວ່າ ມັນແລເຫັນ ຊິໂດດໄປຊົນປ້າ
ແຕ່ນັ້ນ ຊາວສະເພົາຍ້າຍ ເພຕາຊຸກອອກ
ໄປຈອດປັ້ງ ກາງນ້ຳແມ່ທະເລ ແທ້ແລ້ວ

+ ແລ້ວຈຶ່ງເອົາ ທີວລ້ານ ໄປລີ້ຊ່ອນໃນສະເພົາ
ເອົາມັນໄປ ເນົາອັດ ຢູ່ສະເພົາທາງພົ້ນ
ແຕ່ນັ້ນ ເຂົາກໍ່ຄອຍຢູ່ຖ້າ ອະເກສາຄອງເບິງ
ວ່າຈັກ ເປັນຜູ້ຣາຍ ດີແທ້ສ່ຳໃດ

+ ແຕ່ນັ້ນ ປະຊາຊົນໝູ່ບ້ານ ພ້ອມພ່ຳຟັງຄວາມ
ເຂົາກໍ່ ອັດປະຕູເຮືອນ ບໍ່ໄຂປະຕູບ້ານ
ອັນວ່າ ເຮືອນຊານນ້ຽມ ຟືນໄຟປົກເຖົ່າ
ທັງປະຕູ ແລະ ປ່ອງຢ້ຽມ ອັດໄວ້ຊູ່ພາຍ

+ ທຸກຄົນ ໃນໝູ່ບ້ານ ບໍ່ໃຫ້ອອກເຮືອນຊານ
ຄົນນອກ ບໍ່ໃຫ້ເດີນຈອນຫລົງ ເຂົ້າມາໃນບ້ານ

ເຮືອນໃຜແທ້ ເຮືອນມັນລີ້ຢູ່
ເມື່ອບໍ່ໂດຍອາດເຈົ້າ ກົວຢ້ານໂທດມີ ແທ້ດາຍ
+ ພໍເມື່ອ ສຸລິຍະຄ້າຍ ຄ້ອຍຕ່ຳລົງແລງ
ເຖິງເມື່ອ ເວລາດີ ລືກງາມຍາມກວ້າງ
ອັນແມ່ນຍາມຄົນກ້າ ມະຫາ ໄຊຊິມາສູ່
ຊຽງຈຶ່ງ ຕົກແຕ່ງທ້າວ ກຽມພ້ອມຊູ່ອັນ
+ ຊຽງກໍ່ ບອກແກ້ຄົນສີ່ຮ້ອຍ ຖືແສ້ເຊືອກໜັງ
ເສັ້ນໜຶ່ງ ດຶງຄືນຫລັງ ເສັ້ນໜຶ່ງດຶງໄປໜ້າ
ເສັ້ນໜຶ່ງ ດຶງແຍກໄປທາງຊ້າຍ ທາງຂວາດຶງເຄິງ
ດຶງເຊືອກ ທັງສີ່ເສັ້ນ ແຮງໄວ້ເຄິງເທົ່າກັນ
+ ເຊືອກສີ່ເສັ້ນ ໃຫ້ມັນເຄິງທໍ່ດຽວກັນ
ໃຜຫາກ ຍານທາງໃດ ໂທດຊິມີທາງນັ້ນ
ແຫນແຫ່ ຄົນທົວລ້ານ ເດີນໄປກ້ອງສະນັ່ນ
ເສັ້ນເຊືອກໃດ ກໍ່ມີຄົນສີ່ຮ້ອຍ ດຶງໜ້າຈ່ອງຫລັງ
+ ຝູງໝູ່ຖືໄມ້ຄ້ອນ ໃຫ້ໄປກ່ອນນຳຫລັງ ກໍ່ມີ
ຄົນວ່າ ມັນລັງຮຸດ ກໍ່ຈຶ່ງຕີຕາມນັ້ນ
ຄ້ອນວ່າ ບໍ່ລະບອນແລ້ວ ເອົາກັນຍ້າຍອອກ
ອັນວ່າ ຄົນສີ່ຮ້ອຍ ໂຮມຕຸ້ມແຫ່ໄປ
+ ມັນກໍ່ ຍົກຍ້າງຍ້າຍ ໄປບ່ອນມີສະເພົາ
ເຊົາຢູ່ແຄມ ທາລາ ບ່ອນສະເພົາເຊົາຢັ້ງ
ຕັ້ງທາກ ລຸດງຍ້າຍ ຄົນນຳແຫນແຫ່
ຄັບຄັ່ງແໜ້ນ ເຕັມທ້າງຮ່ອມທາງ

| | |
|---|---|
| + ຟັງສຽງກອງ ແລະ ຄ້ອງ | ຟົດສະນັ່ນເນືອງນັນ |
| ຫລຽວເບິ່ງ ຄົນຫລາຍແສນ | ແຫ່ນຳຕາມກົ້ນ |
| ມີທັງສຽງ ຄົນຮ້ອງ | ສຽງກອງຕີຕ່ອຍ |
| ອັນວ່າ ສຽງລັ່ນຄ້ອງ | ຄືຟ້າເກື່ອນທະລາຍ |
| + ລາງຄົນຮີບຟົ່ງຟ້າວ | ປົບແລ່ນຕາມໄປ |
| ລາງພ່ອງ ກົວເກັງຂາມ | ຈອບຢູ່ເຮືອນ ແລຢຽມ |
| ລາງພ່ອງ ປີນປາຍຮົ້ວ | ຫນາມເລີຍເກາະຂີດ ກໍ່ມີ |
| ລາງພ່ອງ ຂຶ້ນຕົ້ນໄມ້ | ສູງພົ້ນເບິ່ງນຳ |
| + ລາງພ່ອງ ຂຶ້ນຕົ້ນໄມ້ | ລັກເບິ່ງຢູ່ແຄມສວນ |
| ບໍ່ອາດ ພົບລະນາຄົບ | ຄັ່ງຄົນມາເຕົ້າ |
| ຕັ້ງຫາກ ຍືນມອງຢຽມ | ຢູ່ແຄມທາງສອງຟາກ |
| ເຫມືອນມົດ ປວກຊ້ອງ | ແຊວຮ້ອງທົ່ວເມືອງ |
| + ດີແຕ່ ສ່ວາງເຄົ້າ | ຄົນແລ່ນນຳຫລັງ |
| ຕາມທາງບົດ | ມືດມົວມຈເຕົ້າ |
| ແຕ່ນັ້ນ ເຂົາກໍ່ເອົາທົວລ້ານ | ໄປເຖິງແຄມທ່າ |
| ບ່ອນສະເພົາ ທ້າຮ້ອຍ | ຊຸມຄ້າຢູ່ເຊົາ |
| + ແຕ່ນັ້ນ ຊາວສະເພົາພໍ່ຄ້າ | ຢືນເບິ່ງຊອນລອນ |
| ໃຜກໍ່ມາ ຄອຍລັກ | ເບິ່ງຄົນທົວລ້ານ |
| ວ່າຈະມີແຮງສູ້ | ຄົນສະເພົາຫລືບໍ່ |
| ທົວລ້ານ ກໍ່ເລີຍຮຸດແກ່ງແກ້ | ຫນັງເຈ້ຍຂາດສະເດັນ |
| + ອັນວ່າ ເຊືອກສີ່ເສັ້ນ | ຂາດມຸ່ນເປັນຜົງ |
| ຄືດັ່ງ ພາຍສານຊັກ | ຂາດໄປເປັນບັ້ນ |

ຝູງຄົນລົ້ມ　　　　ໂຄມກັນຂືນໄຂ່ວ
ອັນວ່າ ຄົນສີ່ຮ້ອຍ　　　　ຫົວເຫົ້າແຫບດິນ ແທ້ແລ້ວ
　　+ ແຕ່ນັ້ນ ໄພ້ຄ້ອນໂປ້ງ　　　　ເຂົ້າທຸບຕີແຮງ
ຝູງໝູ່ ຫັນດົງຫັກ　　　　ມຸ່ນກະຈວນເສຍສຽງ
ມັນກໍ່ເລົ່າ ຄະໂຍຄະເຍງເຕັ້ນ　　　　ໄປມາເຕັ້ນຕື່ນ
ບໍ່ໄດ້ ຄິດຢ່ອນຢ້ານ　　　　ທຸລິ້ນອຍໜຶ່ງສັງ ແທ້ດາຍ
　　+ ແມ່ນວ່າ ເຂົ້າຫາກກຸມຟາດຄ້ອນ ສະໂນຕ່ອຍຕີໜັກ
ກໍ່ດີແລ້ວ
ຄ້ອນສະໂນ ກໍ່ຫາກຣຸນແຮງຫັກ　　　　ອອກເປັນຫລາຍປັ້ນ
ຫລຽວເບິ່ງ ຄົນຫົວລ້ານ　　　　ບໍ່ມີຄວາມເຈັບປວດ
ຍູ້ທ່າງວາກພຸ້ນພີ້　　　　ປຸ່ນເປື້ອງ ແລ່ນໄປ
　　+ ແຕ່ນັ້ນ ມັນກໍ່ປົບຄືນເມືອສູ່ບ້ານ　ເມືອງໃຫຍ່ຫາວາລາວະດີ
ຝູງໝູ່ຄົນ ແລ່ນນຳມັນໄປ　　　　ສະນັ່ນເນືອງເຟືອນຟັ້ນ
ເມື່ອນັ້ນ ຊາວສະເພົາຄ້າ　　　　ຈາກັນຊັບຊຶມ
ຫົວລ້ານ ເພິ່ນຫາກແຮງມາກລົ້ນ　　　　ເຫລືອແທ້ກວ່າເຮົາ ແທ້ດາຍ
　　+ ຕັ້ງວ່າ ໜັງສີ່ເສັ້ນ　　　　ຂາດມຸ່ນເປັນກະຈວນ
ອັນວ່າ ຄົນພໍພັນ　　　　ໄຂ່ວຂືນເຂົ້າລົ້ມ
ທັງເລົ່າ ເອົາຍັງຄ້ອນ　　　　ກະຍູງແດງກ້າແກ່ນ
ຍາວສາມວາ ຟາດເຂົ້າ　　　　ກໍ່ຍັງໄດ້ແລ່ນສະບາຍ
　　+ ເຂົ້າກໍ່ ຕີຫົວລ້ານ　　　　ນັບໝື່ນໂຮມກັນ
ຄ້ອນກໍ່ຫັກ ພົງກະຈວນ　　　　ຖືກມັນບໍ່ເຈັບຊ້ຳ
ແຕ່ນັ້ນ ຊາວສະເພົາຄ້າ　　　　ເມືອງຕານີຢ້ານຢ່ອນ

ກໍ່ຈຶ່ງ ຖາມໄຕ້ຖອຍ ຫົວລ້ານແຫ່ງເຂົາ

+ ທ່ານກໍ່ຈັກ ອາສາສູ້ໄດ້ ແພ້ເພື່ອນເອົາພະນັນ ແທ້ລີ

ຍັງຈັກ ເອົາແຮງຫົນ ຕໍ່ໄປປຸ້ນສູ້ ບໍເດ

ແຕ່ນັ້ນ ອະເກສາລ້ານ ໃນສະເພົາຢ້ານສິ້ນ

ມັນກໍ່ ອອກປາກຕ້ານ ຂານຖ້ອຍວ່າຍອມ ດອກແລ້ວ

+ ດູດັ່ງ ລິດທິເຂົາຝ່າຍພຸ້ນ ແຮງຂະໜາດເຫລືອສຸດ
ແທ້ແລ້ວ

ຢ້ານແຕ່ວາງຕົວຕາຍ ບໍ່ຕອບມັນຄືນໄດ້

ແຕ່ນັ້ນ ນາຍສະເພົາຄ້າ ເມືອງຕານີຟັງຢູ່

ເຫັນທີ ຫົວລ້ານເຈົ້າ ຄວາມຢ້ານວ່າຍອມ ດັ່ງນັ້ນ

+ ເຂົາກໍ່ ຕົກຄັ່ງແຄ້ນ ຂະລັງຈື່ມໃນທອງ

ເຮົາກໍ່ວ່າ ເຮົາແຮງຖະນັດ ພັດລື່ນເຮົາຫລາຍລົ້ນ

ອັນວ່າ ໃນຫົນຫ້ອງ ເມືອງໄກປະເທດອື່ນ ພາຍພຸ້ນ

ເຮົາກໍ່ ໄປພາບແພ້ ເອົາໄດ້ຊູ່ເມືອງ ແລ້ວເດ

+ ຫົວລ້ານເຮົາເກັ່ງກ້າ ເອົາຊະນະມາຫລາຍ ແລ້ວນາ

ໄປທ່ຽວພັນ ເມືອງໃດ ກໍ່ແມ່ນກິນເມືອງນັ້ນ

ກໍ່ຫາກ ເອົາຫົວລ້ານ ພັນຊົນຫລາຍສ່ຳ ມາແລ້ວ

ໃຜບໍ່ ຕັ້ງຕໍ່ໄດ້ ຫົວປິ້ນບວບຕາຍ ແທ້ນາ

+ ບັດນີ້ ຫົວລ້ານເມືອງ ທາວະລາແຫ່ງນີ້ ພັດແຮງກວ່າຂອງ
ເຮົາ ນີ້ເດ

ຍິ່ງກວ່າ ແມວພາຍສານ ໝື່ນຄົນບໍ່ເອົາແພ້

ເຮົາບໍ່ຊົນ ມັນໄດ້ ກໍ່ຈົນໃຈແຄ້ນຄັ່ງ ຈິງແລ້ວ

ເຮົາກໍ່ ຕົກຖ່ອຍຊາ　　ອາຍໜ້າເມື່ອຊິຄືນ ນັ້ນເດ

+ ເຂົາກໍ່ ຈື່ມໄຈ້ງ　　ທຸກປາກໃນສະເພົາ

ຕັ້ງວ່າ ເສຍແຮງມາ　　ໃຫ້ເພິ່ນຫົວອ້ອນໜ້າ

ບັດນີ້ ທະວາລາວະດີທ້າວ　　ຍັ່ງມີຊີ່ວ່ອນ ຕາຍແລ້ວ

ເຮົາບໍ່ອາດ ທອດພະເນດຢ້ຽມ　　ຫລຽວໜ້າເບິ່ງໃຜ ໄດ້ແລ້ວ

+ ເມື່ອນັ້ນ ນາຍສະເພົາພໍ່ຄ້າ　　ທຸກໝູ່ຊຸມກັນ

ຫົວລ້ານເຮົາ ກົວຫລາຍ　　ບໍ່ຕໍ່ຈິນເຂົາໄດ້

ດຽວວ່າ ໂຮມແຮງຊໍ້າ　　ເສຍຊີວິງດາຍເປົ່າ

ບັດນີ້ ເຮົາຢ່າຊ້າ　　ເມືອເຝົ້າພະຍອດເມືອງ

ທ່ຽວເຖີ້ມ

+ ແລ້ວເລົ່າ ລາບາດເຈົ້າ　　ເມືອສູ່ເມືອງເຮົາ ຊອບດາຍ

ມາບໍ່ມີ ໄຊສົງ　　ຮີບຄືນເມືອບ້ານ

ເຮົາບໍ່ຄວນ ດິງດີ້　　ເອົາໄພມາສ່ຽງ

ມັນຊິເສຍເຜົ່າຜູ້　　ຄົນລ້າບໍ່ໃຊ່ການ ທ່ານເອີຍ

+ ເມື່ອນັ້ນ ເຂົາກໍ່ຕົກແຕ່ງຫ້າງ　　ຍັງເຄື່ອງບັນນາການ

ທັງສິນພັນ　　ຄູ່ອັນໄປພ້ອມ

ກໍ່ຈຶ່ງ　　ນຳເມືອໄຫວ້　　ຖວາຍພະຍາເມືອງເທດ

ບົນບອກໃຫ້　　ຈອມເຈົ້າຊູອັນ

+ ເຮົາຂໍ ທູນທ່ອນທ້າວ　　ອົງອາດພະຍາເມືອງ ນີ້ແລ້ວ

ຫົວລ້ານເຮົາຍິນຍອມ　　ບໍ່ອາດຈີນກັນໄດ້

ອັນນີ້ ບັນນາການໃຫ້　　ສິນພັນມວນມອບ ຈິງແລ້ວ

ຫາກບໍ່ ເປັນໂຊກແທ້　　ຂໍເຈົ້າໂພດພາຍ ແດ່ທ້ອນ

+ ອັນວ່າ ຄົນທົ່ວລ້ານ    ຜູ້ຢູ່ໃນສະເພົາ
ມັນເລົ່າ ເລີຍມາເຈັບ    ປ່ວຍຄິງແຄນໄຂ້
ມັນໄດ້ ຍອມເສຍແລ້ວ    ບໍ່ທານອິນຕິຕ່ອຍ
ຜີບໍ່ເປັນ ດັ່ງນັ້ນ    ກໍ່ພໍ່ຫລົ້ນຕໍ່ກັນ ດອກແລ້ວ
+ ບັດນີ້ ຝູງຂ້າລາບາດເຈົ້າ    ເມືອສູ່ຕານີ ກ່ອນແລ້ວ
ຝູງຂ້າ ຈັກນຳຄຳຄືນ    ຄອບພະຍາເມືອງພຸ້ນ
ພະຈຶ່ງ ຍືນຍາວໝັ້ນ    ພັນປີຮ້ອຍຂວບ
ຢ່າໂສກຮ້ອນ    ສົງແຫ້ຫໍ່ໃຍ ພະເອີຍ
+ ຈຶ່ງໃຫ້ ສຸກຢູ່ລ້ວນ    ເມືອງສ່ວຍທະວີຄູນ ທັ້ນທ້ອນ
ຂໍໃຫ້ ປະລະມີງວຳ    ຄອບຄອງໄກກວ້າງ
ສຸກສຳລານ ດີເລື້ອຍ    ຢ່າມີໄພ ບັງບຽດ
ຝູງຂ້າ ຈັກຄືນຄອບເຈົ້າ    ສະຫາຍພຸ້ນຈຶ່ງໄກ ກ່ອນແລ້ວ
+ ແຕ່ນັ້ນ ທະວາລາວະດີທ່ອນທ້າວ    ຈາແຂກຄວາມດີ
ຂໍໃຫ້ ພາກັນເມືອ    ປອດໄພດີທ້ອນ
ຂໍຈຶ່ງ ນຳເອົາໄມຕີເຊື້ອ    ທະວາລາວະດີທັງຊາດ
ເອົາໄປ ຖາມຂ່າວເຈົ້າ    ສະຫາຍພຸ້ນໝື່ນທີ ແດ່ທ້ອນ
+ ເຂົາກໍ່ພາງ ພະຍາແລ້ວໆ    ຖວາຍບາດລາລົງ
ໜີຈາກ ອົງພະຍາຫລວງ    ບໍ່ອາດແລຫລີງຢ້ຽມ
ພ້ອມພ່ຳກັນ ເດີນຍ້າຍ    ລົງໄປເຖິງທ່າ
ເຂົ້າສູ່ທ້ອງ    ສະເພົາແລ້ວເບີກໜີ
+ ດີແຕ່ ລົມເປົ່າເປື້ອງ    ເສົາກະໂດ່ງແກ່ວງສະ
ເພົາເດີນ

ພາຊາວສະເພົາ　　ລ່ວງແດນເດີນຍ້າຍ
ໃພກໍ່ ເຍົາຍິນໜ້ອມ　　ເສຍໃຈເຕັມຂະໜາດ
ສະເພົາ ຫ້າຮ້ອຍ　　ເມືອພ້ອມພ່ຳກັນ
+ ພໍ່ດູ ຍິດງຍ້າຍ　　ສະເພົາອອກຕາມລົມ ພຸ້ນເຍີ
ດີແຕ່ ເພຕາໄຫລ　　ລ່ວງໄປຕາມນ້ຳ
ຫລາຍວັນໄດ້　　ຫລາຍເດືອນຄາວຖິບ
ກໍ່ຈຶງ ເມືອຮອດຫ້ອງ　　ເມືອງກວ້າງແຫ່ງຕົນ
+ ເຂົາກໍ່ ຂຶ້ນຂາບໄຫວ້　　ພະຍາໃຫ່ຍຕານີ
ເທື່ອນີ້ ເສຍໃຈເຮົາ　　ຄອບບໍ່ລອງຊົນໄດ້
ເພື່ອນຫາກ ມີຫົວລ້ານ　　ລິດທີແຮງສຸດຂະໜາດ ຈິງແລ້ວ
ກໍ່ຫາກ ດູຍິ່ງພ້ຽງ　　ເຫລືອລົ້ນກວ່າເຮົາ ພະເອີຍ
+ ອັນວ່າ ໜັງສີເສັ້ນ　　ຂາດມຸ່ນເປັນພົງ ແທ້ນາ
ຫລຽວເບິງ ຄົນພໍພັນ　　ກຶ້ງກອງກັນລົ້ນ
ທັງເລົ່າ ເອົາຄ້ອນປົ້ງ　　ນຳຕີນັບຕັ້ງໝື່ນ
ກໍ່ບໍ່ ເຈັບແສບໄດ້　　ໃນເນື້ອແຫ່ງມັນ
+ ທຸກສິ່ງ ເຊືອກ ແລະ ຄ້ອນ　　ກຸມແກ໊ງມັນ
ກໍ່ຫາກ ອໍລະຫາຍເສຍ　　ມຸ່ນພົງຫາຍສ້ຽງ
ຕັ້ງວ່າ ເຫລືອແຮງແທ້　　ອະເກສາຢ້ານສິ້ນ
ເປັນທີ່ ຄ້ຳບໍ່ໄດ້　　ຝູງຂ້າກໍ່ຈຶງມາ ພະເອີຍ
+ ເຮົາຫາກ ເຄີຍພາບແພ້ ຫົວລ້ານອື່ນຫລາຍຄົນ ແທ້ແລ້ວ
ຄົນທະລາວະດີພັນ　　ບໍ່ເປັນແນວນັ້ນ
ຕັ້ງວ່າ ມີແຮງແທ້　　ພາຍສານກໍ່ບໍ່ເກີງ

ຫາກບໍ່ເປັນດັ່ງນີ້ ຝູງຂ້າບໍ່ທ່ອນຫນີ ພະເອີຍ

+ ເມື່ອນັ້ນ ພະບາດເຈົ້າ ເມືອງໃຫ່ຍຕານີ

ພະກໍ່ ໄຂວາຈາ ຕໍ່ຂຸນຜູ້ແຂງກ້າ

ເຮົາຫາກ ມີສິນຈ້າງ ຫລາຍເມືອງມາສ່ວຍ ຈິງແລ້ວ

ດ້ານແຕ່ ເສຍທໍ່ນີ້ ຊິມາຮ້ອນຮ່ອນໃດ ນີ້ເດ

+ ທຽມດັ່ງ ຝູງພໍ່ຄ້າ ໄປທ່ຽວຫລາຍເມືອງ

ຄັນວ່າ ເສຍທຶນເຂົາ ກໍ່ເລົ່າຫາເອົາຫນ້າ

ຄັນວ່າ ຫາ ເອົາໄດ້ ເປັນທຶນສືບຕໍ່ ໄປນັ້ນ

ບໍ່ທ່ອນຄິດຫລາບໃບ້ ກົວຢ້ານຢ່ອນຍອມ ແຫ້ດາຍ

+ ຄ້ອມວ່າ ພະກ່າວແລ້ວ ເຂົາເລີກລາເມືອ

ໃຜກໍ່ ແຍງເຄຫັງ ຢູ່ຊົ້ມເມຍແກ້ວ

ເຂົາກໍ່ບໍ່ ມີຄວາມຮ້ອນ ອັນໃດຈັກສິ່ງ

ຍູທ່າງ ທຽວທ່ອງຄ້າ ຂາຍລ້ຽງຊີບຊີວັງ ຫັ້ນແລ້ວ

## 16– ຕົວະຊຽງຍາບດົມຕົດ

+ ບັດນີ້ ຈັກກ່າວເຖິງ ທ່ອນທ້າວ ຜູ້ຊື່ຊຽງຍານ ກ່ອນແລ້ວ

ມັນກໍ່ເນົາ ເມືອງໄກ ລູກພະຍາເມືອງເຈົ້າ

ທີ່ວ່າ ຢູ່ຝ່າຍກ້ຳ ຄຸງຄາແມ່ນ້ຳໃຫ່ຍ

ເນົາປາຍເມືອງ ທະວາດີໃຫ່ຍກ້ວາງ ທັງຄ້າຍຊ່າລີ

+ ເຂົາກໍ່ ລືຊື່ທ້າວ ພະຫຍາມາກຊຽງຍານ

ໃນນິຄົມ ຄາເມ ແມ່ນບໍ່ມີໃຜສູ້
ເຊັ່ງຊ່າ ໄປເຕັມດ້າວ ຊຽງຍານເຈົ້າບ່າວ
ໃນໂລກນີ້ ບໍ່ກົວຢານຢ່ອນໃຜ
\+ ຊາດທີ່ໂລກລຸ່ມນີ້ ໃຜບໍ່ລື່ນຫາງຜະຫຍາ ໄດ້ແລ້ວ
ນອກຈາກ ອິນລົງມາ ຊ່ວຍເຂົາປະສົງແກ້
ແຕ່ນັ້ນ ຊຽງຍານໄດ້ ຍິນຄຳເຂົາກ່າວ
ຂ່າວວ່າ ຊຽງຫມ້ຽງເຈົ້າ ຜະຫຍາກາລື່ນຄົນ ແທ້ດາຍ
\+ ຜັດແຕ່ ໃນພາກພື້ນ ເທົ້າທົ່ວເມືອງຄົນ ເຮົານີ້
ບໍ່ອາດ ມີຄົນໃດ ຊິເທົ່າທຽມຊຽງຫມ້ຽງ
ເຈົ້າເອີຍ
ແຕ່ນັ້ນ ຊຽງຍານແຄ້ນ ສະຫາວໃຈອ້າງອວດ
ຊຽງຫມ້ຽງບໍ່ທ່ອນມີຜະຫຍາເກັ່ງກາ ທໍ່ປາຍລີ້ນແຕ່ງກູ ດອກນາ
\+ ແຕ່ນັ້ນ ມັນກໍ່ຕິດໃສ່ບັ້ງ ຫລາຍເທື່ອໂຮມກັນ
ແລ້ວເລົ່າ ແປງໄລອັດ ບີບສະໂນຕັນໄວ້
ມັນກໍ່ ທຳພຽນແທ້ ຕິດອັ້ງຫລາຍເທື່ອ ເລີງແລ້ວ
ຄຽດວ່າ ເຂົາກ່າວເວົ້າ ວ່າຊຽງຫມ້ຽງລື່ນຕົວ ນັ້ນແລ້ວ
\+ ບັດນີ້ ກູຈັກເມືອພົບຕົວຊຽງຫມ້ຽງ ລອງເບິ່ງຜະຫຍາມັນ
ຕາງໃຫ້ ເຫັນຄວາມຈິງ ຊົ່ວດີຫລືຮ້າຍ
ຕັ້ງແຕ່ ກົງແຄນດ້າວ ຄາເມບ້ານນອກ ເຮົານີ້
ໃຜໄປ່ ທັນລື່ນຖ້ອຍ ຜະຫຍານ້ອຍແຕ່ງກູ ດອກນາ
\+ ບັດນີ້ ກູຈັກເອົາບັ້ງຕິດບັ້ງນີ້ ເປັນຂອງຝາກໃຫ້ມັນເອົາ
ກ່ອນແລ້ວ

ໃຫ້ມັນ ເອົາໄປດົມ ເບິ່ງດູໃຫ້ເຫັນແຈ້ງ
ແຕ່ນັ້ນ ຊຽງຍານກໍ່ພາຍເອົາບັ້ງ ຕິດໄປຮອດຮີບ
ບໍ່ເຖິງ ຄາວຂອບນີ້ ໄປຟ້າວຮອດເມືອງ
+ ແຕ່ນັ້ນ ຊຽງຍານເລາະລຽບເຂົ້າ ໄປທ່ຽວໃນວຽງ
ໂລດບໍ່ເຫັນເຮືອນຊານ ຊຽງຫມັ້ນຽງເນົາທີ່ໃດແທ້
ມັນຈຶ່ງ ຖາມເຫນືອໃຕ້ ເມືອເຫນືອຫມົດທົ່ວ ເມືອງ
ແລ້ວ
ຊຽງຍານ ຈຶ່ງໄປພົບພໍ້ ຊຽງຫມັ້ນຽງຢູ່ເຮືອນ
+ ເມື່ອນັ້ນ ຊຽງຍານຕ້ານ ຖະແຫລງກ່າວກອນຖາມ
ເຈົ້າຮູ້ເຫັນເຮືອນໃດ ແມ່ນເຮືອນຊຽງຫມັ້ນຽງ
ອິດຄ່ອຍ ວາຈາຕ້ານ ໄຂຄຳຊີ້ບອກ ອື່ຮຽມແມ
ອັນວ່າ ລູມແຈ່ມເຈົ້າ ຕົວຂ້ອຍບໍ່ລືມ ດອກນາ
+ ເມື່ອນັ້ນ ຊຽງຫມັ້ນຽງຮັບພາກຕ້ານ ຂານຕອບ ຊຽງຍານ
ຈັກວ່າ ເຄືອງໃຈສັງ ຈຶ່ງຖາມຫາຫ້າວ ນັ້ນເດ
ແຕ່ນັ້ນ ຊຽງຍານຕ້ານ ຖະແຫລງກອນຊໍ້າກ່າວ
ເພິ່ນວ່າ ມັນມີພະຫຍາລຶດລ້ຳ ດີແທ້ກໍ່ຢາກເຫັນ ເຈົ້າເອີຍ
+ ຂ້ອຍກໍ່ ຫາກຕິດໃສ່ບັ້ງ ມາແຕ່ເຄເມ ພຸ້ນດາຍ
ຄັນວ່າ ມາເຫັນຊຽງ ຊິໃຫ້ດົມຕິດແທ້
ຄັນວ່າ ມັນຫາກໄດ້ດົມຕິດແລ້ວ ພະຫຍາມັນຊິຕົກຜ່ອນ
ເອົາກໍ່ຫາກລືຊ່າຍ້ອງ ເມືອງພຸ້ນປະເທດໄກ
ເຈົ້າເອີຍ
+ ຂ້ອຍກໍ່ ອູ້ມຫອບບັ້ງ ຕິດດ່ວນເດີນມາ

ຫວັງຊິເອົາ ມາວາງ ມອບຕົວຊຽງໝ້ຽງ
ບໍ່ຄວນ ທີ່ເອົາມັນໃຫ້ ເປັນສັກຂີດອນເພື່ອນ
ເພື່ອວ່າ ຄົນຂີ້ຮ້າຍ ພະຫຍາຫລູ້ຍລ່ອຍເສຍ ເຈົ້າເອີຍ

+ ແຕນັ້ນ ຊຽງໝ້ຽງຕ້ານຕອບຖ້ອຍ ຮັບພາກຊຽງຍານ
ອັນວ່າ ເຮືອນທ່ານຊຽງ ຢູ່ໃນເມືອງ ຊື່ມີເຮົາຊີ້
ຜັດແຕ່ ເຈົ້າໄດ້ໜີໄກບ້ານ ເຫິງນານເຈຍລະຈາກ ມານີ້
ນານປານໃດ ຈຶ່ງໄດ້ ມາພໍ້ຮອດເຮົາ ທ່ານເອີຍ

+ ແຕນັ້ນ ຊຽງຍານຟັງພາກຖ້ອຍ ຊຽງໝ້ຽງກ່າວຄຳຖາມ
ຊຽງຍານ ຂານຕອບມັນ ວ່າແປດຄືນມາແລ້ວ
ຊຽງວ່າ ປານນີ້ຕົດໃນບັ້ງ ມັນຊິເຫີຍຫາຍກິ່ນ ເສຍແລ້ວ
ອົດໃຫ້ ເຈົ້າບ່າວຊ້ອຍ ໄຂບັ້ງອອກດົມ ກ່ອນທ້ອນ

+ ຄັນວ່າ ມັນຫາກເຫີຍສ້ຽງແທ້ ເຮົາຊິຕົດຕື່ມແຖມລົງ
ຊຽງເອີຍ
ເອົາໃຫ້ ມັນທະວີຄວາມເໝັນ ເພື່ອໃຫ້ມັນດົມໄດ້
ແຕນັ້ນ ຊຽງຍານຟ້າວ ໄຂດູດົມກິ່ນ ຕົດນັ້ນ
ຕົດກໍ່ຍັງ ເໝັນຂື້ນກົ້ວ ເຕັມບັ້ງບໍ່ເຫີຍ ເຈົ້າເອີຍ

+ ຊຽງຍານ ກໍ່ເລົ່າຫົບດັງແລ້ວ ພັດອັດແຈບຄືນດີ
ແຕນັ້ນ ຊຽງໝ້ຽງເລີຍວາຈາ ດ່າຫຍັບວ່າມັນຈາ
ທັງເລົ່າ ຫົວຂ້ອນໜ້າ ຍໍມືຊີ້ວ່ອນ
ມຶງນີ້ ເໝືອນດັ່ງສັດຖ່ອຍຮ້າຍ ນານເຊື້ອຊາດໝາ ແໜ່

+ ຂວດວ່າ ພະຫຍາດີເລີດລ້ຳ ສົ່ງມາເລົ່າດົມຕົດ ມຶງເດ
ວ່າຈັກຕົດມາ ຍົວະຕົວຊຽງໝ້ຽງ

ອັດສະຈັນໃຈໂອ້ ໂຕມາດົນເສຍກ່ອນ ມິງເອີຍ

ສັງມາ ເລົາຮິບຟ້າວ ດົນແທ້ກ່ອນບັກຊຽງ ນັ້ນເດ

\+ ພູກໍ່ຊື່ວ່າ ນ້ອງພະບາດເຈົ້າ ເມືອງຊື່ທະວາດີ(1)ຈິງແລ້ວ

ລືຊື່ ເຊີງພະຫຍາ ຊື່ວ່າຕົວຊຽງຫມັ້ຽງ

ຄັນວ່າ ໃຜຫາກຫລຽວເຫັນຫນ້າ ໃຫ້ຍໍມືສຸດສອກ ບັກຊຽງເອີຍ

ທັງເລົາ ແປະແຜ່ນພື້ນ ຕີນຂ້ອຍໃສ່ຫົວ ແທ້ເນີ

\+ ສູຢ່າ ໄດ້ມາອວດອ້າງ ລອງເບິ່ງພະຫຍາກູ ເທາະເນີ

ແມ່ນວ່າ ສູຫາກມາພໍແສນ ໝື່ນຄົນກໍ່ດາຍຫ້ອນ

ແມ່ນວ່າ ສູຊິໄປວອນໄຫວ້ ເອົາມາຫມົດທີບ ກໍ່ດີຫ້ອນ

ໃຫ້ມາພັນຕໍ່ຕັ້ງ ກູກໍ່ແພ້ດັ່ງດຽວ ນັ້ນແລ້ວ

\+ ອັນແຕ່ ໃຕ້ລຸ່ມຟ້າ ໂລກລຸ່ມເມືອງຄົນ ເຮົານີ້

ໃຜຢ່າມາ ພາໂລ ຫລອກກູໃຫ້ຂາຍຫນ້າ ເທາະເນີ

ຢຽວວ່າ ອິນພົມພຸ້ນ ລົງມາພາຍໂພດ ສູນັ້ນ

ສູກໍ່ຈຶ່ງຫວັງວ່າ ຈັກໄດ້ພາບແພ້ ພະຫຍານ້ອຍແຫ່ງກູ ທ່ານເອີຍ

\+ ແຕ່ວ່າ ຕິດໃສ່ບັ້ງເປັນຂອງມາຝາກ ບອກທໍ່ນັ້ນ ມິງຟ້າວຮີບ
ດົນ ນັ້ນເດ

ກູນີ້ ຕັ້ງຫາກ ແມ່ນຊຽງຫມັ້ຽງລືຊາເຊີງ ໃຜຢ່າມາລວງລີ້
ເທາະເນີ

ສູນີ້ ຕັ້ງຫາກແມ່ນຊາວຈີນເບື້ອງ ຄາເມບ້ານນອກ ພາຍພຸ້ນ

ແສນວ່າ ພະຫຍາດີມາກລົ້ນ ບໍ່ພໍ້ສຽງແຫ່ງກູ ດອກນາ

---

(1) ທະວາດີ ແມ່ນທະວາລາວະດີ (ຄືເມືອງທະວາລາວະດີ)

+ ຕັ້ງວ່າ ບໍ່ມີຖ່ອງຫລື້ມ    ພະຫຍາແຫ່ງຕົວກູ ດອກນາ
ອັນວ່າ ໃຫ້ສົມກະບວນມຶງ    ແມ່ນແຍງແວ່ນທີຫມາພຸ້ນ
ສັງວ່າ ມາຫລົງອ້າງ    ວ່າຕົນເປັນຄົນເກົ່ງ
ອັນວ່າ ຄົນໂງຈ້າ    ແນວນີ້ບໍ່ຢາກເຫັນ ດອກນາ
+ ແຕ່ນັ້ນ ຊຽງຍານອາງຖົ້ມບັ້ງ ປົບແລ່ນພະລັນຫນີ
ເຈົ້າເອີຍ

ຄອບວ່າ ຄວາມອາຍຫລາຍ    ບໍ່ອາດຫລຽວໃຫ້ເຫັນຫນ້າ
ມັນກໍ່ເລົາ ຂຽວວັນດັ້ນ    ຂຽວຄືນເມືອຮອດ
ບໍ່ໄດ້ ຢຸດຢູ່ຢັ້ງ    ເຖິງບ້ານກໍ່ຈຶ່ງເຊົາ ແທ້ດາຍ
+ ຄັນວ່າ ຊຽງເມືອຮອດບ້ານ ລີ້ຢູ່ປານຕາຍ
ເພາະວ່າ ຄໍາອາຍເຫລືອ    ແຜ່ນດິນຄຸງຟ້າ
ມັນຫາກ ເສຍໄຊ້ອາຍ    ຊຽງຍານຫນ້າຫລ່າ ເສຍແລ້ວ
ອັນວ່າ ຝູງຫມູ່ສາວສໍ່າຊູ້    ໂຮມເຣື້ອງກ່າວໃຍ
+ ຝູງຫມູ່ ມິດສະຫາຍຫມູ່ນັ້ນ    ມາຮ່ວມໂຮມຖາມ
ເປັນໃດມຶງ    ຈຶ່ງແລ່ນມາຫົງຟ້າວ
ມັນກໍ່ທໍ່ ຊຳງຳຫນ້າ    ບໍ່ຈາດອນລີ້ຢູ່
ຕັ້ງວ່າ ບໍ່ຫລຽວເບິ່ງຫນ້າ    ເຂົາໄດ້ ເພື່ອອາຍ ແທ້ແລ້ວ

## 17– ຊຽງໝ້ຽງທວາຍວ່າພະຍາຈັກຕາຍໃນເຈັດວັນ

+ ບັດນີ້ ຈັກກ່າວເຖິງ ພະບາດເຈົ້າ ຕົນຊື່ພະຍາເມືອງ
ກ່ອນແລ້ວ

ເຈົ້າກໍ່ ໄວ້ສິ້ນສາຍ ຊຳພັດເຈັບຫົວທ້ອງ
ແຕ່ນັ້ນ ເທວີພອນ ນາງສະໜົມຟ້າວຟັ່ງ
ເອົາກໍ່ ໄຫວ້ສັງຄະສູດເຂົ້າ ບູຊາເຈົ້າປີ້ນປົວ
+ ທັງເລົ່າ ເອົາໝໍຢາໃຫຍ່ນ້ອຍ ມາຊ່ວຍເປົ່າຢາ
ເຂົາຮັບເອົາ ຄຳເຊີນ ກໍ່ດ່ວນມາທັງຟ້າວ
ທັງໝໍດູ ມໍພອນ ໝໍທວາຍພົມມະຊາດ
ເອົາກໍ່ ເອົາແຜ່ນຜ້າ ທັງແປ້ນຮັບມາ
+ ເອົາກໍ່ ດູລືກຕັ້ງ ປີເກີດສັງຂານ
ເຂົາວ່າ ລາຊາພະ ເກີດປີເມືອງເປົ້າ
ພິຈັກ ນັບຕາມຖານ ໂຫດາໂລງຢູ່ ຈິງແລ້ວ
ກາດມາ ໃນແຜ່ນຜ້າ ປີນີ້ເຄາະມີ ເຈົ້າເອີຍ
+ ແລ້ວເລົ່າ ເພີຍແຜ່ນຜ້າ ຕົວເພິ່ງມາດູ
ເຂົາວ່າ ອິງພະຍາຫລວງ ເພິ່ງແມວປີນີ້
ຕັ້ງວ່າ ເຄາະເຂັນຕົວຮ້າຍ ມາພະຈົນບັງບຽດ ຈິງແລ້ວ
ແຕ່ວ່າ ພະຫັດຊັກຈ່ອງໄວ້ ບໍ່ພໍຮ້າຍທໍ່ໃດ ·
+ ໃຫ້ຄ່ອຍ ທາຊອງແກ້ ບູຊາສືບຊາຕາ
ອັນວ່າ ມະຫາລາຊາ ຈະຄ່ອຍຫາຍຫວາງໄວ້
ແຕ່ນັ້ນ ຊຽງໝັ້ນຽງ ເຂົ້າເບິ່ງຢ້ຽມ ຢາມພະຍາຫລິງລ່ຳ
ກໍ່ເລົ່າ ຄຳຄີງພະບາດເຈົ້າ ແລ້ວເລີຍເວົ້າຕ່າງເຂົາ
+ ອັນວ່າ ພະລາຊາເຈົ້າ ຈະເຖິງແກ່ມໍລະນາ ຈິງແລ້ວ
ຈະຕາຍ ໃນເຈັດວັນ ທ່ຽງຈິງບໍ່ມີພົ້ນ
ຝູງໝູ່ ຂຸນໃຫຍ່ເຈົ້າ ຟັງຄວາມທ້າວກ່າວ

ເຂົາຈຶ່ງ ເມືອຄອບເຈົ້າ ເທວີແກ້ວແມ່ເມືອງ ແທ້ແລ້ວ

+ ບັດນີ້ ພະບາດເຈົ້າ ອົງອາດລາຊາ ເຮົານັ້ນ

ຊຽງໝ້ຽງ ໄປຢາມມາ ວ່າຊິຕາຍຈິງແທ້

ແມ່ນວ່າ ລາຊາເຈົ້າ ຈັກຕາຍບໍ່ມີອາດ ຄາແລ້ວ

ໃນທີ່ ເຈັດຂວບນີ້ ວັນແທ້ທ່ຽງຈິງ ວ່າດາຍ

+ ເມື່ອນັ້ນ ມະເຫສີແກ່ນເຫງົ້າ ເຕັ້ນຕື່ນຕົກໃຈ

ຢ້ານວ່າ ອົງລາຊາ ຊິມອດມໍລະນາແທ້

ນາງກໍ່ ກົວເກ້ງຢ້ານ ພົວຂ້ອນຕາຍຈາກ ຕົວນັ້ນ

ຫົວເລົ່າ ຈິດຈອດຟ້ົງ ເປັນບ້າວົ່ງເວ ແທ້ແລ້ວ

+ ນາງກໍ່ ໄຫ້ເຮ້ງຮອນ ຍົມມະນາດເຮຮົນ

ເລີຍເລົ່າ ຊົມລະຫານອງ ຫລົ່ງລົງຍົມຍ້ອຍ

ກັບທັງ ສາວສະໜົມໄຫ້ ຊົມລະຫານອງເນດ

ເຂົາກໍ່ ຍ່າວງໄຫ້ . ດອມເຈົ້າຊູຄົນ ທັ້ນແລ້ວ

+ ເຂົາກໍ່ ຂົນເຄື່ອງເຈົ້າ ເທອອກລົງສາງ

ທານໃຫ້ ເນນທັງສົງ ຊູ້ວັນບໍ່ມີຢັ້ງ

ຂໍໃຫ້ ບຸນນຳຄ້ຳ ຊູອົງພະບາດ ແດ່ທ້ອນ

ໄຫ້ວອນ ທັງທໍລະນີຊ່ວຍຄ້ຳ ຊູ້ທາວໃຫ້ປອດໄພ

+ ຂໍໃຫ້ ຍືນຍົງໝັ້ນ ຮ້ອຍຂວບພັນວັດສາ

ແລ້ວຈຶ່ງ ມໍລະນາຕາຍ ກໍ່ບໍ່ມີຄວາມເວົ້າ

ແຕ່ນັ້ນ ລາຊາເຈົ້າ ເລີຍຫາຍເສຍສວ່າງ

ພະກໍ່ລຸກ ຍ່າງໄດ້ ສະບາຍເນື້ອລວດດີ

+ ແຕ່ນັ້ນ ພະຈຶ່ງບອກອາດໃຫ້ ຝູງໝູ່ພາຍໃນ

ສູຣິບ ໄປທັນຊຽງ ກ່ອນມາດຽວນີ້
ເຮົາຈັກຖາມ ດູແທ້ ດອມມັນຄວາມໜຶ່ງ
ຊຽງກໍໄປ ອາດຮູ້ ຮຽນໄດ້ແຕ່ທີ່ໃດ ນັ້ນເດ
+ ເມື່ອນັ້ນ ເຂົາກໍໂດຍອາດເຈົ້າ ເຣວຣິບພະລັນໄປ
ເຖິງເຮືອນຊານ ກໍກ່າວຈາຊຽງໝັ້ນຽວ
ບັດນີ້ ຈອມຫົວເຈົ້າ ທັນຊຽງເມືອຣິບ
ວ່າໃຫ້ ໄປພ່ຳພ້ອມ ຜູ້ຂ້າຍ່ານານ ວ່າດາຍ
ແຕ່ນັ້ນ ຊຽງຣີບຟ້າວ ໂດຍອາດເມືອພະລັນ
ເຖິງທີ່ ລາຊາພະ ຍອດເມືອງຫູນໄຫວ້
ອັນວ່າ ຈອມຫົວໃຊ້ ຄືນໄປທັນຣິບ ພາຍພຸ້ນ
ບັດນີ້ ຂ້າພະບາດມາຮອດແລ້ວ ຊິຈ້າຖອຍເຍື່ອງໃດ ພະເອີຍ
+ ເມື່ອນັ້ນ ພະບາດເຈົ້າ ຖາມໂຈດຍັງຊຽງ
ວາຈາໄຂ ຊູ້ອັນເອົາຕ້ານ
ສັນໃດແທ້ ເວລາເຮົາພະອິງປ່ອຍ
ວັນນັ້ນ ວ່າຈັກຕາຍຈາກບ້ານ ເມືອງກ້ວາງບໍ່ສິງ ວ່າດາຍ
+ ທ່ານຫາກ ພັດບອກໄວ້ ໃນເຂດເຈັດວັນ ຈິງແລ້ວ
ທ່ານວ່າ ເຮົາຈັກຕາຍ ທ່ຽງຈິງວັນນັ້ນ
ບັດນີ້ ກໍຫາກກາຍເຈັດວັນໄດ້ ສາມເດືອນວັນອອກ ມານີ້
ເຮົາກໍ ຫາກຫາຍ ສ່ວາງໄຂ້ ໃນເນື້ອຢູ່ສະບາຍ ແລ້ວເດ
+ ເຮົາກໍ ຢູ່ທ່າງທິງແທ່ນແກ້ວ ສະເຫວີຍລາດເມືອງຂວາງ
ແທ້ດາຍ
ກໍບໍ່ເຫັນ ເຮົາຕາຍ ດັ່ງຊຽງທວາຍໄວ້

ທ່ານນັ້ນ ຕັ້ງວ່າຫວາຍຄຳຮ້າຍ ເອົາເຂັນບັກໃສ່ ເຮົານໍ
ນິງນີ້ ລົນຖ່ອຍຮ້າຍ ບໍ່ມີຮູ້ຮ່ອມຄຸນ ແທ້ດາຍ
+ ແຕ່ນັ້ນ ຊຽງຕານຕອບຖ້ອຍ ຮັບພາກເລັງໂຍ
ຊາດທີ່ ເປັນຄົນໃນສົງສານ ບໍ່ຫ່ອນກາຍໜີໄດ້
ຕັ້ງແຕ່ວັນທິດ ໄປເຖິງເທົ້າ ວັນເສົາເຖິງຮອບ ມັນແລ້ວ
ອັນວ່າ ທີແປດ ແລະ ເກົ້າ ເມືອໜ້າບໍ່ມີ ພະເອີຍ
+ ໃຜຈັກໜີ ຫລີກໄດ້ ພົ້ນເຂດເຈັດວັນ
ແມ່ນວ່າ ອິນພົມພະ ກໍ່ຍ່ອມຕາຍແນວນັ້ນ
ແມ່ນວ່າ ສັບພັນຍູເຈົ້າ ນິລະພານເມື່ອກ່ອນ ກໍ່ດາຍແລ້ວ
ເຈົ້າກໍ່ບໍ່ໄດ້ ຫລີກເວັ້ນ ເຈັດວັນແທ້ທ່ຽງຈິງ ພະເອີຍ
+ ກໍ່ຫາກວັນທິດແລ້ວ ຊ້ຳພັດເລົ່າວັນຈັນ
ແລ້ວເຖິງວັນອັງຄານ ພຸດໂທເມືອໜ້າ
ວັນພະຫັດແລ້ວ ສຸກເສົາພັດມາຮອດ
ວົນຢູ່ໃນຂອບນັ້ນ ໄປເລື້ອຍບໍ່ປ່ຽນແປງ ພະເອີຍ
+ ໃຜບໍ່ຫ່ອນ ອອກຈາກເຈັດນັ້ນ ຕິດຕໍ່ເຖິງພັນ ໄດ້ແລ້ວ
ຮີດຫາກວາງ ລົງຕັດ ອອກເປັນແນວນັ້ນ
ຂໍພະອົງຈຳໄວ້ ໃນໃຈຖ້ອນຖີ່
ຢ່າໃຫ້ ກາຍຮີດບ້ານ ປະຖິມເຖົ້າຊົ່ວລາງ ພະເອີຍ
+ ແຕ່ນັ້ນ ພະຍາຄຶດຄຽດພົ້ນ ແລ້ວເລົ່າເລີຍຫົວ
ພີຈັກ ຕາມໂກທາ ແມ່ນຂ້າເສຍຈິງແທ້
ພີວ່າ ຄຶດຄະນິງດູແທ້ ພັດຄືຄວາມຊຽງວ່າ
ເຮົາກໍ່ ຈິ່ງຫາຍໂກດແຄ້ນ ໃຫ້ຊຽງແລ້ວບໍ່ວ່າສັງ ດອກເນີ

ພິມຄັ້ງທີ່ ໑

ຈຳນວນ ໑໐.໐໐໐ ຫົວ

ພິມແລ້ວ ໒໐/໕/໑໙໘໙

ສະຫງວນລິຂະສິດ

ພິມທີ່ ໂຮງພິມແຫ່ງລັດ